ຫຸມພັນ ຣັດຕະນະວົງ

ຈາກບົດແປຂອງ ຝຣັ່ງຊິສ ກາຣເຍ
Billngue

ທ່ານ ເກຣິດ ວັນວຸສຕົຟ ແລະ ຄະນະມາວຽງຈັນ 1641- 44

Voyage de Van Wusthof au Laos et ce qui s'y est Passé jusqu' en 1644

ສະຖາບັນຄົ້ນຄ້ວາ ວັດທະນະທຳ
1997
ປັບປຸງ ແກ້ຄຳຜິດ ພິມເພີ່ມໂດຍ ເຈົ້າຂອງຜູ້ແປ
2006

ທຸມພັນ ຣັດຕະນະວົງ

ຈາກບົດແປຂອງ ຝຣັ່ງຊີສ ກາຣເຍ
Billngue

ທ່ານ ເກຣິດ ວັນວຸສຕົຟ ແລະ ຄະນະມາວຽງຈັນ 1641- 44

Voyage de Van Wusthof au Laos et ce qui s'y est Passé jusqu'en 1644

ສະຖາບັນຄົ້ນຄ້ວາ ວັດທະນະທຳ
1997
ປັບປຸງ ແກ້ຄຳຜິດ ພິມເພີ່ມໂດຍ ເຈົ້າຂອງຜູ້ແປ
2006

ຫ້າມຈັດພິມຄືນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຜູ້ແປ

ຄະນະຈັດທຳ:

ແປແລະຮຽບຮຽງ ຫຸມພັນ ຣັດຕະນະວົງ

ຈັດໜ້າ ບົວໄລ ເພັງແສງຄຳ

ສະໜັບສະໜູນການແປ ແລະ ພິມ ໂດຍ:

THE ROYAL NETHERLANDS AMBASSY

ຄຳນຳ

☆ ມີເອກະສານໜ້ອຍທີ່ສຸດ ທີ່ຂຽນ ແລະ ບັນທຶກເຫດການ ກ່ຽວກັບປະເທດລາວໃນຍຸກຂອງປະຫວັດສາດ. ນອກຈາກຕຳນານຂອງລາວເຮົາ ເຊິ່ງມັກຂຽນໄວ້ໄປໃນທຳນອງນິຍາຍ ຫລື ໃນຮູບເຊື່ອງຊ້ອນເຫດການໄວ້ ໃນວັນນະກຳແລ້ວ ກໍມີເອກະສານປະເທດເພື່ອນບ້ານໃກ້ຄຽງ ເປັນຕົ້ນແມ່ນປະເທດຈີນ ເຊິ່ງກໍສະທ້ອນໃຫ້ເຫັນຄວາມສຳພັນ ລະຫວ່າງຣາຊະວົງລາວກັບ ຈັກກະພັດຈີນເປັນສ່ວນໃຫຍ່. ສ່ວນເອກະສານຕາເວັນຕົກນັ້ນ ເນື່ອງຈາກວ່າ ພູມີປະເທດລາວຕັ້ງຢູ່ໃຈກາງຂອງອະນຸທະວີບ ອ້ອມຮອບດ້ວຍ ພູຜາປ່າດົງອັນໜາຕຶບ ແລະ ທຸລະກັນດານ ຍາກທີ່ຈະມາຮອດມາເຖິງໄດ້ ຈຶ່ງມີຊາວຕາເວັນຕົກໜ້ອຍຄົນທີ່ໄດ້ມາເຖິງແລະໄດ້ບັນທຶກເຫດການຕ່າງໆ ໄວ້. ໃນຈຳນວນຊາວຕາເວັນຕົກ ຜູ້ສຳຄັນທີ່ໄດ້ມາເຖິງເມືອງລາວສະໄໝກາງ ຄື ສະໄໝທີ່ປະເທດລ້ານຊ້າງມີຄວາມຮຸ່ງເຮືອງຂັ້ນສູງສຸດນັ້ນ ກໍມີ ເຊັ່ນ ຄະນະເຜີຍແຜ່ສາສະໜາເຢຊູຂອງຄຸນພໍ່ ເລເຣັຽ ສະໄໝພະເຈົ້າສຸລິຍະວົງສາ ຄື ໃນຕົ້ນຊຸມປີ 1640. ຄຸນພໍ່ເລເຣັຽ ໄດ້ບັນທຶກຄວາມກວ້າງໃຫຍ່ ຂອງເຂດນ້ຳແດນດິນປະເທດລາວ ແລະ ສະພາບທາງວັດທະນະທຳສັງຄົມ ລາວໄວ້ ເປັນຂໍ້ມູນທີ່ຫາຍາກ. ບັນທຶກຂອງທ່ານນັ້ນ ເຊື່ອກັນວ່າ ແມ່ນຄຸນພໍ່ ມາຣີນີໄດ້ເອົາມາຊຳຣະແລ້ວຈັດພິມເປັນປຶ້ມ ເຊິ່ງຂ້າພະເຈົ້າກໍໄດ້ແປ ແລະ ພິມເປັນປຶ້ມອອກສູ່ສາຍຕາຂອງບັນດາທ່ານນັກຄົ້ນຄວ້າ ແລະ ນັກອ່ານໄປ ແລ້ວ ເປັນ 2 ພາສາ ຄື ລາວ ແລະ ຝຣັ່ງບູຮານ.

ເອກະສານທີ່ສອງ ທີ່ມີຄວາມສຳຄັນອີກສະບັບໜຶ່ງກໍແມ່ນບັນທຶກການ ເດີນທາງຂອງທ່ານ ເກຣິດ ວັນວຸດສະຕົບ ທູດຂອງຜູ້ວາຣາຊະການໃຫຍ່ອານານິຄົມໂຮນລັງ ທັງເປັນພໍ່ຄ້າ ເຊິ່ງໄດ້ມາເຖິງນະຄອນວຽງຈັນໃນຕົ້ນຊຸມປີ 1640 ເຊັ່ນກັນ. ຈຸດພິເສດຂອງບັນທຶກການເດີນທາງຂອງທ່ານຜູ້ນີ້ ເຊິ່ງເນື່ອງຈາກວ່າ ທ່ານເປັນພໍ່ຄ້າ ທ່ານກໍໄດ້ມຸ່ງໃຫ້ຂໍ້ມູນທີ່ພົວພັນທາງດ້ານເສດຖະກິດ ການຄ້າຫລາຍກວ່າສິ່ງອື່ນໃດ. ເມື່ອພວກເຮົາຫາກເອົາສອງເອກະສານ

ນີ້ ມາປະສົມປະສານເຂົ້າກັນແລ້ວ ພວກເຮົາກໍຈະໄດ້ພາບເມືອງລາວໃນສະໄຫມພະເຈົ້າສຸຣິຍະວົງສາ ມະຫາຣາຊ ຂອງລາວດ້ານຕ່າງໆລະອຽດ ແລະແມ່ນຢຳພໍສົມຄວນ.

ເອກະສານບັນທຶກການເດີນທາງຂອງວັນວຸດສະຕົບແລະຂອງຄຸນພໍ່ມາຣີນີ ນີ້ ຍັງມີຄວາມສຳຄັນຍິ່ງອັນໜຶ່ງ ທາງດ້ານການເມືອງແລະຍຸດທະສາດທາງເສດຖະກິດຂອງລາວເວລານັ້ນເຊັ່ນ:

1. ຣາຊະສຳນັກລາວ ເອົາການຄ້າຂາຍ ແລະ ການຄ້າຜ່ານແດນ ເປັນຍຸດທະສາດຫລັກ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ປະເທດຊາດ ເຊັ່ນວ່າ ຣາຊະສຳນັກຈະເປັນຜູ້ກຳແລະກວດຂັນການຄ້າໂດຍກົງກະທັ່ງແກ່ນຫມາກຍານກໍ່ບໍ່ອະນຸຍາດໃຫ້ນຳເອົາອອກນອກປະເທດໄດ້.

2. ເມື່ອເຫັນວ່າການຄ້າພາຍນອກຂອງລາວຕ້ອງຜ່ານມືທີ່ສອງ ເປັນຕົ້ນແມ່ນສະຫຍາມ ແລະ ຖືກເອົາລັດເອົາປຽບລາວເກີນໄປແລ້ວ ຣາຊະສຳນັກລາວ ນອກຈາກຈະຫາທາງອອກທາງວຽດນາມ ເຊັ່ນ ເສັ້ນທາງຄຳເກີດ ຄຳມ່ວນ ນ້ຳນ້ອຍ ໄປຫາເຮືອງແຄ່ທາງພາກກາງຂອງວຽດນາມ ແລະ ທາງຈີນທາງພາກເໜືອດ້ວຍຂະບວນມ້າ ແລະງົວຕ່າງ ແລ້ວກໍມີນຳອອກທາງເຮືອຕາມລຳແມ່ນ້ຳຂອງລົງສູ່ຂະເຫມນ ເຊິ່ງນະທີ່ນັ້ນມີສະຖານີການຄ້າ ຂອງຊາວຕາເວນຕົກຕັ້ງປະຈຳຢູ່. ການທຳມາຄ້າຂາຍພຽງທີ່ນີ້ ຍັງເຫັນວ່າ ບໍ່ໄດ້ດັ່ງປະສົງ ແລະ ກໍບໍ່ສາມາດຍາດແຍ່ງແຂ່ງຂັນກັບບັນດາປະເທດອ້ອມຂ້າງທີ່ຕິດຈອດກັບທະເລໄດ້ ດັ່ງນັ້ນ ເພື່ອຈະລົບຈຸດເສັຽປຽບທັງຫມົດ ໃນດ້ານການຄ້າຕ່າງປະເທດຂອງລາວອອກໃຫ້ໄດ້ ຣາຊະສຳນັກລາວຈຶ່ງໄດ້ ພະຍາຍາມສ້າງສາຍສຳພັນ ກັບມະຫາອຳນາດການຄ້າຕາເວັນຕົກໂດຍກົງ ໂດຍໄດ້ສົ່ງທູດໄປເຖິງນະຄອນບາຕາເວັຽ (ຢາກັກຕາປັດຈຸບັນ) ເພື່ອພົບປະກັບເຈົ້າໜ້າທີ່ລະດັບສູງ ຂອງປະເທດໂຮນລັງ ແລ້ວກໍເຊີນຜູ້ຕາງໜ້າການຄ້າຂອງປະເທດດັ່ງກ່າວ ມາເພື່ອຜູກສາຍສຳພັນທາງດ້ານການຄ້າ ກໍຄືມິດຕະພາບອັນດີງາມລະຫວ່າງກັນ.

ກວານມົນທົບໄດ້ເປັນຫົວໜ້າພໍ່ຄ້າລາວຄະນະໜຶ່ງ ອອກເດີນທາງຈາກຊະເຫມນໃນເດືອນມີນາ 1641 ດ້ວຍສະເພົາທີ່ມີຊື່ວ່າ ໂອສຕ ກັບແປນ (Oost-Cappel)ຂອງໂຮນລັງ ບັງຄັບໂດຍນາຍເຮືອຜູ້ລືຊື່ ຜູ້ໜຶ່ງຊື່ ອາແບລ ຕັສມັນ ທີ່ໄດ້ມາຈອດທີ່ສະຖານີການຄ້າໂຮນລັງເອງທີ່ຊະເຫມນ ສະເພົາດັ່ງກ່າວມຸ້ງໜ້າໄປທາງທິດຕາເວັນຕົກ ແວ່ພັກຢູ່ນະຄອນປັດຕະນີ (ເຊິ່ງປັດຈຸບັນຢູ່ພາກໃຕ້ຂອງປະເທດໄທຍ) ແລ້ວຈຶ່ງເດີນທາງຕໍ່ໄປນະຄອນບາຕາເວັຽ(ປັດຈຸບັນເປັນຢາກັກຕາ) ແຫ່ງຈັກກະພົບໂຮນລັງ (ປັດຈຸບັນເປັນປະເທດອິນໂດເນເຊັຽ) ເມື່ອເຖິງນະຄອນບາຕາເວັຽແລ້ວ ພວກເພິ່ນໄດ້ຮັບການຕ້ອນຮັບຈາກທ່ານວັນດີເມນ ຜູ້ວ່າຣາຊະການໃຫຍ່ອານານິຄົມໂຮນລັງ. ທາງທູດຝ່າຍລາວ ໄດ້ເຊື້ອເຊີນໃຫ້ຝ່າຍໂຮນລັງສົ່ງທູດຜູ້ຕາງໜ້າ ຂອງໂຮນລັງໄປຢ້ຽມຢາມລາວ ແລະໄປຊື້ເອົາເຄື່ອງຄ້າຂອງຂາຍ ທີ່ມີຄຸນນະພາບໂດຍກົງທີ່ເມືອງລາວ. ພິເສດກ່ອນອື່ນ ຈະໄດ້ເຂົ້າໄປເຝົ້າ ພະມະຫາກະສັດລາວ ເພື່ອເຈລະຈາເປີກສາຄວາມເປັນໄປໄດ້ ໃນການສ້າງສາຍສຳພັນ ມິດຕະພາບ ແລະ ການຄ້າລະຫວ່າງກັນ.

ໃນທີ່ສຸດທາງຝ່າຍຜູ້ວ່າຣາຊະການໃຫຍ່ຂອງອານານິຄົມໂຮນລັງ ກໍໄດ້ຕົກລົງສົ່ງຄະນະທູດການຄ້າ ຖືສານ ແລະ ເຄື່ອງບັນນາການ ເດີນທາງມາຣາຊະນາຈັກລ້ານຊ້າງ ເພື່ອຜູກສຳພັນມິດຕະພາບແລະການຄ້າລະຫວ່າງກັນ. ທ່ານ ເກຣິດ ວັນວຸດສະຕົບ ຮອງຫົວໜ້າພໍ່ຄ້າ ໄດ້ຮັບການແຕ່ງຕັ້ງໃຫ້ນຳພາຄະນະມາເຝົ້າມະຫາກະສັດລາວທີ່ນະຄອນວຽງຈັນ.

ສານຈາກຜູ້ວາຣາຊະການໃຫຍ່ ຂອງອານານິຄົມສົ່ງມາເຝົ້າກະສັດລາວນັ້ນ ລົງວັນທີ 15 ມິຖຸນາ 1641 ແລະສະເພົາ ໂອສຕ໌ກັບແປນ ນຳເອົາຄະນະທູດລາວ ຖອດສະຫມໍອອກຈາກນະຄອນບາຕາເວັຽໃນມື້ດຽວກັນນັ້ນ ເພື່ອມຸ້ງໜ້າມາແວ່ເມືອງປັດຕະນີແລ້ວເດີນທາງມາຊະເຫມນ ເພື່ອຈະສືບຕໍ່ການເດີນທາງມາລາວ.

ການເດີນທາງຂອງທ່ານ ວັນວຸດສະຕົບ ທັງຂາຂຶ້ນແລະຂາກັບ ນັບທັງການກຽມການ ແລະ ການພັກເຊົາຢູ່ວຽງຈັນ ກິນເວລາຕັ້ງແຕ່ວັນທີ 17 / 7/

1641 - 24 /10/ 1642 ແຕ່ເປັນໜ້າເສັຽດາຍ ທີ່ຄວາມປະສົງອັນແນ່ວແນ່ ແລະ ສູງສົ່ງດັ່ງກ່າວຂອງປະເທດທັງສອງ ບໍ່ປະສົບຜົນຕາມມາຍ້ອນສາເຫດຕ່າງໆ ທີ່ບໍ່ເປັນທີ່ຈະແຈ້ງ.

ປຶ້ມຫົວນີ້ ຂ້າພະເຈົ້າໄດ້ໃຊ້ຂໍ້ມູນສະບັບທີ່ທ່ານ ຝຣັ່ງຊິສການເຍ ເປັນຜູ້ຊໍາລະຈັດພິມ. ມັນຍັງມີອີກສະບັບໜຶ່ງ ເຊິ່ງເຂົ້າໃຈວ່າ ຈະແປລະອຽດ ແລະ ໃໝ່ກວ່ານັ້ນ ຄືສະບັບຂອງສູນປະມວນເອກະສານ ແລະ ເຜີຍແຜ່ຂ່າວກ່ຽວກັບລາວຂອງຝະລັ່ງ. ເຊິ່ງແປ ແລະ ຊໍາລະໂດຍທ່ານ ຊ້ອງໂກຼດ ເລີໂຊນ 1993.

ຂ້າພະເຈົ້າຫວັງວ່າ ໂອກາດໜ້າຖ້າພໍເປັນໄປໄດ້ ຂ້າພະເຈົ້າຈະແປເພີ້ມຕື່ມ ເພື່ອພິມອອກສູ່ສາຍຕາຂອງບັນດາທ່ານ.

ວຽງຈັນ ວັນທີ 17 /3/ 1998

24 / VII

ທຸມພັນ ຣັດຕະນະວົງ

ຫ້າມຈຳໜ່າຍ

ການເດີນທາງທີ່ກວ້າງໄກ ສູ່ອານາຈັກກຳພູຊາ ແລະ ລາວ ຂອງຊາວໂຮນລັງ ແລະ ສິ່ງທີ່ເປັນມາຈົນເຖິງປີ 1644

◆ ນີ້ແມ່ນຫົວຂໍ້ຂອງພັບນ້ອຍຊາວຟລາມັງເຫລັ້ມໜຶ່ງ (ພິມອອກຈຳໜ່າຍໂດຍ ປີແອຣ ກັດເຕີລິນ ທີ່ ຮາຣແລມ ປີ 1669) ເຊິ່ງໃນນັ້ນໄດ້ເວົ້າເຖິງການເດີນທາງທີ່ມີຂຶ້ນປີ 1641 ຢູ່ໃນດິນແດນປະເທດລາວ ໂດຍ ທ່ານ ເຢ່ຣາກ ວັນວຸດສະຕົບ ພໍ່ຄ້າໃນບໍລິສັດຂອງແຄ້ວນອິນເດັຽອານານິຄົມປະເທດໂຮນລັງ. ການເດີນທາງດັ່ງກ່າວ ເຊິ່ງມຸ່ງເປົ້າໝາຍທາງການຄ້າແຕ່ຢ່າງດຽວນັ້ນ ໄດ້ເປັນການເດີນທາງຄັ້ງສຳຄັນກວ່າເພິ່ນ ໃນບັນດາການເດີນທາງຖ້ຽວຕ່າງໆທີ່ມີຂຶ້ນ ໃນສະຕະວັດທີ່ 17 ໃນດິນແດນສຸວັນນະພູມປະເທດ ແຕ່ເປັນໜ້າເສັຽດາຍ ທີ່ຈາກການຂາດຂໍ້ມູນຂ່າວຄາວ ແລະ ການກຳນົດພູມປະເທດຢ່າງຈະແຈ້ງນັ້ນເອງ ພາສາຄວາມເວົ້າທີ່ການເດີນທາງດັ່ງກ່າວ ໄດ້ເລົ່າບັນຍາກາດອອກມານັ້ນ ຊ້ຳບໍ່ນານກໍຕົກເຂົ້າໄປສູ່ຫ້ວງແຫ່ງຄວາມຫລົງລືມ ຢ່າງງຽບສະໜິດ ແຜນທີ່ປະເທດລາວທີ່ສ້າງຂຶ້ນອີງຕາມຂໍ້ຄວາມບັນທຶກ ຂອງ ທ່ານ ມູ່ໂຫ ນັ້ນ ບໍ່ໄດ້ມີຮອດນະຄອນວຽງຈັນ ອັນເປັນຈຸດໝາຍປາຍທາງຂອງການເດີນທາງ ຂອງ ທ່ານ ວັນວຸດສະຕົບ ເຊິ່ງຕັ້ງຢູ່ແຄມແມ່ນ້ຳຂອງເອງນັ້ນຊ້ຳ ເຖິງແມ່ນວ່າ ພວກໂຮນລັງ ຈະບໍ່ໄດ້ໜີອອກຫ່າງຈາກແມ່ນ້ຳດັ່ງກ່າວ ໃນເວລາເດີນທາງຂອງພວກເພິ່ນກໍຕາມ. ຜູ້ຄົນໄດ້ຮູ້ພຽງດ່າວໆກ່ຽວກັບການເດີນທາງດັ່ງກ່າວ ຍ້ອນການຖອດຄວາມ ຂອງທ່ານ ດຸ່ຍບົວ ໃນບົດຄວາມຂອງທ່ານ ທີ່ພາດຫົວເລື້ອງວ່າ ຊີວິດຂອງບັນດານາຍພົນ ໃນດິນແດນອິນເດັຽອານານິຄົມຂອງຊາວໂຮນລັງທ່ນັ້ນ ແລະ ປະເທດລາວໃນສະຕະວັດທີ່ 17 ນັ້ນ ໄດ້ມີຜູ້ຮູ້ຈັກແດ່ ກໍຍ້ອນຂໍ້ຄວາມບັນທຶກການເດີນທາງ ເຊິ່ງມີຂຶ້ນພາຍຫລັງນີ້ຈັກໜ່ອຍຂອງຄຸນພໍ່ ຊອງມາຣີ ເລຣິຢາ ແລະ ເຊິ່ງມີຢູ່ໃນປຶ້ມຂອງມາຣິນີ ແລະ ມາກຕີນີທ່ນັ້ນ.

ຕົວນະຄອນວຽງຈັນໄດ້ຖືກທຳລາຍຍັບເຍີນ ໂດຍພວກສະຫຍາມໃນປີ 1828 ແລະ ປະເທດລາວທັງໝົດໄດ້ຕົກຢູ່ໃນການຄອບງຳຂອງສະຫຍາມ. ຄະນະກຳມາທິການຝຣັ່ງນຳໂດຍ ທ່ານພັນຕີ ເດີລາເກຣ ໃນເວລາເດີນທາງສຳຫລວດສຸວັນ

ນະພູມປະເທດ (ອິນໂດຈີນ) ປີ 1866-67-68 ນັ້ນໄດ້ໄປຢັ້ງມຢາມຊາກເມືອງຮ້າງຂອງນະຄອນຫລວງດັ່ງກ່າວ ຂອງປະເທດລາວ. ຂ້າພະເຈົ້າເຫັນວ່າ ມັນເປັນເລື່ອງທີ່ໜ້າສົນໃຈທີ່ຈະຟື້ນຟູເລື່ອງລາວສິ່ງທີ່ເປັນມາທັງໝົດ ອັນຈະອຳນວຍຂໍ້ມູນສຳຄັນໃຫ້ແກ່ຂ້າພະເຈົ້າທາງດ້ານປະຫວັດສາດ ເຂດແດນ ແລະ ຄວາມເຂັ້ມແຂງຂອງອານາຈັກໜຶ່ງ ທີ່ໄດ້ສາບສູນໄປກ່ອນໜ້າຍຸກປັດຈຸບັນນີ້ 2 ສະຕະວັດ. ຍ້ອນຄວາມຊ່ອຍເຫລືອຂອງ ທ່ານ ມູນເລີ ເອງ ທີ່ຂ້າພະເຈົ້າສາມາດ ໄດ້ຂໍ້ຄວາມຕົ້ນສະບັບ ຂອງພື້ນການເດີນທາງດັ່ງກ່າວ ທີ່ ນະຄອນອຳສະເຕີດຳ ເຊິ່ງບໍ່ສາມາດພົບເຫັນ ຢູ່ນະຄອນປາຣີເລີຍ ແລະ ທ່ານ ມ.ປ ເວີນແກນ ໄດ້ເປັນຜູ້ຊ່ອຍແປແບບຄວາມຕໍ່ຄວາມຕົ້ນສະບັບນັ້ນໃຫ້ຂ້າພະເຈົ້າ.

ນອກຈາກການເດີນທາງໃນລາວແລ້ວພັບຊາວຟລາມັງ ຫົວນັ້ນຍັງເວົ້າລະອຽດເຖິງການພັກເຊົາຢູ່ປະເທດກຳພູຊາຂອງພວກໂຮນລັງ ຂໍ້ວິວາດຂອງພວກເຂົາກັບຄົນທ້ອງຖິ່ນ ແລະ ພວກປອັກຕຸຍການດ້ວຍ. ນະທີ່ນີ້ ຂ້າພະເຈົ້າຈະຕີພິມ ແຕ່ພາກສ່ວນທີ່ເວົ້າເຖິງການເດີນທາງສະເພາະທີ່ນັ້ນ ຂໍ້ຄວາມຕອນຕົ້ນກ່ອນຈະເຂົ້າເລື່ອງລາວການເດີນທາງ ໄດ້ຂຽນໄວ້ວ່າ ໃນເດືອນ ມີນາ ປີ 1641 ຜູ້ແທນເຈລະຈາການຄ້າຈາກປະເທດລາວໄດ້ເດີນທາງໄປເຖິງ ບາຕາເວຍນະຄອນດ້ວຍສະເພາະຂອງບໍລິສັດຊາວໂຮນລັງ ແລະ ໄດ້ຊຸກຍູ້ໃຫ້ນາຍພົນ ວັນດີເມນ ຜູ້ວ່າ ຣາຊະການຊົມພູອານາຈັກຂອງຊາວໂຮນລັງ ໃຫ້ສົ່ງທູດຄະນະໜຶ່ງພ້ອມດ້ວຍສານ ແລະ ເຄື່ອງບັນນາການໄປຍັງກະສັດລາວ ເພື່ອຈະໄດ້ຮູ້ວ່າພານິດຊະພັນຂອງປະເທດດັ່ງກ່າວນັ້ນມີອັນໃດແດ່.ທ່ານ ວັນວຸດສະຕົບ ໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າຄະນະທູດດັ່ງກ່າວອັນມີຜູ້ຮອງ ຊື່ ວິນແລມ ເດີໂກຍເຢ ແລະ ຮຸຍແບກ ບູເດີວິນສ ວັນໂລກອກສ ນອກນັ້ນຍັງມີຊ່າງຕັດຜົມຜູ້ໜຶ່ງ ຄົນໃຊ້ສອງຄົນ ແລະ ຄົນມາເລ ຊື່ ອິນສີ ລັນນັງ ແຫ່ງປັດຕະນີນະຄອນຜູ້ໜຶ່ງນຳດ້ວຍ ທ່ານ ວັນວຸດສະຕົບໄດ້ເອົາເຄື່ອງຄ້າ ເຊັ່ນ ຜ້າຫົ່ມ ແລະ ແຜ່ນແພທີ່ມີມູນຄ່າລາຄາແຕກຕ່າງກັນ ແລະ ເອົາແອບບັນຈຸແກ້ວແຫວນແສນສິ່ງ ເຊິ່ງທັງໝົດຄິດເປັນມູນຄ່າເຖິງ 6,001 ຟູລີນ.

ຂ້າພະເຈົ້າ ໄດ້ອ່ານເບິ່ງຜົນງານການແປດັ່ງກ່າວນັ້ນຢ່າງພິນິດຖີ່ຖ້ວນ ແລະພະຍາຍາມຮັກສາລັກສະນະເດີມຂອງມັນໄວ້ ພ້ອມທັງໄດ້ຂຽນຄຳອະທິບາຍໄວ້ເພື່ອໃຫ້ຜູ້ອ່ານ ທີ່ບໍ່ສັນທັດກັບປະຫວັດສາດ ແລະ ພູມີສາດ ຂອງສຸວັນນະພູມ

ປະເທດໄດ້ເຂົ້າໃຈງ່າຍຂຶ້ນດ້ວຍ. ແຜນທີ່ ທີ່ລົງພິມໃນວາລະສານນີ້ ໄດ້ວາດໃຫ້ເຫັນເສັ້ນທາງເດີນເຮືອ ຂອງ ທ່ານ ວັນວຸດສະຕີບ ເປັນຄັ້ງທໍາອິດ ແລະ ອໍານວຍໃຫ້ຜູ້ຄົນ ສາມາດຕາມທາງເດີນໃນທ່າມກາງຫາດແກ້ງ ຂອງແມ່ນໍ້າຂອງໄດ້.

ຝຣັ່ງຊິສກາຣເຍ

ແກຣິດ ວັນວຸສຕິຟ
ທີ່ສະຫຼັກໄວ້ຢູ່ ປະຕູວັດ
ປ່າແຄ(ນະຄອນຫຼວງພະບາງ)

ແກຣິດ ວັນວຸສຕິຟ
ທີ່ສະຫຼັກໄວ້ຢູ່ ປະຕູວັດ
ພະນົມ(ນະຄອນພະນົມ)

ການເດີນທາງທີ່ຜູ້ຄົນບໍ່ຮູ້ຈັກຂອງພວກໂຮນລັງ ຈາກປະເທດກຳພູຊາ ສູ່ປະເທດລາວ ດ້ວຍຄຳອະທິບາຍຂອງທ່ານ ຝຣັ່ງຊິສກາຣເຍ

I
ການເດີນທາງຂາຂຶ້ນ

* ແມ່ນໃນວັນທີ່ 20 ກໍລະກົດປີ 1641 ທີ່ພໍ່ຄ້າຄົນຮອງ ຊາວໂຮນລັງພ້ອມດ້ວຍຜູ້ຊ່ອຍສອງຄົນ ນາຍພາສາ ອິນສີ ລັນນັງ ແລະ ຄົນຮັບໃຊ້ຜູ້ໜຶ່ງໄດ້ພາກັນເດີນທາງໄປສູ່ປະເທດລາວ (Louwen)(1) ດ້ວຍເຂົ້າຂອງຈຳນວນໜ້ອຍດຽວເພື່ອພະຍາຍາມ ຜູກສາຍສຳພັນທາງການຄ້າກັບປະເທດດັ່ງກ່າວ. ການເດີນທາງໄດ້ໃຊ້ເຮືອເຖິງ 12 ລຳ ບາງຄັ້ງຄາວຕ້ອງໄດ້ທີ່ໄດ້ພາຍເອົາ ແຕ່ບາງຄັ້ງຄາວຍັງຕ້ອງໄດ້ແກ່ດຶງຂຶ້ນຫາດແກ້ງອັນຍາວຢຽດ ແລະ ກວ້າງຂວາງເຫຼືອທີ່ສຸດ ແລະບາງຄັ້ງກໍ່ມີຕາດ ແລະ ເຟືອນຟອງມະຫືມາ ເປັນອຸປະສັກ ອັນຈຳຕ້ອງໄດ້ຂົນເຂົ້າຂອງອອກຈາກເຮືອເພື່ອແກ່ເຮືອເປົ່າຂຶ້ນ.

ໃນໄລຍະນີ້ຂອງປີ ແມ່ນ້ຳດັ່ງກ່າວເຊິ່ງເພິ່ນຮຽກມັນວ່າ ແມ່ນ້ຳລາວ(2) ນັ້ນເຕັມໄປດ້ວຍກ້ອນໂງ່ນ ແລະ ຫີນຜາ ອັນເຮັດໃຫ້ມີລັກສະນະປະຫລາດ ມັນໄດ້ໄຫລຜ່ານປະເທດເປຄູ(3) ເພື່ອຈະໄປປ່ອງໃສ່ທະເລ ທີ່ປະເທດກຳພູຊາ ເຊິ່ງກິນຄວາມຍາວເຖິງ 300 ມິລລ໌ (1.478,5 ມ ຜູ້ແປ). ພວກພໍ່ຄ້າເມືອງເປຄູ ພາກັນຂີ່ເຮືອມາຍັງປະເທດລາວ ເປັນເນື່ອງນິດເພື່ອທຳການຄ້າຂາຍເພັດນິນຈິນດາຂອງພວກເຂົາ.

ວັນທີ່ 29 ກໍລະກົດ ພວກເຮົາໄດ້ພາກັນໄປເຖິງບ້ານໃຫຍ່ບ້ານໜຶ່ງ ຊື່ວ່າ ໂລອິມ (4) ເຊິ່ງກໍເປັນຊື່ແມ່ນ້ຳສາຍໜຶ່ງ. ນະທີ່ນັ້ນມີບ້ານເຮືອນຜູ້ຄົນຕາມສອງຟາກຝັ່ງ ປະມານ 300 ຫລັງຄາ. ຈາກນັ້ນມາກໍແມ່ນບ້ານ ຄົກເລີລ໋ອກ(5) ບ້ານດັ່ງກ່າວ ມີຊາກສະຫລັກຫັກພັງຂອງໂຮງເຈົ້າຊີວິດ ເຊິ່ງກ່ອນໜ້ານີ້ 9 ປີ ພະອິງຖືກໂຄ່ນລົ້ມໂດຍລຸງຂອງພະອົງເອງ ເຊິ່ງເປັນກະສັດເຖົ້າອົງປະຈຸບັນ. ສ່ວນພະອົງເອງຖືກຈັບເປັນສະເລີຍ ແລະ ຖືກທໍລະມານເຖິງແກ່ອະສັນຍະກຳໄປລະຫວ່າງຫມອນສອງໜ່ວຍ(6).

ແຕ່ລະມື້ພວກເຮົາເຄື່ອນຍ້າຍໄປໄດ້ປະມານ 4 - 5 ຫລື ຮອດ 6 ມິລລ໌ ກໍມີ ວັນທີ່ 1 ສິງຫາ ພວກເຮົາໄດ້ໄປຢຸດພັກຢູ່ຕີນພູສູງ ທາງດ້ານຕາວັນຕົກຂອງແມ່ນໍ້າຂອງ ຊື່ ຈັນໂຕນ(7). ທາງເບື້ອງ ດິນໂກແຊງຊິນຂອງແມ່ນໍ້ານັ້ນ(8) ມີຄົນອາໄສຢູ່ໜາແໜ້ນພໍສົມຄວນ ທ້ອງຖິ່ນດິນຊີນນະບົດແຖບນັ້ນໄດ້ຮັບການປູກຝັງເຕັມໄປດ້ວຍ ຕົ້ນຝ້າຍ ແລະ ຕົ້ນໄມ້ກິນໝາກຮຽກວ່າ ຕົ້ນໝາກມ່ວງ. ເວລານີ້ ພວກເຮົາກໍາລັງເດີນຜ່ານຕີນພູສູງໜ່ວຍໜຶ່ງ ຮຽກວ່າ ຟັນກາງຢີ(9). ຕອນກາງຄືນວັນທີ່ 3 ພວກເຮົາພາກັນນອນແຮມຄືນຢູ່ນັ່ງວັດໃຫຍ່ຫຼັງໜຶ່ງຂອງຊາວກໍາພູຊາ. ພວກເຮົາພວມເຖິງບໍລິເວນປາກແມ່ນໍ້າສາຍໜຶ່ງທີ່ໄຫລຜ່ານແຂວງກໍາພູຊາ ແລະ ເປັນແຫລ່ງລໍາລຽງ ໝາກພິກນ້ອຍ(10) ເຊິ່ງຍ້ອນເຫດນີ້ເອງທີ່ກະສັດກໍາພູຊາ ຈຶ່ງສະເດັດມາປະພາດທຸກໆປີ. ວັນທີ່ 5 ພວກເຮົາໄດ້ໄປເຖິງຊົມເປົາ ເຊິ່ງຕັ້ງຢູ່ບໍ່ຫ່າງໄກຈາກບ້ານນ້ອຍແຫ່ງໜຶ່ງ ບ່ອນທີ່ຜະລິດສາດທຸກໆຜືນຂອງກໍາພູຊາ ຈາກນັ້ນພວກເຮົາກໍໄດ້ໄປເຖິງ ຊົມບ້ອກ ແລະ ຊົມບາເບິກ (11).

ຊົມບ້ອກ ແມ່ນບ້ານໃຫຍ່ພໍສົມຄວນບ້ານໜຶ່ງຂອງພວກກໍາພູຊາ ແລະ ໂດຍສະເພາະຂອງພວກເຈັກ ເຊິ່ງເຮັດການຄ້າຂາຍ ໜັງກວາງ ຂີ້ເຜີ້ງ ແລະ ອື່ນໆ ພວກເຂົາເຂົ້າໄປຊື້ຂອງ ຢູ່ໃນໃຈກາງຂອງປະເທດ ເພາະວ່າຊາວບ້ານຊາວເມືອງບໍ່ໄດ້ນໍາເອົາຜົນຜະລິດ ຂອງພວກເຂົາມາຂາຍ ອອກຕະຫລາດເລີຍ ພວກເຈັກຍັງເດີນທາງດ້ວຍເຮືອ ຫລື ດ້ວຍກວຽນເລິກເຂົ້າໄປຈົນເຖິງນໍ້ານ້ອຍ ຫລື ເລິກເຂົ້າໄປໃນອີກຈົນເຖິງພູນາວ(12) ຖ້າວ່າເດີນທາງກວຽນຈະຕ້ອງກິນເວລາ 3 ເດືອນທັງຂາໄປແລະຂາກັບ. ພວກເຂົາເອົາເກືອເຄື່ອງປັ້ນດິນເຜົາຂອງຈີນເຫລັກ ແລະ ເຄື່ອງອື່ນໆ ທີ່ບໍ່ມີລາຄາແພງທໍ່ໃດໄປແລກເອົາຂ້າທາດ ຄໍາ ນໍແຮດ ແລະ ງາຊ້າງ. ສະເພາະເກືອນັ້ນພວກເຂົາແລກເອົາຄໍາ ຊັ່ງຕໍ່ຊັ່ງ ແຕ່ວ່າພວກເຈັກກໍຊື້ເອົາກໍາໄລງາມຂອງພວກເຂົາ ດ້ວຍລາຄາແພງຈາກການເປັນໄຂ້ໄດ້ປ່ວຍຍ້ອນດິນຟ້າອາກາດແລະນໍ້າໃນແຖບນັ້ນ. ທ້ອງຖິ່ນພູເນົານັ້ນ ສ່ວນໜຶ່ງເສັຽຊ່ອຍກໍາພູຊາ ແລະ ອີກສ່ວນໜຶ່ງເນັ້ງຍາວຢຽດໄປຫາດິນແດນຈໍາປາ(13) ເຊິ່ງກໍາລັງເຮັດເສິກກັນຢູ່ກັບກໍາພູຊາ. ພວກເຈັກພາກັນເວົ້າວ່າ ຄົນແຖບພູເນົານັ້ນຄ້າຍກັບພວກຈ້ວນ(14) ຜູ້ຄົນເຊື່ອກັນວ່າ ແມ່ນເຂົາພວກນີ້ເອງ ທີ່ໄດ້ຄາດຕະກໍາດ້ວຍລູກໜ້າຂອງພວກເຂົາ ນັກຂັບເຮືອຜູ້ທໍາອິດ ແລະ ລູກເຮືອຂອງກໍາປັ່ນນອກວິກ ທີ່ໄດ້ພະຈົນໄພ ເດີນເຂົ້າໄປໃນແມ່ນໍ້າເລິກລັບຂອງປະເທດດັ່ງກ່າວ.

ສິມບາເບີກນັ້ນ ປົກຄອງໂດຍພະຍາເມືອງຜູ້ໜຶ່ງ ເຊິ່ງມີ ເຫວີນຍາ ຜູ້ໜຶ່ງ ແລະ ນັກປາດຫລາຍຄົນ(16) ຢູ່ພາຍໃຕ້ການບັນຊາຂອງເພິ່ນ. ພະຍາເຈົ້າເມືອງນັ້ນມີອຳນາດຕັດສິນຕາງພະມະຫາກະສັດໄດ້ ໃນວຽກປະຈຳທຳມະດາ ແລະ ເນື່ອງຈາກວ່າ ເມືອງດັ່ງກ່າວຕັ້ງຢູ່ລະຫວ່າງປະເທດກຳພູຊາ ແລະ ປະເທດລາວ ທ່ານຈຶ່ງມີຕຳແໜ່ງເປັນທັງສັງຄະນາຍົກດ້ວຍ. ເຮືອຂຶ້ນລ່ອງທຸກລຳຈະຕ້ອງລາຍງານກ່ຽວກັບສິນຄ້າ ແລະ ຜູ້ໂດຍສານທຸກຄົນ ແລະ ຄົນຖ້າຢາກໄດ້ຄວາມສະດວກໃນການອອກເຮືອ ຕ້ອງໄດ້ມີຂອງຕ້ອນໃຫ້ດ້ວຍພໍສົມຄວນ ພວກເຮົາກໍ່ໄດ້ພາກັນຄຳນັບ ທ່ານຜູ້ວ່າຣາຊການ ດ້ວຍການມອບແວ່ນນ້ອຍຈຳນວນໜຶ່ງ ອັນໄດ້ເຮັດໃຫ້ພວກເຮົາໄດ້ຮັບການຍົກຍ້ອງ ຈາກທ່ານເປັນຢ່າງດີ ທ່ານໄດ້ເຊີນພວກເຮົາຮັບປະທານອາຫານແລງນຳ ພ້ອມດ້ວຍເຈົ້າຂອງເຮືອທຸກຄົນ ອັນມີອາຫານປະເພດເຂົ້າ ໄກ່ ແລະ ອື່ນໆ ຫລັງອາຫານແລ້ວ ທ່ານກໍອວຍພອນໃຫ້ພວກເຮົາເດີນທາງປອດໄພ ແລະ ໄດ້ໃຫ້ຄຳໝັ້ນວ່າ ຈະໃຫ້ການຊ່ອຍເຫລືອພວກເຮົາເມື່ອພວກເຮົາເດີນທາງມາເຖິງແຫ່ງດັ່ງກ່າວ ແລະ ເມື່ອພວກເຮົາຕ້ອງການຄວາມຊ່ອຍເຫລືອຈາກທ່ານ.

ທີ່ຊົມບ້ອກ ຝົນໄດ້ຕົກກະໜ່ຳຢ່າງບໍ່ຂາດສາຍ ສິນຄ້າຫລາຍຢ່າງກໍ່ຂາດເຂີນ ນະທີ່ນີ້ນເອງກໍ່ມີແກ້ງຮ້າຍ ມີຫີນໄງ່ນ ທີ່ອັນຕະລາຍ. ເຮືອທຸກລຳຈະຕ້ອງໄດ້ຂົນສິນຄ້າອອກລຳລຽງທາງບົກ ເພາະເຮືອບໍ່ສາມາດຂຶ້ນລ່ອງໄດ້.

ວັນທີ່ 11 ພວກເຮົາໄດ້ພົບພໍ້ເຮືອຂອງພວກຊາວລາວ ຕ່າງເອົາໜັງກວາງ ມາຈຳນວນ 5.000 ແຜ່ນ.

ວັນທີ່ 17 ພວກເຮົາໄດ້ນອນຄ້າງຄືນຢູ່ ເປີຊອງ(17) ໃກ້ໆກັບວັດຮ້າງແຫ່ງໜຶ່ງ ບ່ອນທີ່ພວກລາວພາກັນຈູດທູບທຽນບູຊາແລະໄຫວ້ພະພຸດທະຮູບສອງອົງ. ກ່ອນໜ້ານີ້ 50 ປີ ກະສັດກຳພູຊາ ໄດ້ປະທັບຢູ່ນະທີ່ນີ້ ແຕ່ພະອົງກໍ່ໄດ້ຖືກຂັບໄລ່ໂດຍພວກລາວ ຈຶ່ງຈຳຕ້ອງໄດ້ປະລະວັດແຫ່ງນີ້ໃຫ້ເປັນວັດຮ້າງ ແລ້ວຍ້າຍໄປຢູ່ບ່ອນພະອົງປະທັບຢູ່ປັດຈຸບັນ.

ເຖິງຈຸດນີ້ ມີແມ່ນ້ຳສາຍໜຶ່ງ ຂຶ້ນໄປທາງທິດຕາເວັນອອກ ຍາວເຖິງ 30 ມີລລ໌ (18) ເຂົ້າໄປໃນໆພຸ້ນ ບ່ອນທີ່ຮຽກວ່າ ນ້ຳນ້ອຍ ເຊິ່ງແມ່ນພວກລາວອາໄສຢູ່. ມີພວກກຳພູຊາບາງຄົນທີ່ນັ້ນ ປະຊາຊົນແຫ່ງດັ່ງກ່າວພາກັນເສັຽຊ່ວຍເຈົ້າຊີວິດຂອງລາວ ເປັນຄຳ 10 ກັດຕີຕໍ່ປີ (19), ພວກຄົນພື້ນເມືອງແຖບນັ້ນ ຈະຄ້າຂາຍ

ຄຳຂອງພວກເຂົາ ກໍ່ເມື່ອກັບຜູ້ຮູ້ຈັກຮັກແກ່ນກັນດີທີ່ນັ້ນ ແລະ ພວກເຂົາກໍ່ມັກຈະຊຸກເຊື່ອງຄຳຂອງພວກເຂົາໄວ້ໃນເຮືອນ ແທນທີ່ຈະຂາຍໃຫ້ຜູ້ທີ່ມາໃຫ້ເຫັນໜ້າເທື່ອທຳອິດ ພວກເຂົາພາກັນເວົ້າວ່າ ຈະຂາຍຊັບຂອງພວກເຮົາໄປເຮັດຫຍັງ ເພາະສິ່ງທີ່ຕ້ອງການສຳລັບພວກເຮົາ ກໍມີແຕ່ກິນກັບນຸ່ງຫົ່ມທີ່ນັ້ນ ແລ້ວສິ່ງເຫລົ່ານີ້ປະເທດຂອງພວກເຮົາກໍ່ບໍ່ໄດ້ອຶດຢາກເລີຍ ມີພໍ່ຢູ່ພໍ່ກິນແລ້ວ. ນີ້ແມ່ນຄຳຕອບຂອງພວກເຂົາຕໍ່ເຈົ້າຊີວິດກຳພູຊາເອງ ກ່ອນໜ້ານີ້ 20 ປີ ເວລາທີ່ພະອົງໄດ້ສະເດັດມາໂດຍທາງເຮືອ ຈົນກາຍປາກນ້ຳນ້ອຍຂຶ້ນເມືອເຖິງ 20 ມິລລ໌ ບ່ອນທີ່ເກັບຄຳໄດ້ຫລາຍພ້ອມດ້ວຍທະຫານອາລັກຂາຂອງຍີ່ປຸ່ນ(20) ມາເລ ຈີນ ແລະ ກຳພູຊາເອງ 300 ຄົນ ແຕ່ວ່າດິນຟ້າອາກາດ ແຖບນັ້ນເຮັະຮ້າຍຫຼາຍ ຈົນໃນຂາກັບ ມີແຕ່ເກືອບ 50 ຄົນທີ່ນັ້ນທີ່ລອດຊີວິດມາໄດ້ ແລະ ກໍໄດ້ຄຳມາບໍ່ພໍທີ່ໃດ ຍິ່ງໄປກວ່ານັ້ນພວກລາວຍັງຢືນຢັນວ່າ ໂລຫະປະເສີດນັ້ນຍັງມີຖືມເຖຢູ່ ແຕ່ຍ້ອນລາຄາຂາຍບໍ່ສົມມາພາຄວນ ກໍເລີຍບໍ່ພາກັນຂຸດຄົ້ນເອົາມັນອອກມາ.

ວັນທີ່ 19 ສິງຫາ ພວກເຮົາໄດ້ເດີນເຮືອຂຶ້ນແງ່ນ້ຳ ດ້ານຕາເວັນອອກ ເຊິ່ງແມ່ນເສັ້ນທາງໄປສູ່ປະເທດຂອງຊາວລາວ ແລະ ພວກເຮົາກໍໄດ້ປະແງ່ນ້ຳທີ່ໄປຈອດຊອດປະເທດເປຍູ(21). ວັນທີ່ 22 ພວກເຮົາຈຳຕ້ອງໄດ້ຕໍ່ສູ້ກັບກະແສນ້ຳແຮງ ທ່າມກາງຕົ້ນໄມ້ທີ່ນ້ຳຖ້ວມຢູ່ ແລະ ເຊິ່ງພາຍຫລັງທີ່ພວກເຮົາໄດ້ຕໍ່ສູ້ກັບມັນມາທັງເວັນ ແລະຄືນແລ້ວ ພວກເຮົາພຽງແຕ່ຄືບຄານມາໄດ້ 1 ມິລລ໌ເຄິ່ງທີ່ນັ້ນ ໃນ 24 ຊົ່ວໂມງ. ວັນທີ່ 24 ຕອນແລງໆພວກເຮົາ ໄດ້ມາເຖິງດອນສະແສນຮາມ (22) ນະທີ່ນີ້ ກະແສນ້ຳຍິ່ງຮ້າຍແຮງພວກເຮົາໄດ້ຫຍັບເຂົ້າໄປສູ່ປາກນ້ຳ ທີ່ໄຫລຫລັ່ງທັງເທອອກມາຈາກພູ ແລະຕົກລົ່ງລົງມາມີຄວາມສູງທີ່ກັບທໍ່ຄອຍດ້ານຕາເວັນຕົກຂອງກຸງ ອຳສະເຕີດຳ ທ່າມກາງໂງ່ນຫີນ ແລະ ເກາະດອນຈຳນວນນັບບໍ່ຖ້ວນ ພວກເຮົາຈຳຕ້ອງໄດ້ຂົນຂອງອອກຈາກເຮືອ ແລ້ວດຶງເຮືອຂຶ້ນ ຕາດແກ້ງດ້ວຍຄວາມລຳບາກຍາກເຍື້ອນ ຜ່ານຫີນຜາ ແລະ ຕາດແກ້ງ ອັນໜ້າຢ້ານກົວຝູງນັ້ນ .

ວັນທີ່ 25 ຕອນແລງ ພວກເຮົາໄດ້ພັກເຊົາຢູ່ມົ່ງພູສູງໜ່ວຍໜຶ່ງ ແລະໃກ້ໆກັບດອນສະແສນຮາມ. ນະທີ່ນັ້ນພວກເຮົາໄດ້ພົບວ່າ ແມ່ນ້ຳຂອງນັ້ນຮອມແຄບເຂົ້າຢູ່ລະຫວ່າງສອງຝາກຝັ່ງຫີນຜາ ເຊິ່ງບໍ່ມີໃຜສາມາດເດີນເຮືອຂຶ້ນລ່ອງໄດ້ເລີຍ. ສຽງຂອງນ້ຳຕົກເນືອງນອງອຶກກະທຶກເໝືອນດັ່ງສຽງຂອງທະເລ. ຕົກມື້ໃຫມ່ມາ

ພວກເຮົາພຽງແຕ່ສາມາດຍັບຍ້າຍໄດ້ພຽງແຕ່ 1 ມິລລ໌ທີ່ນັ້ນ. ພວກເຮົາໄດ້ເດີນຜ່ານ 4 ຫາ 5 ດອນທີ່ໃຫຍ່ພໍສົມຄວນ ລະຫວ່າງດອນເຫລົ່ານັ້ນກໍມີກະແສນ້ຳໄຫລຢ່າງຮ້າຍແຮງ ຈັກໜ່ອຍພວກເຮົາກໍຈຳຕ້ອງໄດ້ຂົນເຄື່ອງຂອງອອກຈາກເຮືອອີກ ແລ້ວຂົນມັນຂ້າມໄປຍັງ ຝາກເບື້ອງນັ້ນ ເປັນໄລຍະທາງປະມານ 2.600 ບາດກ້າວເດີນ. ຢູ່ລະຫວ່າງທາງເດີນນັ້ນກໍມີປ້າຍອັນໜຶ່ງ ເຊິ່ງມີຕົວອັກສອນກຳພູຊາ ແລະ ລາວ ຄວັດໃສ່ໄວ້ ເພື່ອບົ່ງບອກເຖິງເຂດແດນຂອງສອງອານາຈັກ. ພວກລາວບໍ່ໃຊ່ໄດ້ຮີບມາຊ່ອຍພວກເຮົາເລີຍ ແລະ ຝົນກໍຕົກລົງມາຫ່າແລ້ວຫ່າເຫລົ່າ ຈົນພວກເຮົາໄດ້ພາກັນປຸກຕູບເພື່ອປົກປ້ອງເຄື່ອງຂອງພວກເຮົາ.

ວັນທີ່ 5 ກັນຍາ ເຮືອຂອງພວກເຮົາລຳໜຶ່ງໄຫລພາດຕົ້ນໄມ້ແຕກຫັກ ພວກເຮົາໄດ້ພາກັນຊ່ອຍຍາດເອົາເຄື່ອງຂອງໄດ້ຈຳນວນໜຶ່ງ. ພວກເຮົາໄດ້ພະຍາຍາມຈົນສຸດຄວາມສາມາດ ເພື່ອເລັ່ງໃຫ້ ການເດີນທາງຂອງພວກເຮົາກ້າວໄປໄວ ແຕ່ວ່າຜູ້ໃຫຍ່ເຊັ່ນ ແສນມຸງຄຸນ ແສນຣາເດຽຈິດ ເຈົ້າຄອກນາ(ບາງບ່ອນວ່າເຈົ້າຄອກເໜືອ) ມົນທົບ ແລະຜູ້ອື່ນໆ(23) ບໍ່ເຫັນພ້ອມເພາະວ່າບໍ່ສາມາດເດີນທາງໃຫ້ໄວໄປກວ່ານັ້ນໄດ້ ຍ້ອນວ່າຕ້ອງໄດ້ປ່ງນນາຍນ້ຳ ໃນແຕ່ລະໄລຍະ. ອີກຢ່າງໜຶ່ງສີທີ່ສີພາຍຍັງຕ້ອງໄດ້ຫາຂອງຢູ່ຂອງກິນ ໄປພ້ອມ ດ້ວຍການຍິງເອົາກວາງແລະສັດອື່ນໆ ໄວ້ເປັນອາຫານ ພວກເຂົາສ່ວນຫລາຍມັກເມົາເຫລົ້າ. ວັນທີ່ 7ກັນຍາ ຄົນປະມານ 30 ຄົນ ໄດ້ພາກັນເອົາເຮືອລຳນ້ອຍຂ້າມໄປຟາກນ້ຳເບື້ອງໜຶ່ງຈົນຄ້າຍແລງຈຶ່ງພາກັນກັບມາດ້ວຍກວາງ 3 ໂຕ ຫມູປ່ານ້ອຍໂຕໜຶ່ງ ເຊິ່ງພວກເຂົາໄປລ່າມາແຕ່ປ່າ.

ວັນທີ່ 8 ກັນຍາ ພວກເຮົາໄດ້ພາກັນໄປເຖິງເກາະແຫ່ງໜຶ່ງ ເຊິ່ງເຕັມແຕ່ຝູງກວາງຢ່າງໜ້າແປກປະຫລາດ. ຜູ້ຊ່ອຍສອງຄົນກັບຊ່າງຕັດຜົມ ພາກັນອອກລ່າເນື້ອ ພ້ອມດ້ວຍຫມາພານຂອງທ່ານ ເຣເຢມ໋ອກ(24) ແລະ ໃນພິບຕາດຽວພວກເຂົາກໍໄດ້ກວາງໂຕງາມໆມາ 2 ໂຕ. ພວກລາວພາກັນຂ້າມັນມາໄດ້ 40 ໂຕໃນມື້ດຽວກັນ. ພວກເຂົາພາກັນເອື້ອບເກືອໄວ້ ເພື່ອເປັນອາຫານສຳລັບການເດີນທາງຕໍ່(25).

ວັນທີ່ 11 ພວກເຮົາອອກສູ່ດິນອີກ ແລະ ພວກເຮົາກໍຍິງໄດ້ແຮດໂຕໜຶ່ງ ເຊິ່ງພວກເຮົາບໍ່ສາມາດເອົາມັນມາໄດ້ ແລະ ໄດ້ກວາງໃຫຍ່ອີກໂຕໜຶ່ງ ເຊິ່ງພວກເຮົາໄດ້ຄິວເປັນຕ່ອນນ້ອຍໃນປ່າ. ວັນທີ່ 18 ພວກເຮົາໄດ້ມາເຖິງບາສັກ (ຈຳປາ

ສັກ) ເຊິ່ງນະທີ່ນັ້ນ ພວກເຮົາພົບເຮືອ 9 ລຳ ຕ່າງຂອງເຕັມ ກຽມເດີນທາງໄປປະເທດກຳພູຊາ. ບາສັກເປັນບ້ານທີ່ຕັ້ງຂຶ້ນບໍ່ທໍ່ໃດປີມານີ້ ແລະ ເນື່ອງຈາກວ່າ ເປັນຈຸດຊາຍແດນ ດັ່ງນັ້ນ ຈຶ່ງມີສຳນັກຂອງເຕວິນຍາ(26) ຕັ້ງຢູ່. ມິນທິບ ໄດ້ແຈ້ງໃຫ້ຜູ້ວ່າຣາຊະການ ທ່ານນັ້ນຮູ້ເຖິງການມາຮອດຂອງພວກເຮົາ ພ້ອມທັງເອົາໝາກໄມ້ໄປມອບເປັນຂອງຂັວນ ໃນນາມພວກເຮົາດ້ວຍ ບັນດາຜູ້ໃຫຍ່ຄົນອື່ນໄດ້ເອົາເຈຍໂວນີສ (ຈີວອນ)(27) ສີແດງ ແລະແວ່ນນ້ອຍເປັນຮູບປັ້ມໃຫ້ອີກ ຢ່າງລະອັນ ພວກເຮົາໄດ້ໂອ້ລົມກັບເຕວິນຍາທ່ານນັ້ນ ຈົນກິນເວລາເຖິງສອງຊົ່ວໂມງ ແລະ ທ່ານເອງກໍຮັບຮອງຕໍ່ພວກເຮົາວ່າ ການເນືອຢ້ຽມຢາມເທື່ອນີ້ຂອງພວກເຮົາຈະເຮັດໃຫ້ອິງກະສັດລາວພໍໃຈແນ່ນອນ. ທ່ານໄດ້ຖາມພວກເຮົາເຖິງ ບາຕາເວັຽນະຄອນ ທ່ານຍັງໄດ້ເອົາແບ້ໃຫ້ພວກເຮົາໂຕໜຶ່ງ ພ້ອມທັງເປັດໄກ່ຫລາຍໂຕ ແລະ ຕາມປະເພນີກໍມີທັງອາຫານຄາວແຕ່ງຮຽບຮ້ອຍແລ້ວດ້ວຍ.

ວັນທີ່ 23 ພວກເຮົາໄດ້ມາເຖິງອອກມູນ(28) ແລະ ພວກເຮົາກໍໄດ້ ຮັບຂອງຕ້ອນເປັດໄກ່ ແລະ ເຂົ້າຈາກເຕວິນຍາເປັນການແລກປ່ຽນ ກັບແວ່ນເຊັ່ນດຽວກັນ ທ້ອງຖິ່ນນັ້ນເຕັມໄປດ້ວຍພູຜາ ມີຕາດແກ້ງ ແລະ ກະແສຟອງນ້ຳແຮງ.

ວັນທີ່ 1 ຕຸລາ ເຮືອຂອງພວກເຮົາອີກລຳໜຶ່ງໄດ້ໂດນກ້ອນຫີນແຕກ ແຕ່ພວກເຮົາກໍສາມາດ ຍາດເອົາ ເຄື່ອງຂອງພວກເຮົາໄວ້ໄດ້ໝົດ. ວັນທີ່ 3 ພວກເຮົາໄດ້ເດີນເຮືອ ຜ່ານໂງ່ນຫີນທີ່ຮຽກວ່າ ແຫວນ ເຊິ່ງເນັ່ງຜ່ານລຳນ້ຳ ແລະ ເຮັດໃຫ້ການເດີນເຮືອຍິ່ງຫຍຸ້ງຍາກຈົນເຮືອຕ່າວໄປໂງມາ 3-4 ເທື່ອຈຶ່ງຜ່ານພົ້ນແກ້ງນັ້ນໄດ້ ພວກເຮົາໄດ້ພົບເຫັນໂງ່ນຫີນນາງຊະນິດ ທີ່ໄດ້ພິຄາດເອົາເຮືອພ້ອມດ້ວຍຜູ້ຄົນທີ່ໂດຍສານມານັບລຳບໍ່ຖ້ວນ ສິ່ງທີ່ຜູ້ຄົນຮຽກວ່າແກ້ງ ແລະ ເສືອນັ້ນ ເຮັດໃຫ້ພວກເຮົາຢ້ານກົວຫລາຍ. ພາຍຫລັງທີ່ໄດ້ຂຶ້ນພົ້ນໂງ່ນຫີນສີ່ນຽງມາແລ້ວ ພວກເຮົາກໍໄດ້ຢຸດ ພັກຢູ່ບ້ານນາແວນ(29) ເພື່ອຈະປ່ຽນນາຍນ້ຳອີກ ພວກເຮົາເຫັນວ່າມີຜູ້ຄົນທີ່ຊຳນານຫລາຍ ຮູ້ໄດ້ຮອດທຸກກ້ອນຫີນທີ່ນ້ຳລີບຢູ່. ໃນທ້ອງຖິ່ນແຫ່ງນີ້ບໍ່ປະກົດເຫັນຜູ້ຄົນຢູ່ຕາມແຄມນ້ຳເລີຍ ແຕ່ວ່າເລິກເຂົ້າໄປໃນແລ້ວມີຜູ້ຄົນຢູ່ໜາແໜ້ນ.

ວັນທີ່ 11 ຕຸລາ ພວກເຮົາໄດ້ມາຢຸດພັກຢູ່ສາພະນາເຊິ່ງ ທ່ານນັບປຣາໄດ້ນຳໄກ່ ແລະ ໝາກໄມ້ມາຕ້ອນພວກເຮົາ. ຫລັງຈາກນັ້ນພວກເຮົາກໍໄດ້ໄປເຖິງບ້ານມຸກ ໄຊມູນ ພະນົມ ອັນເປັນທີ່ປະທັບຂອງ ລາເດັງ ຕາເລັມປອຍ ຈາກນັ້ນອີກ

ພວກເຮົາໄດ້ມາເຖິງລໍຈັນ(30) ບ່ອນປະທັບຂອງອຸປຣາຊ ຜູ້ໜຶ່ງ. ໃນວັນທີ່ 18 ອັນເປັນມື້ເພັງພະຈັນເຕັມດວງ ມັນເປັນມື້ຂຶ້ນປີໃຫມ່ຂອງພວກລາວ(31) ຜູ້ຄົນພາກັນເຮັດບຸນທຳທານເປັນການໃຫຍ່ ພ້ອມທັງຈູດບັ້ງໄຟດອກນຳພ້ອມ. ທ່ານຣາເດັງ ປວກຊິນ ໄດ້ໃຫ້ມົນທົບເຊີນພວກເຮົາໄປທີ່ສຳນັກເພິ່ນໃນຕອນຄ່ຳ ເພື່ອຊົມພິທີກຳຂອງພວກນອກເຢຊູ ພວກເຮົາໄດ້ເອົາຜ້າເຈຍວອນນິສສີແດງຖວາຍເຈົ້າອະທິການໃຫຍ່ ແລ້ວພວກເຮົາກໍໄດ້ເຫັນຮູບຮຸ່ນພະເຈົ້າ ຂອງປະເທດນັ້ນເຊິ່ງບໍ່ຕ່າງຫຍັງກັບຂອງພວກສະຫຍາມ ແລະ ຂອງພວກກຳພູຊາເລີຍສິ່ງທີ່ແຕກຕ່າງແດ່ກໍມີແຕ່ ພະສິງອິງຄະເຈົ້າມີອະນຸພາບຫລາຍກ່ວາແດ່ຈັກໜ່ອຍ ແລະເໜືອກ່ວາຂຸນສານຊໍ້າອີກ.

ໃນເມືອງດັ່ງກ່າວມີວັດຢູ່ດ້ວຍກັນ 50 ແຫ່ງ ທີ່ສິ່ງແສງເຫລື້ອມຂອງຄຳພອກຍິບຍັບອັນດູດດຶງຄວາມຢາກເບິ່ງຢາກຊົມຂອງພວກເຮົາ. ຊາວລາວພາກັນເຊື່ອວ່າ ເມືອງລໍຈັນ ເປັນເມືອງໃຫຍ່ ເຖິງວ່າຄວາມເປັນຈິງແລ້ວມັນຈະມີຄວາມໃຫຍ່ພຽງແຕ່ທີ່ເມືອງ ຣາກເດີວິກ(32) ທີ່ນັ້ນ. ພວກເຮົາໄດ້ພາກັນຍ່າງເລາະທ່ຽວຕາມຖະໜົນຂອງສາຍທາງຕອນຄ່ຳ ແຕ່ພວກເຮົາກໍສາມາດ ເດີ່ອນໄປມາໄດ້ຍາກລຳບາກຫລາຍ ຍ້ອນວ່າມີການປະພຶດແບບອານາຈານອັນໜ້າໜ່າຍຢູ່ທົ່ວທຸກແຫ່ງ, ໂຕເມືອງດັ່ງກ່າວນັ້ນແມ່ນສະຖານທີ່ ອັນໜ້າຢ້ານທີ່ສຸດ ຂອງພວກນອກສາສະໜາ ເຢຊູໃນໂລກ. ມີຄຳຢ່າງຫຼວງຫຼາຍທີ່ມີລາຄາຖືກທີ່ສຸດ.

ວັນທີ່ 27 ຕຸລາ ພວກເຮົາໄດ້ຂຶ້ນມື້ນປ່າໂງ່ນຫີນຂອງແກ້ງສິງ ແລະ ແກ້ງດິງ(33). ວັນທີ່ 30 ພວກໄດ້ມາກັນເຖິງບ້ານຫ້ວຍລຸນ(34) ບ່ອນຜະລິດເຄື່ອງໄຫມທີ່ດີເລີດກ່ວາເພີ່ນຂອງປະເທດລາວ. ເຂົາເຈົ້າສົ່ງມັນໄປຂາຍໃຫ້ສະຫຍາມ ຕົງກິ່ງ ກຸ່ຍນ່າມ ແລະກຳພູຊາ. ວັນທີ່ 1 ພະຈິກ ພວກເຮົາໄດ້ມາຮອດເມິງກົກ(35) ອັນເປັນຕົວເມືອງທີ່ເຕັມໄປດ້ວຍພໍ່ຄ້າຊາວຂາຍ ແລະ ຊາວເຮືອອັນແມ່ນຈຸດຄ້າຂາຍທີ່ດີກໜາກ່ວາເພີ່ນຂອງເຂດນັ້ນ ແລະເພີ່ນສາມາດພົບເຫັນສິນຄ້າທຸກປະເພດດ້ວຍ. ພວກພໍ່ຄ້າມໍຣ (ກຸລາ ຫລື ແຂກ) ແລະ ພໍ່ຄ້າສະຫຍາມໄດ້ພາກັນລັ່ງມາທີ່ນີ້ ເພື່ອທຳການຄ້າຂາຍແຜ່ນແພ ມີຄົນມໍຣ ຜູ້ໜຶ່ງໃນຈຳນວນຫຼາຍໆຄົນເຊິ່ງພາຍຫລັງທີ່ໄດ້ພັກຢູ່ແຫ່ງດັ່ງກ່າວເປັນເວລາ 2 ປີ ເພື່ອຂາຍສິນຄ້າຂອງພວກເຂົາໃຫ້ຫມົດ ແລ້ວໃນຂາກັບຈິນວ່າໄດ້ເຊົ່າກວງມ 60 ລຳ ເພື່ອຕ່າງເອົາຍານ ນ້ຳກົ້ງງ ແລະ ຄຳ ທີ່ເຂົາໄດ້ມາຈາກການແລກປ່ຽນຂອງເຂົາໄປ.

ໃນຕອນກາງຄືນຂອງວັນທີ່ 3 ພະຈິກ ມີເຮືອນ້ອຍລຳໜຶ່ງ ໄດ້ເອົາຄຳສັ່ງຈາກອັງກະສັດມາເຖິງພວກເຮົາ ໂດຍບອກໃຫ້ພວກເຮົາພັກຢູ່ຫ່າງຈາກ ນະຄອນ ວຽງຈຽນ(36) ບ່ອນປະທັບຂອງພຣາຊະວັງ 1 ມິລລ໌ເຄິ່ງ ແລ້ວ ເຕວິນຍາ ກົມພັນອັນເປັນລຸງຂອງພະອົງເອງ ຈຶ່ງຮຽກມົນທົບ ເຈົ້າຄອກເໜືອ ແລະ ຜູ້ອື່ນໆມາຫາເພື່ອຊັກຖາມເຖິງເຫດຜົນຂອງການມາຂອງພວກເຮົາ ແລະ ເຄື່ອງບັນນາການທີ່ພວກເຮົາຈະນຳມາຖວາຍພະຣາຊາ. ທ່ານຮູ້ສຶກພໍໃຈນຳຄຳອະທິບາຍຂອງພວກເຮົາ ພ້ອມທັງຮັບຮອງວ່າ ການພົບປະພວກເຮົາຈະເປັນທີ່ພໍໃຈຂອງພະອົງຫລານຂອງທ່ານ. ຕາມທຳນຽມທີ່ມີຢູ່ປະເທດດັ່ງກ່າວ ເພິ່ນຈະຕ້ອງອ່ານຂໍ້ຄວາມຂອງສານ ຈາກເຈົ້າບ້ານ ສະພາມເມືອງຊາວຕ່າງປະເທດກ່ອນທີ່ທູດຈະຖວາຍສານດັ່ງກ່າວ ໃຫ້ແກ່ເຈົ້າຊີວິດ ເພື່ອກວດເບິ່ງວ່າສານດັ່ງກ່າວໄດ້ຂຽນຖືກຕ້ອງຕາມຮູບແບບທີ່ຖືກຕ້ອງ ຫລື ບໍ່ ສານທີ່ທ່ານນາຍພົນ ວັນດີເມັນ ຂຽນຂຶ້ນໃນປະເທດຂອງທ່ານນັ້ນເຫັນວ່າ ຖືກຕ້ອງດີ ແລະ ພະບາດສົມເດັດຊົງມີພະດຳລັດຍໍຍ້ອງສໍລະເສີນແນ່ນອນ. ການໃຫ້ການຕ້ອນຮັບແກ່ພວກເຮົາຄົງຈະຍິ່ງດີຂຶ້ນ. ວັນທີ່ 5 ພະຈິກ ເຕວິນຍາ ທ່ານໜຶ່ງໄດ້ນຳເອົາເຮືອໃຫຍ່ 3 ລຳ ປະກອບດ້ວຍສີພາຍລຳລະ 40 ຄົນມາຮັບພວກເຮົາ ສານຂອງທ່ານນາຍພົນ ວັນດີເມັນນັ້ນ ໄດ້ຖືກບັນຈຸໄວ້ໃນດູລັງ(37) ຄຳໃຫຍ່ໜ່ວຍໜຶ່ງ ຕັ້ງໄວ້ໃນຜາສາດພອກຄຳສູງຮຽວ ທີ່ຕັ້ງຢູ່ກາງເຮືອລຳໃຫຍ່ກ່ວາເພິ່ນ. ທ່ານ ເຕວິນຍາ ນັ່ງຢູ່ຝ່າຍຫົວເຮືອ ແລະ ພວກເຮົາຢູ່ຝ່າຍທ້າຍ, ເຮືອອີກສອງລຳຕາມພວກເຮົາມາ ແລະ ເຮືອທີ່ພວກເຮົານຳມາແຕ່ປະເທດກຳພູຊານັ້ນ ຂຶ້ນກ່ອນພວກເຮົາ, ແລະ ພວກເຮົາກໍໄດ້ມາເຖິງຖານທີ່ພັກເຊິ່ງເພິ່ນໄດ້ຈັດກຽມໄວ້ໃຫ້ແກ່ພວກເຮົາຢູ່ແຄມນໍ້າ ຂະນະທີ່ພະອາທິດຕົກດິນ. ເຕວິນຍາທ່ານໜຶ່ງໄດ້ໃຫ້ການຕ້ອນຮັບແກ່ພວກເຮົາ ພ້ອມທັງໄດ້ຊົມເຊີຍພວກເຮົາ ໃນນາມຂອງອົງກະສັດ.

ພວກເຮົາຕອບທ່ານດ້ວຍຂໍ້ຄວາມວ່າ: "ທ່ານຜູ້ຊົງຄວາມຍິ່ງໃຫຍ່ຄົງຈະຮູ້ແລ້ວສິ່ງທີ່ທ່ານມົນທົບໄດ້ຮຽນໃຫ້ພະອົງກະສັດ ແລະ ເສນາອາມາດທັງຫລາຍໃນຣາຊະອານາຈັກ ຊົງຊາບກ່ຽວກັບພວກເຮົາ ຂ້າໃຊ້ຂອງພະອົງທ່ານໜຶ່ງ ໄດ້ເດີນທາງໄປເຖິງ ບາຕາເວຍນະຄອນ ເພື່ອທຳການຄ້າຂາຍ ທ່ານເປັນຜູ້ທຳອິດຈາກຊາດຂອງທ່ານເຊິ່ງຜູ້ຄົນບໍ່ມີໃຜເຄີຍເຫັນມາກ່ອນ. ທ່ານຜູ້ນັ້ນໄດ້ຮັບການຕ້ອນຮັບຈາກນາຍພົນພວກເຮົາດ້ວຍຄວາມດີຄວາມຊອບ ທີ່ທ່ານເຄີຍປະຕິບັດມາກັບ

ແຂກຕ່າງປະເທດ ກໍໃນໂອກາດນັ້ນເອງ ທີ່ທ່ານນາຍພິນຄິດວ່າ ໄດ້ຫລາຍປີມາ ແລ້ວທີ່ຊາວໂຮນລັງໄດ້ທຳການຄ້າຂາຍຢູ່ປະເທດສະຫຍາມ ແລະ ປະເທດກຳພູຊາ ກັບເພື່ອນຮ່ວມຊາດຂອງພວກທ່ານ ຈຶ່ງຕັດສິນໃຈສົ່ງເຄື່ອງບັນນາການອັນມະຫາສານ ຖວາຍອົງກະສັດແຫ່ງລາວ ແລະ ຊຽນສານທູນພະອົງເພື່ອຜູກສາຍສຳພັນທະໄມຕີຢ່າງໃກ້ຊິດ. "ທ່ານ ເຕວິນຍາ ກ່າວຕໍ່ພວກເຮົາດ້ວຍຖ້ອຍທຳນອງນີ້ມນວນອ່ອນຫວານວ່າ ທ່ານເອງກໍໄດ້ຮູ້ຈັກລາຍລະອຽດ ກ່ຽວກັບເລື່ອງນີ້ຈາກມີນທິບເອງ ແລະ ພະມະຫາກະສັດເອງກໍຊົງປີ້ມປິຕິທີ່ເຫັນວ່າທ່ານນາຍພິນ ເຊິ່ງແນ່ນອນຫາຜູ້ທຽບທັນໄດ້ຍາກນັ້ນໄດ້ອິດສາທ່ອມຕົວລົງຂະໜາດນັ້ນ (38).

ພວກເຮົາໄດ້ຈາກກັນໄປພາຍຫລັງທີ່ໄດ້ໂອ້ລົມກັນເປັນເວລາສັ້ນໆ. ຮຸ່ງມື້ໃໝ່ມາ ພວກເຮົາກໍໄດ້ທຳການຂົນຂອງອອກຈາກເຮືອ. ແຜ່ນແພຫລາຍມັດຖືກເນົ່າເປື່ອຍ ຫລື ຂາດກິດຍ້ອນຖືກນ້ຳປຽກຊຸ່ມ ເມື່ອເຫັນເຂົ້າຂອງທີ່ພວກເຮົາຈະເອົາເມືອຖວາຍພະມະຫາກະສັດ ບັນດາທີ່ເປິກສາຂອງພະອົງກໍຂໍໃຫ້ພວກເຮົາເພີ້ມເຄື່ອງເຫລົ່ານັ້ນໃຫ້ຫລາຍຂຶ້ນກ່ວານັ້ນແດ່ ເພາະພວກເພີ່ນເຫັນວ່າ ມັນຈະເປັນການພໍພະໄທແກ່ພະເຈົ້າມະຫາຊີວິດເອງ ພ້ອມທັງເປັນປະໂຫຍດຢ່າງໃຫຍ່ຫລວງໃຫ້ແກ່ບໍລິສັດແຄ້ວນອິນເດັຽທະວັນເອງ. ພວກເຮົາໄດ້ຕົກລົງເພີ່ມເຄື່ອງບັນນາການພວກເຮົາດ້ວຍກ້ອງຊ່ອງທາງໄກ ທີ່ມີປອກເງິນສະຫລັກຜ້າເຫລືອງ ແລະ ຊຽວອີກ 3 ໄມ້ ອັນນັບວ່າເປັນຜ້າສີສຳລັບຜູ້ຄົນໃນພະຣາຊະວັງສະເພາະ (39) ແລະ ຜ້າ "ດາມັດ" ອີກ 4 ໄມ້. ນອກຈາກນັ້ນແລ້ວແຕ່ລະຄົນໃນໝູ່ພວກເຮົາຍັງມີຂອງຕ້ອນສ່ວນຕົວໃຜມັນຖວາຍພະອົງອີກ. ທ່ານພໍ່ຄ້າໄດ້ໃຫ້ຜ້າ "ດາມັດ" ສີນ້ຳຕານຈັບໄໝມຄຳໜຶ່ງໄມ້ ສ່ວນທ່ານຜູ້ຊ່ອຍເຊັ່ນ ທ່ານ ໂກຍເຢ ທ່ານອຸຍແບກ ບູເດີວິນສ ແລະ ໝໍຜ່າຕັດໃຫ້ຜ້າ "ດາມັດ" ຄົນລະຜືນ.

ວັນທີ່ 8 ທ່ານ ເຕວິນຍາຕາຫອມ ໄດ້ມາສຳຫລວດເບິ່ງເຄື່ອງບັນນາການດັ່ງກ່າວດ້ວຍຕົວທ່ານເອງ. ທ່ານເວົ້າຕໍ່ພວກເຮົາວ່າ ເພື່ອໃຫ້ຄວາມພໍໃຈແກ່ ທ່ານນາຍພິນ ພະມະຫາຣາຊາ ໄດ້ຮັບສັ່ງຄົນເຂົ້າເລິກໄປພາຍໃນປະເທດ ເພື່ອຫາຊື້ນວດ ແລະຍານ. ແຕ່ວ່າຢ່າງໜ້ອຍຕ້ອງກິນເວລາເຖິງ 40 ມື້ ຈຶ່ງຈະກັບໄດ້ ຂະນະດຽວກັນນັ້ນຂ້າຣາຊະການຊັ້ນຜູ້ໃຫຍ່ ທ່ານນັ້ນ ຍັງໄດ້ໃຫ້ເຂົານຳເອົາເຂົ້າ 12 ບຸງ ບີຢັງ(40) ເຊິ່ງເທົ່າກັບ 10 ມາເອດສ(41) ມາໃຫ້ຄະນະພວກເຮົາດ້ວຍ.ການໃຫ້ການຕ້ອນຮັບແບບນີ້ເປັນການຍົກຖານະ ຄວາມສຳຄັນຂອງພວກເຮົາຂຶ້ນບໍ່

ໜ້ອຍ ໂດຍສະເພາະຕໍ່ໜ້າ ພວກພໍ່ຄ້າມໍຣ ແລະ ສະຫຍາມທີ່ໄດ້ນຳເອົາເຄື່ອງນຸ່ງຂອງຖື ມາຂາຍໃຫ້ເຈົ້າມະຫາຊີວິດລາວ ໃນອັດຕາປີລະປະມານ 4 ໝື່ນຊຸດ. ພວກເຮົາໄດ້ມອບ 2 ເບຕີ(24) ແວ່ນ 1 ອັນ ແລະ ເຈັຽອອນນິສສີແດງ 1 ຜືນ ໃຫ້ແກ່ ເຕວິນຍາ ລັງຊັນ ຕອນແລງມາພະນະທ່ານ ໄດ້ມາເຕືອນໄວ້ວ່າ ມື້ອື່ນຈະໄດ້ເຂົ້າເຝົ້າເຈົ້າມະຫາກະສັດ ຢູ່ໃນບ່ອນຫ່າງຈາກຕົວເມືອງໄປ ໂດຍໃຊ້ເວລາເດີນທາງ 15 ນາທີ ພະນະທ່ານຍັງໄດ້ແນະນຳໃຫ້ຮູ້ພິທີກຳທີ່ພວກເຮົາຕ້ອງປະຕິບັດໃນເວລາ ເຂົ້າເຝົ້າພະອົງເຊັ່ນ ຕ້ອງສະແດງຄວາມຄາລະວະພະອົງດ້ວຍວິທີໄຕ້ທຽນຢູ່ໃນມືເບື້ອງລະເທື່ມ ແລ້ວກົ້ມຂາບຫົວແປະພື້ນ 3 ເທື່ອ. ພວກເຮົາກໍໃຫ້ຄຳໝັ້ນວ່າຈະປະຕິບັດດັ່ງນັ້ນ. ຈາກນັ້ນ ເຕວິນຍາ ຍັງຖາມພວກເຮົາເຖິງສະຖານທີ່ຕັ້ງ ແລະ ພະລັງອຳນາດຂອງບໍລິສັດແຄ້ວນອິເດັຽອານານິຄົມ ພວກເຮົາດ້ວຍ. ພວກເຮົາກໍໄດ້ໃຫ້ຄຳຕອບໄປວ່າ ພວກເຮົາມີອຳນາດຢູ່ໃນປະມານ 20 ຫົວເມືອງ ເຊິ່ງຢູ່ໃນການຄອບຄອງຂອງພວກເຮົາ. ຄຳຕອບດັ່ງກ່າວນີ້ ເຮັດໃຫ້ພະນະທ່ານປະຫລາດໃຈບໍ່ໜ້ອຍ ເຊິ່ງຕອນແລງມາ ພະນະທ່ານກໍໄດ້ມີອາດຍາໃຫ້ສິ່ງໄກ່ ແລະ ໝາກໄມ້ຕ່າງໆມາໃຫ້ພວກເຮົາ.

ວັນທີ 16 ຕອນເຊົ້າ ຊ້າງທີກໂຕໄດ້ມາຮັບຈົດໝາຍຂອງທ່ານ ນາຍພິນ ເຊິ່ງເອົາບັນຈຸໄວ້ບົນຫລັງຊ້າງໂຕໜຶ່ງໃນພາຄຳ ແລ້ວພວກເຮົາກໍຂຶ້ນຂີ່ຫລັງຊ້າງ ຄົນລະໂຕ ພວກເຮົາໄດ້ເດີນຜ່ານຕໍ່ໜ້າພະຣາຊະວັງ ລະຫວ່າງສອງຝາກຂ້າງແຖວທະຫານແລ້ວພວກເຮົາກໍໄດ້ໄປເຖິງປະຕູວຽງທາງດ້ານຊີນນະບິດ (ດ້ານນອກ) ຂະນະນັ້ນພວກເຮົາໄດ້ເຫັນວ່າ ຕົວວຽງຖືກອ້ອມຮອບດ້ວຍກຳແພງຫີນສີແດງສູງຂຶ້ນກ່ວາພວກເຮົາທີ່ຢູ່ບົນຫລັງຊ້າງ ເທົ່າເຄິ່ງໜຶ່ງຂອງຄວາມສູງຂອງຄົນຢືນ. ຢູ່ຕີນກຳແພງມີຄອງນ້ຳເປິະເປື້ອນ ແລະ ຫຍ້າ. ລວງກ້ວາງຂອງມັນຈະແມ່ນສູງປະມານຊົ່ວລູກປືນສັ້ນເຖິງ. ບ່ອນທີ່ຈະເຂົ້າເຝົ້າພະເຈົ້າມະຫາຊີວິດ ເພື່ອຈະຖວາຍສານນັ້ນ ຕັ້ງຢູ່ຫ່າງຈາກຕົວວຽງໄປປະມານ 1 ມິລລ໌(43) ພວກເຮົາໄດ້ພາກັນລົງຈາກຫລັງຊ້າງ ແລ້ວພວກເຮົາກໍໄດ້ໄປນັ່ງຄອຍ ການມາຮອດຂອງພະມະຫາກະສັດ ໃນຜາມປຸກຂຶ້ນສຳລັບໂອກາດນີ້. ຢູ່ອ້ອມຮອບພວກເຮົາກໍມີຄ້າຍຂອງພວກທະຫານ ມີຊ້າງ ມ້າ ຂອງຜູ້ຫລັກຜູ້ໃຫຍ່ແຫ່ງຣາຊະອານາຈັກ. ຈັ່ງແມ່ນມີບັນຍາກາດຂອງຝູງຄົນ ແລະ ມີສຽງອຶກກະທຶກຄຶກໂຄມ ຈົນພວກເຮົາເຊື່ອວ່າຕົກຢູ່ໃນບັນຍາກາດຂອງຄ້າຍແຫ່ງເຈົ້າຊາຍ ອໍຣອງ (ປະເທດນ້ອຍໜຶ່ງໃນອາ

ຝຼີກກາໃຕ້) ພວກເຮົາພາກັນລໍໄດ້ປະມານຊົ່ວໂມງໜຶ່ງ ແລ້ວພະມະຫາກະສັດກໍ່ທີ່ງຫລັງຊ້າງ ມາໂຕໜຶ່ງ. ພວກເຮົາໄດ້ຮີບອອກຈາກຜາມພັກຂອງພວກເຮົາ ເພື່ອໄປນັ່ງຊຸເຂົ່າຂາບຄາລະວະພະອົງເວລາພະອົງຜ່ານມາ. ພະມະຫາກະສັດເປັນຄົນໜຸ່ມ ອາຍຸ 23 ປີ ພະອົງເປັນຄົນຮຽບຮ້ອຍ ແລະ ມີບັນດາທີ່ເປີກສາຜູ້ແຫລມຄົມເຊິ່ງເພິ່ນຮຽກວ່າ ເຕວິນຍາ ຫຸ້ມລ້ອມຢູ່ຫລາຍທ່ານໃນນັ້ນ ທ່ານໜຶ່ງຮັບຜິດຊອບອົງການຕຳຫລວດ ຜູ້ໜຶ່ງອີກຮັບດ້ານທຳມະການ ເຫລືອນັ້ນກໍ່ແບ່ງກັນຮັບດ້ານການຄ້າ ການທະຫານ ແລະ ອື່ນໆ. ເບື້ອງຫລັງອົງກະສັດ ມີທະຫານຍ່າງ ຖືປືນ ແລະ ຫອກ 300 ຄົນ. ນອກນັ້ນກໍ່ແມ່ນຝູງຊ້າງທີ່ມີຜູ້ຄົນຖືຫອກອາວຸດ ຂີ່ມາ ຕໍ່ຈາກນັ້ນກໍ່ແມ່ນນັກດົນຕີ ມີທະຫານ 200 ຄົນຕາມຫລັງ. ແຖວສຸດທ້າຍແມ່ນຊ້າງ 16 ໂຕ ເຊິ່ງມີບັນດາ ມະເຫສີຂອງພະມະຫາກະສັດຂີ່ມາ ເປັນການປິດຂະບວນແຫ່ ຫລັງການແຫ່ນັ້ນແລ້ວ ພວກເຮົາກໍ່ກັບເຂົ້າໄປນັ່ງໃນຕູບຂອງພວກເຮົາຕາມເດີມ. ພ້ອມກັນນັ້ນ ພະມະຫາກະສັດກໍ່ໄດ້ຊົງສັ່ງອາຫານເປົາມາສູ່ພວກເຮົາ 8 ພາດ້ວຍກັນ.

ເມື່ອເຖິງ 4 ໂມງແລງ ພວກເຮົາໄດ້ຖືກຮຽກໃຫ້ໄປປະກົດຕົວ ຢູ່ຕໍ່ໜ້າມະຫາກະສັດ ພວກເຮົາໄດ້ພາກັນຍ່າງຜ່ານ ເຂົ້າໄປໃນເດີ່ນກ້ວາງ ຂວາງແຫ່ງໜຶ່ງ ເຊິ່ງໃນບ່ອນໃຈກາງມີຫາດຫລັ່ງມສູງ ຕັ້ງຢູ່ ແລະ ອ້ອມຮອບດ້ວຍກຳແພງຫີນ ເຊິ່ງມີຮູປືນເຈາະໄວ້ຢ່າງຫລວງຫລາຍ(44) ຫາດດັ່ງກ່າວນັ້ນ ໂອບດ້ວຍແຜ່ນຄຳທັງໝົດ ເພິ່ນເວົ້າວ່າມີນ້ຳໜັກຢູ່ດ້ວຍກັນ ເຖິງພັນລີວ (ຫົວໜ່ວຍວັດແທກເກົ່າຂອງອັງກິດ) ຄົນລາວທຸກຄົນທີ່ມາສະຖາທີ່ນີ້ຕ້ອງໄຕ້ທູບທຽນໃນມື ເພື່ອຄາລະວະຂາບໄຫວ້ສະຖານທີ່ດັ່ງກ່າວ.

ພາຍຫລັງທີ່ພວກເຮົາໄດ້ນັ່ງຄອຍໄລຍະໜຶ່ງໃນບໍລິເວນຫາດດັ່ງກ່າວແລ້ວເພິ່ນກໍ່ໄດ້ນຳເອົາພວກເຮົາອອກໄປທາງອີກປະຕູໜຶ່ງ ເຊິ່ງໄປປ່ອງໃສ່ບ່ອນທີ່ພະເຈົ້າມະຫາຊີວິດຊົງສະຖິດຢູ່. ພວກເຮົາຍ່າງຕາມຫລັງຂອງຜູ້ທີ່ຖືເຄື່ອງບັນນາການຂອງພວກເຮົາ ເມື່ອໄປເຖິງໄລຍະ16 ບາດກ້າວ ຫ່າງຈາກພະເຈົ້າມະຫາຊີວິດແລ້ວ ພວກເຮົາກໍ່ພາກັນເອົາທຽນມາໄຕ້ຜູ້ລະສອງເຫລັ້ມ ແລ້ວພວກເຮົາກໍ່ນັ່ງຊຸເຂົ່າລົງໃສ່ສາດ ເອົາມືທັງສອງນົບ ແລະ ປະຕິບເປືອຍເໝືອນດັ່ງຂະບວນແຫ່ຢູ່ນະຄອນອັງແວນ(45) ພວກເຮົາກົ້ມຂາບລົງ 3 ເທື່ອຄືດັ່ງ ເຕວິນຍາ ລັ່ງຂັ້ນໄດ້ບອກພວກເຮົາໄວ້. ພະບາດສົມເດັດພະເຈົ້າມະຫາຊີວິດ ເຊິ່ງອ້ອມຮອບດ້ວຍ

ເສນາອາມາດ ຂອງພະອົງສະຖິດຢູ່ໃນໂບດ ເຊິ່ງມີພະເຈົ້າໃຫຍ່ຢູ່ອົງດຽວ. ເພິ່ນ
ໄດ້ອ່ານສານຈາກ ທ່ານນາຍພິນ ວັນດີເມັນ ສູ່ພະບາດສົມເດັດພະເຈົ້າມະຫາຊີ
ວິດຟັງ ແລ້ວພວກເຮົາກໍກົ້ມຂາບອີກເທື່ອໜຶ່ງ. ຫລັງຈາກນັ້ນພວກອາມາດກໍມາ
ເອົາຫຽນຈາກມືຂອງພວກເຮົາໄປ ແລະ ພວກເຮົາກໍໄດ້ຍ່າງເຂົ້າໄປ 3-4 ບາດ
ກ້າວແລ້ວກໍລົງນັ່ງຊຸເຂົ່າກັບພື້ນອີກ. ກະສັດໄດ້ຕັດສັ່ງໃຫ້ພວກເຮົາ ຫຍັບເຂົ້າໄປ
ໃກ້ໆອີກ ແລະ ໃຫ້ ເຂົ້າໄປນັ່ງຢູ່ສາດພາຍໃນສົມ ພວກເຮົາໄດ້ສະແດງຄວາມຄາ
ລະວະພະອົງອີກ ແລ້ວກໍຄານຫຍັບເຂົ້າໄປນັ່ງໃກ້ ຫ່າງຈາກພະອົງ 7-8 ກ້າວ
ພະອົງໄດ້ຊົງຖາມພວກເຮົາ ໂດຍຜ່ານ ເຕວິນຍາ ທ່ານ ໜຶ່ງ ເຖິງສຸຂະພາບພະ
ລານາໄມຂອງ ທ່ານ ນາຍພິນ ແລ້ວພະອົງກໍຊົງອະທິບາຍຕໍ່ພວກເຮົາວ່າ ພະອົງ
ມີຄວາມປື້ມພະໄທເຖິງຂະໜາດໃດ ທີ່ສະເດັດ (ນາຍພິນ ວັນດີເມັນ) ໄດ້ສົ່ງ
ພວກເຮົາມາຂາບບັງຄົມພະອົງ ຈາກໄລຍະຫ່າງໄກແສນໄກ ພະອົງມີຄວາມປະ
ສົງຢາກຈະສົ່ງຣາຊສະທູດ ທ່ານໜຶ່ງເດີນໄປກັບພວກເຮົາ ເພື່ອສືບຕໍ່ການພົວ
ພັນ ກັບທ່ານນາຍພິນ ເຊິ່ງພະອົງຢາກໃຫ້ມີຂຶ້ນເລື້ອຍໆ ແລະ ເປັນປົກະຕິ ຈະ
ແມ່ນກໍລະນີໃດກໍຕາມ ຊາວໂຮນລັງ ຈະໄດ້ຮັບການຕ້ອນຮັບຢ່າງດີຈາກພະອົງ
ເອງ. ພວກເຮົາໄດ້ສະແດງຄວາມຂອບພະໄທຢ່າງລົ້ນເຫລືອຕໍ່ພະອົງໃນຄວາມຮູ້
ສຶກທີ່ພະອົງຊົງມີຕໍ່ພວກເຮົາ ເຊິ່ງແມ່ນຄວາມຮູ້ສຶກອັນນີ້ ຈະບໍ່ມີຫຍັງເລີດໄປອີກ
ສຳຫລັບທ່ານນາຍພິນ ແລະພວກເຮົາກໍໄດ້ໃຫ້ຄຳຮັບຮອງແກ່ພະອົງວ່າ ສຳຫລັບ
ທ່ານນາຍພິນແລ້ວ ຈະບໍ່ມີຈຸດປະສົງອື່ນໃດ ນອກຈາກຄວາມປະສົງຢາກຜູກ
ສາຍສຳພັນທະໄມຕີ ແລະ ມິດຕະພາບທີ່ໄດ້ເລີ່ມຂຶ້ນແລ້ວນີ້ ໃຫ້ແໜ້ນແຟ້ນຂຶ້ນ
ເລື້ອຍໆ. ພາຍຫລັງທີ່ ເຕວິນຍາ ໄດ້ຮັບການຂາບບັງຄົມທູນຄຳຕອບຈາກພວກ
ເຮົາແລ້ວພະອົງກໍຊົງໃຫ້ພວກເຮົາຂາບລາ ໂດຍທີ່ໄດ້ຊົງມີພະຣາຊະອົງການ ໃຫ້
ພວກເຮົານຳເອົາຄວາມຄຳນັບຂອງພະອົງໄປຍັງ ທ່ານ ນາຍພິນ ເວລາກັບບາຕາ
ເວັຽນະຄອນຂອງພວກເຮົາ ພ້ອມທັງໄດ້ຊົງອວຍພອນໃຫ້ທ່ານນາຍພິນມີຊີວິດ
ອັນຍືນຍາວ ແລະມີຄວາມສຸກ ແລ້ວພວກເຮົາກໍໄດ້ຂໍຖວາຍພອນອັນປະເສີດແດ່
ພະອົງພ້ອມທັງເນັ້ນວ່າ ພະອົງຈົ່ງຊົງມີພະປີຊາສາມາດ ປົກຄອງປະເທດຊາດ
ບ້ານເມືອງຂອງພະອົງເອງໃຫ້ມີຄວາມສຸກຊຸ່ມກຸ່ມເຢັນ ເປັນການເທີດກຽດສັກສີ
ອັນສູງເດັ່ນແດ່ພະອົງ ແລະ ໃຫ້ເປັນທີ່ເກງຂາມແກ່ສັດຕູຂອງພະອົງ.

ຈາກນັ້ນຕໍ່ມາບໍ່ພໍ່ບີດ ໃນຂະທີ່ພວກເຮົາກໍາລັງນັ່ງຢູ່ຕໍ່ໜ້າພະບາດສົມເດັດພະເຈົ້າມະຫາຊີວິດຢູ່ນັ້ນ ເພິ່ນກໍໄດ້ມອບຂັນຄໍາ ທີ່ມີນ້ຳໜັກໜຶ່ງຮ້ອຍ(46) ອາພອນລາວທີ່ມີສີສັນ ຫລາກຫລາຍ ແລະ ບາເຈ ແດງຜືນໜຶ່ງ (ບາເຈ ມາຈາກບາຕິກາ ພາສາມາເລ ເຊິ່ງແມ່ນ ຜ້າຊຽນຍ້ອມສີ) ຜູ້ຊ່ອຍສອງທ່ານໄດ້ຮັບອາພອນຄົນລະຜືນ ຜ້າບ່ຽງ ແລະ ໂອຄໍາ ເຊິ່ງມີນ້ຳໜັກເຄິ່ງຮ້ອຍ ຄົນລະອັນ. ນາຍຫມໍຜ່າຕັດໄດ້ຮັບອາພອນໄຫມສີແດງ ແລະຜ້າບ່ຽງໜຶ່ງຜືນ ນາຍພາສາອິນຊີລັນນັງໄດ້ຮັບຜ້າແດງສອງຜືນ ຂອງຕ້ອນທີ່ມອບໃຫ້ຊາວໂຮນລັງນັ້ນຖືວ່າມີຄວາມສໍາຄັນຫຼາຍໃນປະເທດດັ່ງກ່າວ. ທູດຜູ້ຫລ້າສຸດ ຂອງສະຫຍາມໄດ້ຮັບພຽງແຕ່ຂອງຕ້ອນເປັນເງິນທໍ່ນັ້ນ ແລະ ເວລາມາເຂົ້າເຝົ້າ ເພິ່ນກໍສິ່ງຊ້າງພຽງແຕ່ສາມໂຕທໍ່ນັ້ນ ໄປຮັບແທນທີ່ຈະແມ່ນ ສິກໂຕ.

ພາຍຫລັງທີ່ໄດ້ມອບຂອງຕ້ອນໃຫ້ແກ່ພວກເຮົາແລ້ວ ພະເຈົ້າແຜ່ນດິນ ຍັງໄດ້ຊົງບອກໃຫ້ອາມາດ ແຈ້ງໃຫ້ພວກເຮົາຊາບວ່າ ພະອົງໄດ້ ກຽມການສະແດງໃຫ້ພວກເຮົາຊົມ ພ້ອມທັງຖາມຄວາມເຫັນຈາກ ພວກເຮົາວ່າ ພວກເຮົາຢາກຢູ່ຊົມບໍ່ຫລືຢາກກັບໄປພັກຜ່ອນພວກເຮົາໄດ້ຂາບທູນວ່າ ແກ່ພວກຂ້າພະບາດທັງຫລາຍແລ້ວ ພວກຂ້າພະບາດມີຄວາມປິ້ມປິຕິຈະຮັບຊົມ. ທັນທີທັນໃດນັ້ນ ນັກສູ້ທັງຫລາຍກໍເຂົ້າມາເວທີ ພວກເຂົາໄດ້ຕີໜ້າກັນດ້ວຍລວດລາຍຈີນອີກບໍ່ດົນນ້ຳເຫື່ອແດງກໍໄຫລອອກມາ ຈໍານວນໜຶ່ງ ຖືກມັດແຂນ ແລະ ມັດມີແໜ້ນ ແລ້ວໂດດລົງມາແຕ່ຮ້ານ ໄມ້ປ່ອງສູງໆ ແລ້ວສູ້ກັບນັກສູ້ຄົນອື່ນໆທັນທີ ອີກຈັກໜ່ອຍກໍມີການສະແດງແບບຈີນ ຄົນຈໍານວນໜຶ່ງແປງໂຕເປັນເສືອ ແລະ ຄົນອື່ນໆເປັນສັດ ໃນຕອນຈົບ ການສະແດງນັກສະແດງແຕ່ລະຄົນ ໄດ້ຮັບເສື້ອຜ້າເປັນຂອງຂວັນ. ຕອນກາງຄືນມາໃນໂອກາດນັ້ນ ພວກເພິ່ນໄດ້ເອົາສາດມາປູຕາມເວທີ ແລ້ວກໍໄຕ້ປະທີບຂຶ້ນຫລາຍດວງຮຸ່ງໄປຫມົດ. ສີ່ອົງໃນຈໍານວນມະເຫສີສຸດທ້າຍຂອງພະອົງກະສັດນຸ່ງເຄື່ອງ ແບບປະຫລາດ ພາກັນມາລີລາຟ້ອນໃຫ້ຊົມ ເຊິ່ງກິນເວລາປະມານ ໜຶ່ງຊົ່ວໂມງ ມະເຫສີແຕ່ລະອົງໄດ້ຮັບຜ້າ ບາເຈ ຂາວງາມ ຄົນລະຜືນເປັນຂອງຂວັນ ຈາກນັ້ນມາມີຍິງຜູ້ດຽວເຂົ້າມາລີລາຟ້ອນ ເຊິ່ງກິນເວລາ ເຄິ່ງຊົ່ວໂມງ. ມີຂອງນາງຖືຫາງນົກຍູງ ຟ້ອນເບື້ອງລະຫາງ. ການສະແດງໄດ້ສິ້ນສຸດລົງດ້ວຍການຈູດບັ້ງໄຟດອກ.

ພວກເຮົາໄດ້ສະແດງຄວາມຄາລະວະ ແລ້ວພວກເຮົາກໍຂໍອຳລາພະອົງ ໄປສູ່ຜາມພັກຂອງພວກເຮົາ ພ້ອມດ້ວຍ ເຕວິນຍາ ຕາຫອມ ເຊິ່ງເປັນຜູ້ພາພວກເຮົາໄປ. ພວກເຮົາໄດ້ພັກແຮມຄືນນະທີ່ນັ້ນ. ອົງກະສັດພ້ອມດ້ວຍເສນາອາມາດທັງຫລາຍ ກໍພາກັນພັກແຮມຄືນຢູ່ນອກພະຣາຊະວັງເຊັ່ນກັນ ທ່ານ ເຕວິນຍາ ເວົ້າຕໍ່ພວກເຮົາວ່າ ເຫິງມາແລ້ວທີ່ບໍ່ເຫັນພະບາດສົມເດັດພະເຈົ້າມະຫາຊີວິດເພິ່ນຊົງໃຫ້ກຽດສູງປານນີ້ ແກ່ທູດຕ່າງປະເທດ ແລະ ກໍບໍ່ມີຈັກເທື່ອເລີຍທີ່ພະອົງຈະໃຫ້ຄຳສັ່ງເປັນຄັ້ງທີ່ສາມແກ່ຜູ້ໃດ ໃຫ້ຫຍັບເຂົ້າໃກ້ພະອົງ ແລະ ນັ່ງຢູ່ພາຍໃນສົມ. ອະຄັນຕຸກະ ຈາກປະເທດສະຫຍາມ ເຊິ່ງສັງຫາກໍກັບໄປໄດ້ສອງເດືອນແລ້ວ ຍັງໄດ້ນັ່ງຢູ່ພື້ນດິນຂ້າງນອກ ເພິ່ນໄດ້ໃຫ້ການສັ່ງລາດ້ວຍພະກາຖາໜ້ອຍກ່ວານີ້ສອງເທື່ອ. ເມື່ອເຖິງສິບໂມງເຄິ່ງຂອງມື້ໃຫມ່ມາ ເຕວິນຍາທ່ານໜຶ່ງ ໄດ້ມາຫາພວກເຮົາໃນນາມພະບາດສົມເດັດ ເພື່ອໂອ້ລົມກັບພວກເຮົາ ກ່ອນເວລາທີ່ພວກເຮົາຈິຈາກໄປ. ຂະນະທີ່ພະບາດສົມເດັດເຈົ້າມະຫາຊີວິດ ຍັງບໍ່ທັນໄດ້ກຽມຂອງຕ້ອນຫຍັງໄດ້ເລີຍ ອັນພໍຈະມອບໃຫ້ ທ່ານ ນາຍພົນຢ່າງສົມກຽດ ຈຶ່ງຂໍຮ້ອງໃຫ້ພວກເຮົາໂຈະການເດີນທາງຂາກັບຂອງພວກເຮົາໄວ້ໄລຍະໜຶ່ງກ່ອນ ພວກເຮົາປະຕິເສດເພາະວ່າບໍ່ສາມາດຢູ່ເກີນ 20 ວັນໄດ້ ບໍ່ດັ່ງນັ້ນນ້ຳກໍຈະແຫ້ງລົງໂພດອັນຈະເຮັດໃຫ້ການລ່ອງເຮືອຂາກັບຂອງພວກເຮົາລຳບາກ (47).

ວັນທີ່ 17 ໃນຕອນເຊົ້າຕູ່ ເພິ່ນໄດ້ເອົາຊ້າງສີ່ໂຕມາຮັບ ພວກເຮົາກັບສະຖານທີ່ພັກ ຕອນບ່າຍມາລຸງຂອງພະມະຫາກະສັດ ໄດ້ຮຽກຕົວນາຍພາສາ ອິນສີ ລັນນັງໄປພົບເພື່ອຈະໃຫ້ບອກວິທີການໃຊ້ກ້ອງຊ່ອງ ແລະຖາມວ່າ ດາບທີ່ໄດ້ຖວາຍແດ່ພະມະຫາກະສັດນັ້ນ ຈະສາມາດເບັດມັນໃຫ້ຊື່ກວ່າເກົ່າໄດ້ບໍ່ ປືນສັ້ນທີ່ໄດ້ເອົາຖວາຍແດ່ອົງພະບາດສົມເດັດນັ້ນ ເມື່ອຍິງເບິ່ງແລ້ວເລົາເລີຍແຕກ. ຕໍ່ບັນຫາຕ່າງໆເຫລົ່ານີ້ ນາຍພາສາອິນສີ ລັນນັງໄດ້ຕອບໄປວ່າ: ດາບນັ້ນຖ້າຈະເບັດໃຫ້ຊື່ກໍຕ້ອງສຳຫລຸດແນ່ນອນ ສ່ວນເລົາປືນນັ້ນ ພວກກຸຍນາ (ໂກແຊັງຊິນ) ສາມາດເຮັດເລົາໃຫມ່ໃຫ້ໄດ້ ສ່ວນກ້ອງຊ່ອງທາງໄກນັ້ນ ໄດ້ນຳເອົາຄວາມປື້ມພະໄທ ມາໃຫ້ແກ່ພະມະຫາກະສັດ: "ເຮົາພະອົງກຳລັງສ້າງ ທາດອີກລູກໜຶ່ງ ເຊິ່ງປັດຈຸບັນໃກ້ຈະສຳເລັດແລ້ວ. ພວກເຈົ້າມາພໍດີຖືກຍາມ ພ້ອມທັງໄດ້ມອບອຸປະກອນອັນຊ່ອຍໃຫ້ເຮົາພະອົງມອງເຫັນໄດ້ໄກອັນນີ້ໃຫ້ເຮົາພະອົງ. ເຮົາພະອົງຖືວ່າ ເຫດການບັງເອີນຄັ້ງນີ້ ເປັນລາງບອກທີ່ດີ ".

ວັນທີ່ 20 ພະຈິກ ພວກເຮົາໄດ້ຮັບເຊີນຈາກພະມະຫາກະສັດ ໃຫ້ໄປຊົມການຈູດໄຟດອກຢູ່ນ້ຳ ທ່ານ ເຕວິນຍາຕາທອມ ໄດ້ມາຮັບເອົາພວກເຮົາໄປນຳຂະບວນຂອງໃນວັງ ພວກເຮົາໄດ້ມີທີ່ຢູ່ໃນຜາມໄຊແຫ່ງໜຶ່ງ ເຊິ່ງຕັ້ງຢູ່ແຄມນ້ຳ ແລ້ວເພິ່ນກໍ່ຍໍພາເຂົ້າທີ່ມີອາຫານຕ່າງໆ ມາໃຫ້ພວກເຮົາກິນ. ອີກປະມານໜຶ່ງຊົ່ວໂມງຈຶ່ງໄດ້ມີການປະກົດຕົວຂອງພະມະຫາກະສັດ ພະອົງຊົງສະຖິດບົນເກົ້າອີ້ຄຳແລ້ວໃຫ້ຄົນຫາມມາ ເມື່ອມາຮອດໄລຍະຫ່າງຈາກພວກເຮົາ ປະມານ 50 ບາດກ້າວ ພວກເຮົາກໍ່ພາກັນນ້ອມຄາລະວະພະອົງ. ຈາກນັ້ນພະອົງກໍ່ສະເດັດຂຶ້ນໄປຢູ່ບົນຮ້ານ ປິ່ນໜ້າລົງສູ່ແມ່ນ້ຳ(48) ຢູ່ກາງໄລຂອງແມ່ນ້ຳ ເພິ່ນໄດ້ສ້າງຮ່າງຮະຂຶ້ນດ້ວຍໄມ້ໄຜ່ ສູງລິບ ບໍ່ຕ່າງຫຍັງກັບຮ່າງຮະສ້າງຕຶກໃນນັ້ນຍັງມີເສົາກະໂດງແບບ ຄອນນິກແກ້ວນຳດ້ວຍ. ຈາກນັ້ນກໍ່ມີຄົນສີ່ຄົນຂຶ້ນໄປ ສະແດງຂີ້ໂກກ ຢ່າງປະຫລາດ ແລະອີກພິບຕາດຽວພວກເຂົາກໍ່ໂດດລົງນ້ຳ ສອງຄົນໂດດທາງໜ້າແລະອີກສອງຄົນໂດດທາງຫລັງອັນເຮັດໃຫ້ເຫັນແລ້ວ ຂົນຫົວລຸກ ຍ້ອນຢ້ານວ່າເຂົາຈະເຈັບປວດເວລາກະໂດດລົງ. ພວກເຂົາຫລິ້ນແບບນີ້ຕໍ່ໆໄປຈົນຄ້າຍແລງເມື່ອຄ່ຳມືດມາເຖິງແລ້ວ ກໍ່ມີເຮືອປະມານ 200 ລຳ ໄຕ້ປະທີບອ້ອມຮອບຕົວເຮືອທັງຫມົດແລ້ວ ປ່ອຍໄຫລລົງມາຕາມແມ່ນ້ຳ ນອກນັ້ນ ຢູ່ໃນກາງເຮືອເພິ່ນຍັງໄດ້ເຮັດ ຜາສາດປະດັບຫຽນແບບລະອຽດອ່ອນຕະການຕາ ອັນເຮັດໃຫ້ແມ່ນ້ຳທັງແມ່ປະກົດລຸກເປັນໄຟໄປຫມົດ.

ອີກສອງສາມມື້ຕໍ່ມາພວກເຮົາກໍ່ໄດ້ເຂົ້າໄປພົບຜູ້ໃຫຍ່ໃນພະຣາຊະວັງອີກ ເພື່ອຂໍຮ້ອງໃຫ້ຫຍໍ້ເວລາ ຂອງການກັບໄປຍັງກຳພູຊາ ແລະບາຕາເວັຽຂອງພວກເຮົາ. ຂອງຕ້ອນທີ່ເພິ່ນໄດ້ຈັດຫາໃຫ້ແກ່ພວກເຮົານັ້ນ ເຮັດໃຫ້ພວກເຮົາພໍໃຈຢ່າງໃຫຍ່ເຊິ່ງໃນນັ້ນມີ ມ້າເປີເຊັຍ(49) ຈຳນວນໜຶ່ງ ແລະ ເສື້ອເກາະເຄື່ອງໜຶ່ງ ແຕ່ວ່າເຕວິນຍາຕາທອມ ໄດ້ບອກຂ່າວໃຫ້ພວກເຮົາວ່າ ພວກເຮົາບໍ່ສາມາດກັບໄດ້ເທື່ອແລະ ຕ້ອງໄດ້ໄຈະການເດີນທາງໄວ້ໃນລະດູການໜ້າ ເພາະນ້ຳຕື້ນຫລາຍ ແລະແກ້ງຕ່າງໆກໍ່ເປັນອັນຕະລາຍ. ພະບາດສົມເດັດຢາກຈະແຕ່ງຕັ້ງຣາຊະທູດທ່ານໜຶ່ງເດີນທາງໄປນຳພວກເຮົາ ແລະພະອົງກໍ່ກຳລັງໃຫ້ເຂົາກຽມຂອງຕ້ອນໄວ້ຫຼາຍຢ່າງໃນນັ້ນ ມີຂັນຫມາກຄຳ (ສີຣິປີນັງ)(50) ເຊິ່ງຊັ່ງໄດ້ສອງກັດຕີ(51) ໂດຍບໍ່ນັບເຄື່ອງທີ່ຢູ່ໃນຂັນຫມາກນັ້ນ ນອກນັ້ນຍັງມີຍານຈຳນວນຫລວງຫລາຍທີ່ສຸດພ້ອມທັງຄັ່ງດ້ວຍ.

ຕະຫລອດເວລາທີ່ພວກເຮົາພັກຢູ່ທີ່ນັ້ນ ພວກເຮົາໄດ້ຖືກລ້ຽງດູ ດ້ວຍອາຫານທ້ອງຖິ່ນຂອງປະເທດນັ້ນ ພວກເຮົາພະຍາຍາມຈົນສຸດຂີດ ເພື່ອຈະຂັດຂວາງພວກສະຫຍາມ ທີ່ພະຍາຍາມ ຜູກຂາດການຄ້າ ແລະ ກອບໂກຍເອົາຄ່າ ແລະ ສິນຄ້າຕ່າງໆທັງໝົດ ພະບາດສົມເດັດພະເຈົ້າມະຫາຊີວິດ ເປັນຜູ້ເດັດດ່ຽວຍືນຢູ່ເບື້ອງການຄ້າເສລີ ແລະ ມີຄວາມໂກດເຄືອງຕໍ່ພວກສະຫຍາມ ທີ່ພະຍາຍາມຂັດຂວາງການຄ້າແບບນີ້ ພະອົງເຄີຍເວົ້າອອກມາເລື້ອຍໆວ່າ "ຈັ່ງແມ່ນເປັນເລື່ອງປະຫລາດນໍ ໃນປະເທດສະຫຍາມນັ້ນນາ ເພິ່ນຂັດຂວາງກະທັ່ງແນວທີ່ທຸກໆປະເທດໃນໂລກອະນຸຍາດໃຫ້ເຮັດໄດ້" ບັນດາພວກພໍ່ຄ້າລາວ ພາກັນຈົ່ມສ້າມຢ່າງຂົມຂື່ນຕໍ່ພວກເຮົາ ເຖິງການຫລອກລວງຕົວະຕົ້ມ ທີ່ພວກເຂົາໄດ້ຮັບໃນປະເທດສະຫຍາມ. ພວກເຂົາຖືກບັງຄັບໃຫ້ນໍາກວຽນສິນຄ້າຂອງພວກເຂົາເຂົ້າໄປຈອດໄວ້ໃນເຮືອນພິເສດ ເຊິ່ງເຕັມໄປດ້ວຍນັກສືບສອດແນມ ເພື່ອໃຫ້ຂາຍສິນຄ້າຂອງພວກເຂົາໃຫ້ແກ່ບາງຜູ້ມີອະພິສິດທີ່ນັ້ນ ເຂົາພວກນັ້ນໄດ້ຊື້ເອົາສິນຄ້າຊະນິດດີດ້ວຍລາຄາຖືກທີ່ສຸດເພື່ອຈະຂາຍອອກໃຫ້ໄດ້ກໍາໄລຫລາຍ ແລະ ຂາກັບກໍຂາຍແພ ທີ່ຊາວລາວຕ້ອງການນັ້ນ ໃຫ້ແກ່ພວກເຂົາແພງທີ່ສຸດ(52). ທີ່ປະເທດສະຫຍາມຍັງມີກວຽນ 100 ລໍາ ເຊິ່ງເປັນຂອງພວກກູລາ(ກະລາ) ຫລື ແຂກ ເຊິ່ງພວກເຂົາບໍ່ສາມາດຂາຍສິນຄ້າຂອງພວກເຂົາອອກໄດ້. ສະເພົາຫລາຍລໍາຈາກປະເທດພວກເຂົາ ໄດ້ຖືກຍຶດໂດຍພວກປ້ອກຕຸການ ຜູ້ເຊິ່ງສັງຫາເສັ້ງດິນແດນ ມາລະກາ ຂອງພວກເຂົາໄປ(53).

ກະສັດແຫ່ງລາວຊົງຕ້ອງການຢາກໄດ້ຫມາປະເພດໃຫຍ່ ຫມານໍ້ ນົກແກ້ວ "ກາກາໂຕແອ" ນົກກາງແກ "ອາຄຣາ" ກະຕ່າຍທຸກໆສີ "ອາລກາຕົ໊ວ" (?) ຍາວ ແລະ ກົວາງ ແລະຜ້າ ສະນິດແລບໆ. ທ່ານພໍ່ຄ້າ(54) ຮູ້ສຶກຫງ່ວມເຫງົາ ຕໍ່ການແກ່ເວລາຍືດຍາວ ແລະ ເມື່ອເຫັນວ່າ ທ່ານມີຄວາມເສົ້າໂສກດັ່ງນັ້ນ ຜູ້ໃຫຍ່ທ່ານໜຶ່ງໃນບັນດາ ເຕວິນຍາໃຫຍ່ທັງຫລາຍ ໄດ້ມາສະເໜີໃຫ້ທ່ານກິນຢາຂອງຊາວລາວ ແຕ່ວ່າ ເນື່ອງຈາກວ່າ ຢາດັ່ງກ່າວພຽງແຕ່ຫມາຍເຖິງການຟ້ອນ ຫລິ້ນແລະເຮັດໃຫ້ມີສຽງນັນເນືອງຢ່າງໜ້າຢ້ານຈັກໜ່ອຍ ເພື່ອຂັບໄລຜີສາງບາງຮ້າຍອອກທີ່ນັ້ນ ພວກເຮົາກໍເລີຍປະຕິເສດບໍ່ຍອມໃຊ້ ເຖິງວ່າຄວາມເຂັ້ມແຂງທາງຈິດໃຈຂອງພວກເຮົາຈະເຮັດໃຫ້ພວກຄົນທ້ອງຖິ່ນຍິ້ມຫົວອອກມາແດ່ກໍຕາມ ສ່ວນ ອົງກະສັດນັ້ນ ເມື່ອພະອົງຊົງເຫັນສະພາບໂສກເສົ້າເຫງົາໃຈ ຂອງທ່ານພໍ່ຄ້າ ພະອົງ

ກໍເລີຍຄິດສິງສານ ແລະ ອະນຸຍາດໃຫ້ເດີນທາງກັບໄດ້ ພະອິງຍັງໄດ້ຊົງ ກະລຸນາມອບແຫວນຄຳໃຫ້ພວກເຮົາຄົນລະວົງດ້ວຍ ສ່ວນເຕວິນຍາ ພະລະຂັນນັ້ນ ທ່ານຮູ້ສຶກພໍໃຈໃນຊຸດແຕ່ງກາຍ ຂອງຊາວໂຮນລັງຫລາຍ ກໍເລີຍແລກເອົາຊຸດແຕ່ງກາຍຢຸໂຣບຄົບຊຸດ ມີທັງເສື້ອ ຖົງຕີນ ແລະ ເກີບ ດ້ວຍຊຸດເຄື່ອງນຸ່ງເຮັດດ້ວຍໄຫມ ຂອງຊາວລາວພ້ອມດ້ວຍເສື້ອໄຫມ ແລະ ຖົງນວດທອມຖົງໜຶ່ງ.

ເຕວິນຍາກົມພັນ ເຊິ່ງເປັນຜູ້ມີຖານະສູງກ່ວາ ເພິ່ນຮອງລົງມາຈາກເຈົ້າຊີວິດໄດ້ພົບປະສົນທະນາກັບທ່ານພໍ່ຄ້າ ເຖິງເລື້ອງທີ່ມີຄວາມຂຸ່ນຫມອງໃຈກັນອັນໄດ້ມີມາສາມປີແລ້ວ ລະຫວ່າງກະສັດລາວ ແລະ ກະສັດກຳພູຊາ. ໄດ້ດົນນານມາແລ້ວທີ່ກະສັດຂອງສອງປະເທດນັ້ນ ໄດ້ສາບານກັນຢູ່ດອນ ສະແສນຄຳ ວ່າ ຈະຮັກສາສັນຕິພາບຕະຫລອດການ ລະຫວ່າງກັນ ຕະຫລອດຊົ່ວລູກຫລານເຫລັນຫລ້ອນຕໍ່ໆໄປຢ່າງເດັດຂາດ ກະສັດຂອງລາວບໍ່ໄດ້ເປັນຜູ້ທຳອິດທີ່ເຮັດໃຫ້ຜິດຄຳຫມັ້ນສັນຍາອັນສະຫງ່າຜ່າເຜີຍດັ່ງກ່າວ ມັນແມ່ນກະສັດແຫ່ງກຳພູຊາເອງ ທີ່ກ່ອນໜ້ານີ້ 3 ປີ ເປັນຜູ້ສ້າງມ່ານຫມອກ ລະຫວ່າງກັນຂຶ້ນມາ ດ້ວຍການສົ່ງສານທີ່ທາງຝ່າຍສຳພັນທະມິດຂອງຕົນຊົງສົ່ງມາຫູນນັ້ນ ກັບຄືນໂດຍບໍ່ໄດ້ອ່ານເນື້ອໃນຫຍັງເລີຍ ເຊິ່ງຊາວໂຮນລັງໃນຖານະທີ່ເປັນຄົນກາງ ອາດສາມາດກຳຈັດມັນອອກໄດ້ ເພື່ອໃຫ້ບັນຍາກາດແຈ້ງສະຫວ່າງຂຶ້ນ. ວິທີການປະພຶດແບບເຊິ່ງບໍ່ມີການໄຕ່ຕອງຫາເຫດຜົນເລີຍເຊັ່ນນັ້ນ ບໍ່ອະນຸຍາດໃຫ້ກະສັດລາວ ສົ່ງສຸພະອັກສອນໄປໃຫ້ເທື່ອທີ່ສອງ ໂດຍທີ່ບໍ່ແຕະຕ້ອງເຖິງກຽດຕິສັກຂອງພະອົງໄດ້. ພຽງແຕ່ຊາວໂຮນລັງແຈ້ງໃຫ້ຝ່າຍກຳພູຊາຮູ້ວ່າປະເທດແຫ່ງລາວບໍ່ໄດ້ຮຽກຮ້ອງຫຍັງຫລາຍໄປກ່ວາການຮັກສາສົນທິສັນຍາເກົ່າ ທີ່ມີມານຳກັນແລ້ວທໍ່ນັ້ນ ຄັນຖ້າກະສັດກຳພູຊາຕົກລົງເຫັນດີຕາມນີ້ ພະອົງກໍຈະສາມາດໄດ້ຮັບສຸພະລັກອັກສອນສະບັບໃຫມ່ ຈາກກະສັດລາວໂລດ ທ່ານພໍ່ຄ້າໄດ້ຮັບປາກວ່າ ຈະແຈ້ງພະປະສົງດັ່ງກ່າວໃຫ້ດີທີ່ສຸດ ແລ້ວອົງກະສັດກໍມອບຂອງຂັວນໄອກາດອອກເດີນທາງ(55) ເປັນຂັນຄຳ 150 ຟຣ໌ລົງ ຜ້າໄຫມໜຶ່ງຜືນ ຍານ ແລະ ຄັ່ງ 10 ເປົາ.

II

ການບັນຍາຍກ່ຽວກັບຣາຊະອານາຈັກແຫ່ງລາວ ໃນພາກອິນເດັຽຕາເວັນອອກ

ພວກເຮົາໄດ້ຈາກຣາຊະອານາຈັກລາວ ໄປໃນວັນທີ່ 24 ທັນວາ ປີ 1641 ແລະ ພາຍຫລັງທີ່ໄດ້ຄົ້ນຄ້ວາຢ່າງລະອຽດແລ້ວ ພວກເຮົາກໍໄດ້ພົບວ່າ ຣາຊະອານາຈັກດັ່ງກ່ານັ້ນ ຖືກອ້ອມຮອບດ້ວຍ 6 ຣາຊະອານາຈັກອື່ນ(56) ແລະ ຖືກໄຫລຜ່ານດ້ວຍແມ່ນ້ຳສາຍງາມສາຍໜຶ່ງ ເຊິ່ງມາຈາກປະເທດເປຖູ ໄຫລຜ່ານລົງໄປປະເທດກຳພູຊາອອກສູ່ທະເລ ເຊິ່ງກິນໄລຍະທາງ 250 ມິລລ໌ ຈາກພະສຳນັກຂອງກະສັດແຫ່ງລາວ(57). ທາງດ້ານຕາເວັນອອກຂອງຣາຊະອານາຈັກລາວນັ້ນແມ່ນ ປະເທດກຸ່ຍນາມ ແລະ ປະເທດຕົງແກງ ພວກຈີນມາຄ້າຂາຍຢູ່ ເມືອງຊຸແວ (59) ອັນເປັນສະຖານທີ່ ທີ່ມີຊື່ສຽງດົງດັງຕັ້ງຢູ່ໃກ້ກັບຊາຍແດນ ເປຖູ ສອງປີໃດເທື່ອໜຶ່ງ ພວກເຂົາໄດ້ໃຊ້ເຮືອລ່ອງມາໂດຍນຳເອົາຜ້າໄໝ ແລະນວດທອມມາຂາຍ. ປະເທດລາວເນັ່ງຢຽດຕັ້ງແຕ່ປະເທດຈີນລົງຮອດ ປະເທດເປຖູ ນຳດ້ວຍຈາກປະເທດລາວໄປສູ່ປະເທດສະຫຍາມນັ້ນການເດີນທາງລຳບາກຫລາຍ. ເພິ່ນໄດ້ເດີນທາງດ້ວຍສອງແບບເຊັ່ນ ບາງຄັ້ງກໍໃຊ້ກວຽນຄວາຍ ເຊິ່ງໃນກໍລະນີນີ້ການເດີນທາງຊ້າເຍື້ອນຫລາຍ ເນື່ອງຈາກແສງແດດຮ້ອນແຜດເຜົາ(56) ຈະຕ້ອງໄດ້ໂຄ້ງອ້ອມໜ່ວຍພູແຕ່ລະໜ່ວຍ ແລະ ເລາະຜ່ານໄປຕາມສາຍທາງທີ່ແຄບຮອມ ຈົນວ່າ ຖ້າເກີດມີອຸປະສັກເລັກໆນ້ອຍໆເກີດຂຶ້ນເຊັ່ນ ພົບສັດຮ້າຍກໍດີ ຫລື ກວຽນສຳຫລຸດກໍດີ ກໍບັງຄັບໃຫ້ຂະບວນກວຽນນັບຮ້ອຍລຳ ຕ້ອງຢຸດສະຫງັກຕາມໆກັນຫມົດ. ດັ່ງນັ້ນການເດີນທາງຂາໄປ ຈຶ່ງກິນເວລາບໍ່ຫລຸດ 5 ເດືອນ ສ່ວນຂາກັບນັ້ນ ລົດກໍຕ່າງເຄື່ອງເບົາແດ່ ໃຊ້ເວລາພຽງແຕ່ 3 ເດືອນທ່ານັ້ນ. ອີກແບບໜຶ່ງອີກ ການເດີນທາງແມ່ນການໃຊ້ຄວາຍຕ່າງທ່ານັ້ນ ຄືແຕ່ລະໂຕສາມາດຕ່າງໄດ້ 220 ກິດຕີ ການເດີນທາງແບບນີ້ ບໍ່ຈຳເປັນຈະຕ້ອງໂຄ້ງອ້ອມພູແຕ່ປະການໃດເລີຍ ເພິ່ນສາມາດລັດຊື່ໄປໄດ້ໂລດ ແລະ ກິນເວລາພຽງແຕ່ ເດືອນດຽວທ່ານັ້ນ ແຕ່ວ່ານັກເດີນທາງແຕ່ລະຄົນ ຕ້ອງມີຄວາຍແຮໄວ້ໂຕໜຶ່ງໄປນຳ ເພື່ອຕ່າງອາຫານການກິນ.

ພວກສະຫຍາມມາທີ່ປະເທດລາວທຸກໆປີ ແລະ ມາຈຳນວນຫລາຍ. ພວກເຂົາພາກັນເອົາເສື້ອຜ້າລາຍແຊກຂອງພວກເຂົາມາແລກເອົາຄຳ. ຊາວລາວ ເປັນນັກ

ນິຍົມຂອງງາມໆ ດັ່ງນັ້ນຈຶ່ງຮີບຍອມເອົາຄຳຂອງພວກເຂົາແລກເອົາໄວວາ. ບັນດາປ່າດົງພົງໄພພູຜາ ແລະ ໂງ່ນຫີນທີ່ຫ້ອມອ້ອມ ແລະທິບເຕັງແມ່ນ້ຳ ເຮັດໃຫ້ການຄົມມະນາຄົມລຳບາກ ລະຫວ່າງລາວກັບປະເທດເພື່ອນບ້ານ. ດັ່ງນີ້ເອງປະເທດດັ່ງກ່າວຈຶ່ງສະຫງົບດີ. ກ່ອນໜ້ານີ້ ສິບປີ ກໍມີກໍລະນີວິວາດກັນຂຶ້ນແດ່ກັບປະເທດເປຼູ ແຕ່ຊາວລາວກໍບໍ່ຫວັ່ນໄຫວຫຍັງ ເຖິງວ່າເປຼູ ຈະເຂັ້ມແຂງກໍຕາມ. ພວກທະຫານເປຼູ 30.000 ຄົນໄດ້ບຸກລຸກເຂົ້າມາທີ່ຊາຍແດນ ເຊິ່ງພຽງແຕ່ແມ່ນ ທັບໜ້າທີ່ນັ້ນ ສ່ວນທັບຫລັງຍັງຫລາຍກ່ວານີ້ ແຕ່ພໍມາຮອດພວກເຂົາກໍເລີຍຖືກຕີແຕກກະຈັກກະຈາຍໄປ ເລີ່ມແຕ່ນັ້ນມາກະສັດລາວກໍເລີຍໄດ້ສ້າງຄ້າຍປ້ອງກັນ ດ່ານເບື້ອງນັ້ນຢ່າງເຂັ້ມແຂງ .

ມາເຖິງປີ 1640 ກໍມີຄວາມຫຍຸ້ງຍາກບາງຢ່າງກັບປະເທດຕັງແກງ ຍ້ອນວ່າການຫລ້າຊ້າ ໃນການໃຫ້ການຮັບຮອງເອົາຣາຊະທູດຂອງປະເທດນັ້ນ. ເມື່ອເໜື່ອຍໃນການລໍຖ້າ ທ່ານກໍເລີຍໜີຈາກພະຣາຊະວັງກະທັນຫັນ. ຊາວລາວປະກິດວ່າ ມີປະເພນີໃຫ້ກຽດແກ່ຣາຊະທູດຕ່າງປະເທດທັງຫລາຍ ດ້ວຍການປະໃຫ້ພັກຜ່ອນຢູ່ເປັນໄລຍະ ເຈັດ ຫຼືແປດເດືອນ. ກະສັດລາວມີມະເຫສີຜູ້ໜຶ່ງເຊິ່ງເປັນຣາຊະທິດາຂອງກະສັດຕັງແກງ ດັ່ງນັ້ນການຂັດແຍ່ງດັ່ງກ່າວຈຶ່ງບໍ່ມີຜົນຫຍັງຕາມມາ. ກໍລະນີຜິດພາດກັບປະເທດກຳພູຊາ ເຊິ່ງໄດ້ເວົ້າມາແລ້ວຂ້າງຕົ້ນນັ້ນ ກໍບໍ່ໄດ້ໄປເຖິງການສູ້ຮົບຕົບຕີກັນເລີຍ ເພາະວ່າໃນດ້ານການຄ້າມາເວົ້າແລ້ວ ຊາວລາວຈະບໍ່ປາສະຈາກກຳພູຊາໄດ້ ແລະ ໃນຂາກັບຊາວກຳພູຊາ ກໍໄດ້ຈາກຊາວລາວເຊັ່ນວັດຖຸດິບອັນມະຫາສານ ເປັນຕົ້ນແມ່ນ ຝ້າຍໂດຍສະເພາະເວລາຜົນລະປູກໃນປະເທດຂອງພວກເຂົາບໍ່ຄ່ອຍດີພໍ.

ລັດຖະບານຂອງປະເທດລາວນັ້ນ ໃນຕົວຈິງປະກອບດ້ວຍ 3 ຂຸນນາງ ເຊິ່ງຖືວ່າ ເປັນປະເພດທີ່ໜຶ່ງ ຢູ່ພາຍໃນປະເທດ ເຕວິນຍາ ອາແສນ ຜູ້ທີ່ມີອາຍຸ 40 ປີ ປະກິດວ່າ ເປັນຜູ້ທີ່ໄດ້ຮັບຄວາມເຄົາລົບກ່ວາເພິ່ນໃນ 3 ທ່ານນັ້ນ ທ່ານເປັນຜູ້ບັນຊາທະຫານ ແລະ ເປັນເລືອດທະຫານທີ່ມີຄວາມຄ່ອງແຄ້ວ ແລະ ມີບັດຊຽນສູງ ທ່ານ ຍັງເປັນຜູ້ວ່າຣາຊະການເຂດທີ່ມີຍານ(60) ອີກດ້ວຍ ແລະ ທ່ານກໍມີຍົດເປັນຂັ້ນແມ່ທັບຂອງວຽງຈັນ ຫາກວ່າອົງກະສັດເຖິງແກ່ມໍລະນະກຳໄປ ກໍຈະແມ່ນເພິ່ນຜູ້ນັ້ນປົກຄອງປະເທດ ຈົນກ່ວາຈະອະພິເສກອົງມົງກຸດຣາຊະກຸມມານຂຶ້ນສະເຫວີຍຣາຊຢ່າງຖືກຕ້ອງແທນພະອົງ.

ສິດໃນການຂຶ້ນຄອງຣາຊະສົມບັດນັ້ນ ໄດ້ແກ່ຜູ້ເປັນຣາຊະບຸດ ຂອງເອກອັກຂະມະເຫສີທີ່ນັ້ນ ສ່ວນບຸດຜູ້ທີ່ເກີດນຳມະເຫສີອື່ນໆນັ້ນ ບໍ່ມີສິດເລີຍ ກະສັດອົງປັດຈຸບັນນີ້ ຍັງບໍ່ທັນມີຣາຊະບຸດຈາກເອກອັກຂະມະເຫສີເລີຍ ແລະ ກໍບໍ່ມີຍາດທັງປິຕາດ້ວຍ ດັ່ງນັ້ນ ເຕວິນຍາ ອາແສນ ຈຶ່ງຖືກຮຽກໃຫ້ຂຶ້ນຄອງຣາຊະສົມບັດແທນໄດ້.

ເຕວິນຍາ ພຣະລໍຈັນ ມີອາຍຸ 48 ປີແລ້ວ ທ່ານປົກຄອງເຂດລໍຂົນ(ລະຄອນ) ແລະ ເຂດນ້ຳນ້ອຍ ຈີນຮອດຊາຍແດນກຳພູຊາ ເຊິ່ງຍ້ອນແນວນັ້ນເອງ ທ່ານຈຶ່ງໄດ້ຮັບນາມມະຍົດໃຫ້ເປັນພຣະ ເຊິ່ງແປວ່າ ຕາມທີ່ພວກປ໊ອກຕຸຍການເວົ້າວ່າແມ່ນອຸປະຣາຊ(61) ນາມມະຍົດດັ່ງກ່າວນີ້ ມີແຕ່ທ່ານຜູ້ດຽວທີ່ນັ້ນ ໄດ້ຮັບຮອງຈາກ ເຕວິນຍາ ອາແສນແລ້ວ ແມ່ນທ່ານຜູ້ນັ້ນເອງທີ່ມີອິດທິພົນສູງ.

ເຕວິນຍາ ລັງການ ມີອາຍຸ 36 ປີ ພໍປະມານ ທ່ານຮ່ວມກັບສອງເຕວິນຍາກ່ອນນັ້ນ ຮັບຜິດຊອບທຸກກິດຈະການບ້ານເມືອງ. ພາລະໜ້າທີ່ພິເສດຂອງທ່ານຜູ້ນີ້ແມ່ນໃຫ້ການຕ້ອນຮັບແກ່ຣາຊະທູດ ແຕ່ທ່ານຜູ້ນີ້ພັດບໍ່ມີແຂວງໃດເລີຍ ຂຶ້ນຢູ່ໃນອຳນາດຂອງທ່ານ ບົດບາດຂອງທ່ານຕ່ຳກ່ວາ ຖ້າທຽບໃສ່ສອງທ່ານກ່ອນ.

ສາມ ເຕວິນຍານີ້ ບໍ່ໄດ້ມີສາຍເລືອດມາຈາກຕະກຸນກະສັດ ບັນດາກະສັດໄດ້ອະນຸຍາດໃຫ້ພວກເພິ່ນແບກຫາບພາລະນີ້ ຂອງບັນພະບຸລຸດຂອງພວກເພິ່ນ. ຈີນມາເຖິງປັດຈຸບັນບໍ່ມີເຊື້ອສາຍລາຍລ່ອງຜູ້ໃດຂອງກະສັດ ຈະຖືກເອີ້ນເຂົ້າມາຮັບພາລະການຂອງລັດເທື່ອ, ກະສັດອົງປັດຈຸບັນນີ້ ຜູ້ເຊິ່ງຂຶ້ນຄອງຣາຊະສົມບັດມາໄດ້ ສາມ ປີ ແທນຜູ້ເປັນພີ່ຊາຍ ທີ່ຄອງຣາຊະສົມບັດມາກ່ອນ ສິບ ປີ ແຕ່ບໍ່ມີບຸດກັບເອກອັກຂະມະເຫສີ ແລະ ກໍໄດ້ເຖິງແກ່ອະສັນຍາກຳໄປນັ້ນ ໄດ້ມ້າງຮີດຄອງດັ່ງກ່າວ ແລະ ແຕ່ງຕັ້ງໄອຍະການຄະດີແພ່ງ ແລະ ອາຍາ 5 ທ່ານ ໃນຈຳນວນຍາດຕິພີ່ນ້ອງທາງແມ່. ພວກເພິ່ນເຫລົ່ານັ້ນ ສາມາດມາເຝົ້າພະອົງ ແລະ ເຫັນໜ້າພະອົງໄດ້ທຸກໆມື້ ສ່ວນ 3 ລັດຖະບຸລຸດ ທີ່ຄຸມລັດຖະບານຢູ່ນັ້ນ ຈະເຫັນໜ້າອົງກະສັດໄດ້ ກໍໃນໄລຍະເວລາ 2-3 ເດືອນເທື່ອໜຶ່ງ ເວັ້ນເສຍແຕ່ຖືກພະອົງຮຽກມາ ຫລື ໃນສະພາບເງື່ອນໄຂພິເສດທີ່ນັ້ນ.

ລາຍໄດ້ຂອງປະເທດຊາດນັ້ນ ມາຈາກຄັ່ງ ຍານ ແລະ ຄຳ. ຢູ່ບ່ອນທີ່ມີຄຳນັ້ນເພິ່ນເສຍພາສີຮ້ອຍໜຶ່ງຕໍ່ຮ້ອຍຫົວຄົນ. ຫ້າຮ້ອຍເປັນກັດຕິໜຶ່ງ ພາສີດັ່ງກ່າວໂຮມທົ່ວປະເທດແລ້ວກໍໄດ້ເຖິງສອງປີໂກນທີ່ນັ້ນຕໍ່ປີ(63).

ຄາ ພາກສ່ວນຫລາຍ ເຈົ້າຊີວິດໄດ້ເອົາຖວາຍພະສົງ ເພື່ອເອ້ຢ້ອງວັດວາອາຮາມ ແລະ ທາດເຈດີອັນຫລວງຫລາຍ ເຊິ່ງແຕ່ລະລູກກໍເຫລືອງເຮືອໄປຫມົດ. ປະກົດວ່າ 7-8 ຫລັງຄາເຮືອນໃດມີວັດໆໜຶ່ງ ສ່ວນຫລາຍເພິ່ນມັກພົບສອງສາມວັດຕັ້ງຢູ່ຄຽງຂ້າງກັນ ມີໜ້ອຍຄອບຄົວທີ່ສຸດ ທີ່ມີຄົນໃນເຮືອນບວດຜູ້ດຽວ ແລະ ກອງພະສົງນອກເຢຊູນັ້ນກໍຫລວງຫລາຍ ປຽບປານກອງທະຫານແຫ່ງເຈົ້າຈັກກະພັດເຢັຽຣະມັນ. ພວກສົງດັ່ງກ່າວໄດ້ຊວນເຊື່ອປະຊາຊົນວ່າ ພະເຈົ້ານັ້ນໄດ້ລົງມາເກີດທີ່ເມືອງລາວແລະ ພະພຸດທະຮູບທີ່ສ້າງຂຶ້ນນັ້ນວ່າ ແມ່ນເປັນຮູບໜ້າຕາຂອງພະພຸດທະອົງອີຫລີ ພວກເຂົາມີຄວາມເອາອ້າງຕໍ່ສິ່ງດັ່ງກ່າວຂອງພວກເຂົາ ແລະ ຈາກນັ້ນ ພວກເຂົາກໍເວົ້າວ່າ ພະເຈົ້າໄດ້ໂຜດທານແກ່ພວກເຂົາ ເຫມືອນວ່າຢູ່ປະເທດສະຫຍາມ ແລະ ປະເທດກຳພູຊາ ເພາະວ່າພະອົງໄດ້ໂຜດໃຫ້ມີວັດທີ່ງາມຫາບ່ອນປຽບປານບໍ່ໄດ້ ບໍ່ຈັກທີ່ໃດວັດ ພ້ອມກັບໃຫ້ມີພະ (ຕາມສຳນວນຂອງເຂົາ) ແລະ ນັກປາດບໍ່ຈັກວ່າທີ່ໃດອົງ ເຂົາເວົ້າຕໍ່ວ່າດັ່ງນີ້ເອງ ພະສົງຂອງປະເທດສະຫຍາມ ແລະ ປະເທດກຳພູຊາ ຈຶ່ງພາກັນຢູ່ປະເທດລາວແຕ່ 10 ເຖິງ 12 ປີ ບໍ່ຂາດເພື່ອເຫລົ່າຮຽນ ແລະ ຮັບຊັ້ນຕຳແໜ່ງ. ບາງທີອັນນີ້ອາດຈະບໍ່ແມ່ນເຫດຜົນທີ່ແທ້ຈິງກໍເປັນໄດ້ ສາເຫດທີ່ແທ້ຈິງຄືແມ່ນ ການທີ່ພະສົງໃນລາວ ໄດ້ຮັບຄວາມເຄົາລົບ ນົບນ້ອມ ບໍ່ຕ່າງຫຍັງກັບພະເຈົ້າ ພ້ອມທັງສາມາດສັນຫາອາຫານໄດ້ຕາມຄວາມຕ້ອງການ ສາມາດມີເຄື່ອງນຸ່ງໄດ້ເກີນຄວາມຕ້ອງການ ແລະ ອັນສຸດທ້າຍແມ່ນພວກເພິ່ນດຳເນີນຊີວິດແບບໂຖງ ແລະ ຮຸນແຮງ ຕາມຄວາມເປັນໂສດຂອງເພິ່ນ ເຖິງວ່າພວກເພິ່ນຈະສະແດງບຸກຄະລິກແບບກົງໆ ແຕ່ນອກຂອງເພິ່ນມາອ້າງກໍຕາມ ການປະພຶດແບບນີ້ ຈະບໍ່ສາມາດເປັນໄປໄດ້ເລີຍໃນປະເທດກຳພູຊາ ຫລື ຖ້າຂືນປະຕິບັດໄປ ກໍຖືກຕັດສິນລົງໂທດແນ່ນອນ. ດັ່ງນີ້ເອງທີ່ບັນດາພະສົງຂອງສອງປະເທດນີ້ ຈຶ່ງກຽດຊັງຊຶ່ງກັນ ແລະ ກັນ ພະສົງໃນກຳພູຊາ ຕຳນິພະສົງທີ່ປະເທດລາວ ແລ່ນນຳກົ້ນຜູ້ຍິງ ເຊິ່ງບໍ່ເປັນການເຫມາະສົມ ສ່ວນພະສົງໃນປະເທດລາວຊໍ້າຕຳນິພະສົງກຳພູຊາວ່າ ແລ່ນຂໍທານກິນນຳຄົນທີ່ເດີນຕາມຖະໜົນ ເຊິ່ງມັນເຮັດໃຫ້ມີຮອຍເປື້ອນແກ່ລັກສະນະຄວາມເປັນພະສົງ ແລະ ເຮັດໃຫ້ຖືກດູຫມິ່ນດູແຄນ (64).

ກ່ຽວກັບການເຊື່ອຖືຂອງພວກເພິ່ນ ບໍ່ມີຫຍັງພໍເປັນຕາເວົ້າເລີຍ ນອກຈາກແຕ່ເລື່ອງສັ່ງສອນ ໃຫ້ຜູ້ຄົນເຫັດທູນຮູບຂອງພວກເພິ່ນເອງ ແລະ ທຳການອຸທິດຕົນ

ດ້ວຍການໄຕ້ທູບທຽນຂື້ນເຮັດໜ້າຫຍຸ້ງເຫຍີອງ ສະແດງຄວາມເຊື່ອຖືທີ່ໄຮ້ສາລະໃຫ້ຫລາຍທີ່ນັ້ນ. ພວກເພິ່ນໄດ້ປະຕິຍານວ່າ ຈະນຳຄວາມສຸກມາໃຫ້ຜູ້ທີ່ໄດ້ທານ ໃຫ້ພວກເພິ່ນຫລາຍ ແລະ ຮູ້ຈັກກຳປະຊາຊົນໄວ້ໃນອຳນາດຂອງພວກເພິ່ນໄດ້ ດ້ວຍວິທີນີ້ເອງ ສະຫລຸບຄວາມແລ້ວ ພວກເພິ່ນມີສິລະປະ ໃນການເຮັດໃຫ້ຜູ້ຄົນອຸທິດຕົນແກ່ພວກເພິ່ນຢ່າງຫູອື້ງຕາມົວ ພ້ອມກັນນັ້ນພວກເພິ່ນກໍຢູທ່າງຈົກຖົງພວກເຂົາໄດ້ຢ່າງຂື່ນໃຈ.

ນີ້ແຫລະແມ່ນສິ່ງທີ່ພວກເຮົາພົບເຫັນຢູ່ປະເທດລາວ ປະເທດທີ່ພວກເຮົາໄດ້ຈາກມາໃນປີ 1642 ເຖິງວ່າ ພວກເຮົາຈະໃຊ້ຄວາມພະຍາຍາມປານໃດກໍຕາມ ພວກເຮົາກໍບໍ່ສາມາດຈະຮຽນຮູ້ຫຍັງໄດ້ອີກເລີຍ ບັດນີ້ພວກເຮົາກຳລັງຈະລ່ອງລົງໄປສູ່ປະເທດກຳພູຊາ ແລະ ຈະເຫລົ່າສິ່ງທີ່ພວກເຮົາພໍຮັບຮູ້ໄດ້ ໃນການເດີນທາງຂາກັບຂອງພວກເຮົາຕໍ່ໄປ.

III

ການເດີນທາງຂາກັບ ຈາກປະເທດລາວສູ່ປະເທດກຳພູຊາ

ແມ່ນໃນວັນທີ່ 24 ທັນວາ 1641 ຕອນເຊົ້າຕູ່ ພາຍຫລັງທີ່ໄດ້ເອົາຂອງເຂົ້າເຮືອຫມົດແລ້ວ ແລະ ພ້ອມໄດ້ຫ້າງຫາດາແຕ່ງເຮືອຂອງພວກເຮົາຮຽບຮ້ອຍແລ້ວ ພວກເຮົາໄດ້ງວາກທິວເຮືອ ອອກຈາກເມືອງວຽງຄຸກ(65) ຈາກນັ້ນມາຊົ່ວໂມງໜຶ່ງ ພວກເຮົາກໍໄດ້ຈອດເຮືອຂຶ້ນຝັ່ງ ບ່ອນໃກ້ໆກັບວັດແຫ່ງໜຶ່ງ ເຊິ່ງພະສົງກຳລັງເຮັດພິທີກຳຢູ່ໃນປ່າ ພວກເຮົາຈຳຕ້ອງໄດ້ມອບຂອງທານໃຫ້ພວກເພິ່ນອີກເພື່ອແລກກັບການອະທິຖານຂອງເພິ່ນ ເຊິ່ງຢ່າງໜ້ອຍພວກເພິ່ນ ກໍອະທິຖານໃຫ້ການເດີນທາງຂອງພວກເຮົາປະສົບຜົນສຳເລັດ.

ພວກເຮົາໄດ້ມາເຖິງບ້ານຫ້ວຍລຸນ ບ່ອນເຊິ່ງພວກເຮົາໄດ້ຊື້ເອົາໄຫມດ້ວຍລາຄາຖືກໆ ຄືງຈະໄດ້ກຳໄລປະມານ 50 ສ່ວນຮ້ອຍຂອງຕົ້ນທຶນ. ໃນຕອນບ່າຍມາພວກເຮົາໄດ້ລ່ອງຜ່ານປ່າໄງ່ນທີນ ແລະ ແກ້ງຮ່ອນ ແລະ ພວກເຮົາກໍໄດ້ນອນແຮມຄືນຕາມເຫືອກຫີນທີ່ອາຫອນ(66). ລະຫວ່າງມື້ເວັນ ແລະ ມື້ຄືນວັນນັ້ນພວກເຮົາເດີນທາງຜ່ານໄລຍະທາງ 6 ມີລລ໌ ເຖິງວ່າພວກນາຍເຮືອຈະຈອດຕາມທາງມາເລື້ອຍໆ ເພື່ອຈະຮັບເອົາຂອງຕ້ອນຈາກປະຊາຊົນ ໃນໂອກາດການຈາກ

ໄປຂອງພວກເຮົາກໍ່ຕາມ. ພວກເຮົາເວົ້າວ່າ ຂອງຕ້ອນນີ້ເປັນກຽດສັກສີແກ່ພວກເຮົາ ແຕ່ນັ້ນເອງ ພຽງແຕ່ແມ່ນຜົນຄວາມກະຫາຍເຫຍື່ອຢ່າງໜ້າອັບອາຍຂອງພວກເຂົາທີ່ນັ້ນ (67).

ວັນຂຶ້ນປີໃໝ່ ປີ 1642 ພວກເຮົາໄດ້ປະເຊີນກັບກະແສນ້ຳທີ່ໄຫລແຮງ ແລະ ແສງແດດອັນຮ້ອນໄໝ້ ຈົນສີພາຍພວກເຮົາບໍ່ສາມາດທົນໄດ້. ວັນທີ 8 ເດືອນ ມັງກອນ ພວກເຮົາໄດ້ເດີນຜ່ານລໍຂັນ ແລະ ວັນທີ 9 ພວກເຮົາໄດ້ໄປຮອດພະນົມ ບ່ອນທີ່ພວກເຮົາໄດ້ພັກຢູ່ດອນຊາຍ ຢ່າງໜ້ອຍປະມານຊົ່ວເຄິ່ງໂມງ. ວັນທີ 12 ຕອນເຊົ້າ ພວກເຮົາໄດ້ເຂົ້າອຳລາທ່ານ ຣາເດຍ ພົວສອນ ຜູ້ເຊິ່ງໄດ້ຮັບຄວາມມອບໝາຍ ໃຫ້ແກ້ໄຂບັນຫາກຳພູຊາໃນລະດູທີ່ນ້ຳຂຶ້ນ ເພື່ອຈະໄດ້ພິຈາລະນາສາເຫດ ຂອງຄວາມບໍ່ເຂົ້າອົກເຂົ້າໃຈກັນ ລະຫວ່າງສອງຣາຊະອານາຈັກ.

ວັນທີ 13 ພວກເຮົາໄດ້ລ່ອງຜ່ານໄຊມຸນ ພວກເຮົາຈຳເປັນຕ້ອງໄດ້ຂົນຂອງອອກຈາກເຮືອ ເຄິ່ງໜຶ່ງຍ້ອນຂີ້ຊາຍ ແລະ ລະດັບນ້ຳຕື້ນໂພດ. ວັນທີ 15 ພວກເຮົາໄດ້ມາເຖິງວັງຊາ(68) ເຊິ່ງເປັນບ້ານນ້ອຍບໍ່ທີ່ໃດຫລັງຄາເຮືອນ ບ່ອນທີ່ຊາວເຮືອ ແລະຊາວບ້ານພາກັນຂຶ້ນໄປຊື້ເຫລົ້າເດັດ. ວັນທີ 17 ພວກເຮົາກໍ່ພົບອຸປສັກອີກ ພວກເຮົາຈຳຕ້ອງໄດ້ຂົນຂອງອອກຈາກເຮືອໝົດທຸກລຳ ເພາະລົມແຮງໄດ້ພັດເອົາເຮືອເວເຂົ້າໃສ່ກ້ອນ ແລະ ໂງ່ນຫີນຝັ່ງເບື້ອງນັ້ນ ແລະ ເບື້ອງນີ້ຢູ່ ຢ່າງບໍ່ສາມາດຍັບຍັ້ງໄດ້. ລ້ອງແມ່ນ້ຳນັ້ນລະອິດລະອຽວຫລາຍ ແລະ ພວກເຮົາກໍ່ຄືບໜ້າໄປຢ່າງເຊື່ອງຊ້າ.

ວັນທີ 20 ເດືອນ ມັງກອນ ພວກເຮົາເຖິງເບັນຣວິນ (69) ບ່ອນທີ່ພວກເຮົາຕ້ອງປ່ຽນນາຍນ້ຳ. ເຕວິນຍາ ຢູ່ບ່ອນທີ່ນບໍ່ມີນາຍນ້ຳຫວ້າງຈັກຄົນ ແຕ່ເມື່ອປະຕິບັດຕາມພະຣາຊະອົງການຂອງກະສັດ ທ່ານໄດ້ຮຽກເອົາມາແຕ່ສຳພະນາ ແລະ ນາແຫວນ. ວັນທີ 25 ພວກເຮົາໄດ້ພົບກັບອັນຕະລາຍບັກໃຫຍ່ ຖືກກະແສນ້ຳພັດເອົາເຮືອພວກເຮົາຢ່າງແຮງ ເຂົ້າໄປຕາມຫລືບກ້ອນ ແລະໂງ່ນຫີນ ເຊິ່ງເມື່ອເຫັນແລ້ວເປັນຕາຢ້ານທີ່ສຸດ. ໂຊກຊະຕາຂອງພວກເຮົາ ຂຶ້ນກັບການເບັດທິວເຮືອໃຫ້ຖືກຕ້ອງທີ່ນັ້ນ ຫາກຜິດຈັງຫວະໜ້ອຍດຽວ ພວກເຮົາກໍ່ຈະພາກັນແຈບລົງກັບໂງ່ນຫີນນັ້ນໂລດ ພວກເຮົາໄດ້ຜ່ານຫາດແກ້ງ ແລະ ຄວາມໜ້າຢ້ານກົວມາພໍສົມຄວນ. ວັນທີ 26 ພວກເຮົາໄດ້ໄປເຖິງສຳພະນາ ແລະ ນາແຫວນ ຊາວລາວມີຄວາມກັງວົນທີ່ສຸດ ເພາະພວກເຮົາໄດ້ພົບວ່າ ໄດ້ມີການຕ່າງອາວຸດປືນ ຈາກປະ

ເທດກຳພູຊາມາມໍ່ຊາຍແດນລາວ 50 ລຳກວຽນ ໂດຍທີ່ກະສັດກຳພູຊາໃຊ້ຂໍ້ອ້າງວ່າ ຈະມາລ່າເນື້ອ ເຊິ່ງຄວາມຈິງແມ່ນມາເຮັດເສິກກັບລາວ ຕາມປົກກະຕິແລ້ວ ກວຽນທີ່ມາຈາກກຳພູຊານັ້ນ ແຕ່ລະປີບໍ່ເກີນ 10 ຫາ 12 ລຳທີ່ນັ້ນ ເພື່ອຕ່າງສິນຄ້າຊື່ໆ ແຕ່ບໍ່ແມ່ນຕ່າງອາວຸດເລີຍ. ທ່ານ ນັບປຣາ ໄດ້ສົນທະນາກັບພວກເຮົາຢ່າງເຫິງນານ ໂດຍໃຊ້ເຫດຜົນອ້າງອີງຕ່າງໆນາໆ ເພື່ອຢາກຮູ້ຈັກວ່າໃນກວຽນດັ່ງກ່າວນັ້ນມີຫຍັງແທ້ ແລະ ຜົນຂອງມັນຈະໄປເຖິງໃສ ເມື່ອເຫັນວ່າພວກເຮົາຮ້ອນໃຈ ແລະ ເຂົ້າໃຈວ່າ ການເດີນທາງຂອງພວກເຮົາໄປສູ່ຈຸດຫມາຍປາຍທາງໄວທໍ່ໃດຍິ່ງເປັນທີ່ພໍພະໄທ ແກ່ອົງກະສັດທີ່ນັ້ນ ທ່ານຈຶ່ງອະນຸມັດໃຫ້ເຮືອພວກເຮົາອີກລຳໜຶ່ງ. ພວກເຮົາໄດ້ຈາກໄປໃນ ວັນທີ່ 10 ເດືອນ ກຸມພາ ແລະ ພວກເຮົາກໍໄດ້ໄປຄ້າງຄືນຢູ່ທີ່ໂງ່ນຫີນສີ່ນຽງ. ວັນທີ່ 11 ພວກເຮົາໄດ້ຄົນຕື່ມອີກ 8 ຄົນ ຈາກບ້ານນາແຫວນມາຊ່ອຍ ເອົາເຊືອກຫວາຍຢ່ອນເຮືອຂອງພວກເຮົາລົງແກ້ງ. ພວກເຮົາໄດ້ຜ່ານໄປຈາກບ້ານໃຫຍ່ບ້ານໜຶ່ງ ເຊິ່ງປະຊາຊົນພາກັນໜີອອກໄປຈາກບ້ານທັງໝົດ ເພາະຢ້ານວ່າ ຈະເກີດເສິກກັບກຳພູຊາ ພວກເຂົາເຈົ້າເວົ້າວ່າ ໄດ້ເຫັນກວຽນ 40 ລຳຕ່າງປືນມາ ແລະມີຄົນທີ່ມີຜົມສັ້ນໆ(70) ນຳພາມາດ້ວຍ. ຄວາມຈິງແລ້ວແມ່ນກວຽນທີ່ຊາວກຳພູຊາເອົາມາຕ່າງຝ້າຍ ເພາະຝ້າຍຂອງພວກເຂົາຂາດເຂີນ ທີ່ປະເທດກຳພູຊາຍ້ອນນ້ຳຖ້ວມແຮງ.

ວັນທີ່ 10 ເດືອນ ມີນາ (71) ພວກເຮົາໄດ້ໄປເຖິງບ່ອນໜຶ່ງທີ່ຊື່ວ່າ ເຊຣປັງໄພ ນານມາແລ້ວ ທີ່ກະສັດລາວໄດ້ມາຫລົບໄພຢູ່ນະທີ່ນີ້ ຈາກເສິກຂອງພວກເປງູ ທີ່ມາຢຶດຄອງພາກເໜືອທັງໝົດຂອງລາວ ເລື່ອງດັ່ງກ່າວມີຂຶ້ນ 3-4 ເທື່ອດ້ວຍກັນ. ເປັນສະຖານທີ່ໜ້າຮັກໜ້າຢູ່ຫລາຍ. ນະທີ່ນັ້ນ ເພິ່ນໄດ້ເຫັນທົ່ງນາອັນສວຍງາມທີ່ສຸດ ກວ້າງໄກທີ່ສຸດ. ຝູງໝູ່ກວາງ ແລະ ຟານ ພາກັນລົງມາກິນຫຍ້າເປັນຝູງເຫມືອນດັ່ງຝູງແກະນ້ອຍ ແລະ ຝູງໃດກໍນັບເປັນຮ້ອຍໆ ນະທີ່ນັ້ນ ຍັງມີໜອງບຶງອັນວິເສດຫລາຍ ເຊິ່ງເຕັມແຕ່ປູປາ(72). ດັ່ງນັ້ນ ຕາມປົກກະຕິແລ້ວ ຊາວລາວຈຳຕ້ອງພາກັນພັກຜ່ອນນະທີ່ນີ້ ເພື່ອຈະລຳລຽງເຂົ້າປາອາຫານ ແລະ ອື່ນໆ. ຄົນຂອງພວກເຮົາພາກັນໄປຫາປາແລ້ວຜູ້ໜຶ່ງຖືກແຂ້ກັດຂາ.

ວັນທີ່ 16 ເດືອນ ມີນາ ພວກເຮົາໄດ້ລ່ອງຜ່ານສະແສນຮາມ ເຊິ່ງນະທີ່ນັ້ນ ສິນຄ້າພວກເຮົາທັງໝົດຂຶ້ນສົ່ງທາງບົກ. ວັນທີ່ 25 ພວກເຮົາໄດ້ພົບເຫັນພູພະນົມ

ເຊິ່ງເວລານ້ຳມາກມາປະກົດວ່ານ້ຳກວ້າງຢ່າງໜ້ອຍເຖິງ 1 ມີລລ໌ ແຕ່ບາດນ້ຳບົກມາເລີຍເຫັນແຕ່ກ້ອນ ແລະ ໂງ່ນຫີນ. ແຕ່ແນວໃດມັນກໍຍັງໃຫຍ່ກວ່າແມ່ນ້ຳຢູ່ບາຕາເວຍສອງເທື່ອ ມັນປົກຄຸມດ້ວຍເກາະດອນ ແລະ ປ່າໄມ້ດົກໜາຈົນເຖິງຊ້າບາເບີກ ຕອນເຊົ້າມາພວກເຮົາເຫັນເສືອໂຕໜຶ່ງຢູ່ແຄມນ້ຳ ມິ່ງພວກເຮົາເອງ ແຕ່ເມື່ອມາບເຫັນພວກເຮົາມັນກໍເລີຍຮີບໜີເຂົ້າໄປໃນປ່າ ພ້ອມທັງສົ່ງສຽງຮ້ອງຫລາຍສຽງຊ້ອນໆກັນ ເໝືອນດັ່ງມັນຫິວເຫຍື່ອ. ຊາວລາວຖືສຽງຮ້ອງຂອງເສືອເຊັ່ນດຽວກັນ ກັບສຽງປີບຂອງກວາງ ຕະຫລອດສຽງວອກແວກຂອງລີງ ເປັນລາງຮ້າຍ ເຂົາຍັງຖືເປັນລາງຮ້າຍອີກ ຖ້າວ່າມີຄົນຖອດຊູ່ຍແຮງ ຫລື ມີງູລອຍຜ່ານໜ້າເຮືອ ຫລື ມີງ່າໄມ້ໂດກຫັກລົງ ທີ່ບໍ່ມີລົມຕ້ອງ ເວລາເດີນເຮືອພວກເຂົາກໍຫ້າມກັນ ບໍ່ໃຫ້ເອົາໝໍ້ຕັກເອົານ້ຳ ຫລື ປ່ອນຕີນລົງຫົວເຮືອ ຫາກຂາດສະຕິອັນນີ້ແລ້ວ ເຂົາຈະຕ້ອງພົບໄພຢ່າງແນ່ນອນ. ອັນນີ້ກໍແມ່ນການເວົ້າໄປ່ ທີ່ເຕັມຢູ່ໃນໜັງສືຂອງພະສົງ ແລະ ເຊິ່ງພວກເພິ່ນເຊື່ອຖືຢ່າງແຮງກ້າ.

ວັນທີ່ 27 ພວກເຮົາໄດ້ໄປເຖິງເບີຊອງ ຊາວເຮືອຄົນລາວໄປຫາພິທີບູຊາ ໄຕ້ທູບທຽນຂຶ້ນຢູ່ວັດຮ້າງ ເພື່ອຈະຄອບຄຸນພະເຈົ້າ ອັນແປກປອມຂອງພວກເຂົາ ທີ່ໄດ້ເດີນທາງມາເຖິງຈຸດໝາຍຢ່າງປອດໄພດ້ວຍ. ພວກເຂົາກ່າວຄຳສູດມົນພາວັນນາຂອງພວກເຂົາດ້ວຍຄວາມກະຕຸ້ນໃຈ ຈົນເກືອບຈະສະອື້ນ ແລະ ພວກເຂົາກໍເຮັດແນວນີ້ຕະຫລອດ ເມື່ອພວກເຂົາຜ່ານອຸປະສັກໄດ້ຢ່າງປອດໄພ.

ວັນທີ່ 30 ເຮືອພວກເຮົາຖືກນ້ຳພັດແຮງ ຕົກເຂົ້າໄປຢູ່ໃນທ່າມກາງໝູ່ດອນໃກ້ຊິດກັນ ເຕັມໄປດ້ວຍຕົ້ນໄມ້ ທີ່ຜຸດພົ້ນຈາກໜ້ານ້ຳຂຶ້ນມາ ເຊິ່ງຈາກນັ້ນໄປ ແລ້ວພວກເຮົາກໍຈະເຖິງຊ້າບາເບີກ.

ວັນທີ່ 3 ເດືອນ ເມສາ ພວກເຮົາໄດ້ລ່ອງຜ່ານໄປຕໍ່ໜ້າຊ້າບ້ອກແລະກົ່ນຊ້ອກ. ພວກເຮົາໄດ້ພັກແຮມຄືນໃນວັນທີ່ 7 ຢູ່ພູພັນກັງຢີ-ວັນທີ່ 11 ຕອນແລງ ພາຍຫລັງທີ່ພວກເຮົາຜ່ານໄປພະນົມປິນ(73) ແລ້ວພວກເຮົາຈຶ່ງໄດ້ໄປພັກຢູ່ຕໍ່ໜ້າທີ່ພັກຂອງບໍລິສັດພວກເຮົາ ຍ້ອນພະຜູ້ເປັນເຈົ້າໂຜດທານ.

IV

ເລື້ອງລາວທີ່ເກີດຂຶ້ນ ຂະນະທີ່ຜູ້ຊ່ອຍສອງທ່ານ ຄື ວິນແລມ ເດີໂກເຢ ແລະ ຮຸຍແບກ ບູເດວິນສ ພັກຢູ່ໃນຣາຊະອານາຈັກລາວ

ວັນທີ່ 10 ມີນາ 1642 ຣາຊະທູດແຫ່ງກະສັດຕົງແກງ ໄດ້ມາເຖິງພະຣາຊະສຳນັກແຫ່ງລາວ ທ່ານໄດ້ນຳເອົາປືນຈຳນວນໜຶ່ງ ແລະ ຜ້າແພກວາງຕຸ້ງມາຖວາຍອົງກະສັດ. 3 ມື້ຕໍ່ມາພະຣາຊະສານຈາກກະສັດແຫ່ງຕົງແກງ ເຊິ່ງຣາຊະທູດເອງເປັນຜູ້ນຳເອົາມາຖວາຍນັ້ນໄດ້ຖືກລ່າຍຢູ່ວັດແຫ່ງໜຶ່ງ. ເນື້ອໃນຂອງພະຣາຊະສານນັ້ນ ໄດ້ກໍໃຫ້ສົມເດັດພະມະຫາກະສັດມີຄວາມໂກດເຄືອງເປັນອັນມາກ ຈົນເຖິງຂັ້ນວ່າ ພະອົງບໍ່ຢາກຮັບທັງສານ ແລະ ທັງເຄື່ອງບັນນາການ ພະອົງໄດ້ປະກາດວ່າ ພວກຕົງແກງເປັນສັດຕູຂອງພະອົງ ພ້ອມທັງໄດ້ຈຳໃຫ້ຣາຊະທູດກັບຄືນໂດຍດ່ວນ.

ວັນທີ່ 7 ເມສາ ຕາມວິທີການຄິດໄລ່ຂອງຊາດລາວແລ້ວ ເປັນມື້ຂຶ້ນປີໃໝ່ຂອງພວກເຂົາ ແລະ ພວກເຂົາກໍທຳການສະຫລອງບຸນປີໃໝ່ຂອງພວກເຂົາ ເຕວິນຍາ ກົມພັນ ໄດ້ມາຊອກຫາຜູ້ຊ່ອຍຊາວໂຮນລັງ ເພື່ອຈະພາໄປສູ່ພະຣາຊະສຳນັກ. ພວກເຂົາເຈົ້າກໍຖືພາເຂົ້າໄປດ້ວຍມີນທິບ ແລະ ນັບປຣາສອງທ່ານເພິ່ນໄດ້ກຽມເຮືອນພິເສດໄວ້ຕ່າງຫາກສຳຫລັບເຂົາເຈົ້າ ພ້ອມທັງໄດ້ແຕ່ງພາເຂົ້າມາໃຫ້ຮັບປະທານ. ກ່ອນທີ່ອົງກະສັດຈະມາຮອດ ໄດ້ມີການແຂ່ງມ້າກັນຫລາຍຮອບ. ຕອນແລງມາກໍໄດ້ຍິນສຽງຮ້ອງລັ່ນເສິກ ອັນສະແດງວ່າ ພະມະຫາກະສັດສະເດັດມາເຖິງ ພະອົງເດີນຜ່ານເດີ່ນເຂົ້າມາ ແລ້ວຊາວໂຮນລັງກໍນັ່ງຊຸເຂົ່າກົ້ມຫົວໄຫວ້ ດ້ວຍຄວາມເຄົາລົບ ຫລັງຈາກນັ້ນໄດ້ມີການສະແດງລາຍງ້າວ ແລະການຕີມັດໂມຍກັນຂຶ້ນ ເຊິ່ງໃນນັ້ນ ນັກຕໍ່ສູ້ໄດ້ພາກັນເອ້ຢ້ອງ ປະດັບແຕ່ງປອກທອງ ຈາກນັ້ນ ກໍມີການແຂ່ງຂັນມ້າກັນອີກ ມີການຕໍ່ສູ້ກັນດ້ວຍດາບ ແລະ ເສນແລະ ມີການຂີ່ນຄວາຍກັນນຳ. ການສະແດງຈົບລົງດ້ວຍການຟ້ອນຂອງແມ່ຍິງທີ່ໃສ່ເຄື່ອງເອ້ເຕັມຄີງ ຕົກມື້ອື່ນມາ ເພິ່ນກໍຍັງສະແດງແບບເກົ່ານັ້ນຄືນອີກ ມີແຕ່ເພີ່ມການຂີ່ນຊ້າງເຂົ້າຕື່ມທໍ່ນັ້ນ ລະດູການປີໃໝ່ນີ້ປະກົດວ່າ ເປັນບຸນອັນສັກກະ

24/VII
ຫ້າມຈຳໜ່າຍ

ລະທີ່ຍິ່ງໃຫຍ່ສຳລັບຊາວລາວ. ວັນທີ່ 10 ອິງກະສັດໄດ້ສະເດັດມາທີ່ແຄມແມ່ນ້ຳ ພ້ອມດ້ວຍສາວສະໜົມກົມມະວັງທັງໝົດ, ຢູ່ຕາມຫາດຊາຍເພິ່ນໄດ້ສ້າງເຮືອນ ສຳລັບການມ່ວນຊື່ນລື່ນເລີງຂຶ້ນຫລາຍຫລັງ ບໍ່ພໍປານ ເສນາອາມາດທັງຫລາຍກໍ ຕາມມາ ແລະ ທຸກຄືນກໍພາກັນສວາດນ້ຳ ຫິດກັນດ້ວຍຄວາມຊື່ນຊົມ ແລະ ຕາມ ໃຈຕາມມັນ ຈົນໃຜໆກໍປຸກໄປໝົດທັງໄຕ ແລະ ກໍບໍ່ມີໃຜຈະຄິດຈົ່ມສ້ານໃສ່ໃຜ ເລີຍ.

ວັນທີ່ 2 ພຶດສະພາ ຣາຊະທູດຜູ້ໜຶ່ງຂອງສະຫຍາມໄດ້ມາຮອດ ເພິ່ນໄດ້ຈັດ ການຕ້ອນຮັບຢ່າງໃຫຍ່ ດ້ວຍເຮືອ 12 ລຳ ເພິ່ນໄດ້ເອົາພະຣາຊະສານ ເຊິ່ງທ່ານ ເອງເປັນຜູ້ນຳເອົາມານັ້ນ ບັນຈຸໄວ້ໃນຂັນຄຳ ແລ້ວກໍໄດ້ລ່າຍຢູ່ໃນວັດ ເຄື່ອງບັນ ນາການກໍຖືກນຳເອົາໄປວັດບ່ອນດຽວກັນ ເຄື່ອງດັ່ງກ່າວປະກອບມີ ທີ່ "ກາຣຸນ ກາຣິດ" ງາມລະບາຍສີທໍໜຶ່ງ ຜ້າ "ເຈັຍວອນນິດ" ສີແດງຊຸດໜຶ່ງ ແລະ ສີຂາວ ຊຸດໜຶ່ງ. "ກັບເບັງການ" ອັນໜຶ່ງ ແລະ "ຈິງກັງ" ອັນໜຶ່ງ. ແຕ່ເຖິງປານນັ້ນກໍດີ ການເຈລະຈາກັນບໍ່ໄດ້ເປັນໄປໃນທາງທີ່ດີ ຫລັງຈາກນັ້ນຕໍ່ມາສອງເດືອນ ເພິ່ນ ໄດ້ສັ່ງຫ້າມບໍ່ໃຫ້ລາຊະທູດທ່ານນັ້ນອອກໄປ ແລະ ໄດ້ກັກບໍລິເວນໄວ້. ທ່ານບໍ່ ສາມາດຂາຍຫຍັງໄດ້ ຊື້ຫຍັງໄດ້ ແລະ ອອກນອກຜູ້ດຽວໄດ້. ທີ່ປະເທດສະ ຫຍາມ ຊາວລາວກໍພົບຄວາມບໍ່ໄວ້ເນື້ອເຊື່ອໃຈແບບດຽວກັນນີ້ ສອງຊາດນີ້ ຈຶ່ງແມ່ນເຂົາອິດສາເຊິ່ງກັນ ແລະກັນອິຫລີ.

ໃນເວລານັ້ນ ເຕວິນຍາ ບາສັກ ໄດ້ມາເຖິງ ເພື່ອຈະຖວາຍຊ້າງນ້ອຍໝູ່ໜຶ່ງ ທີ່ ຈັບໄດ້ ຢູ່ເຂດສາຍແດນກຳພູຊາໃຫ້ພະມະຫາກະສັດ. ການລ່າຊ້າງນັ້ນ ຢູ່ທາງນີ້ ເພິ່ນດຳເນີນໄປແບບອ່ອນນວນ ແລະປາສະຈາກອັນຕະລາຍໃດໆທັງໝົດ ເມື່ອ ລະດູການມາເຖິງແລ້ວ ເພິ່ນກໍສ້າງຮົ້ວຫລືສິ່ງກີດກັນໃສ່ເນື້ອທີ່ສີ່ຫລ່ຽມ ກວ້າງປະ ມານ 20 ມິລລ໌ໄວ້. ແລ້ວຢູ່ຂ້າງໜຶ່ງເພິ່ນໄດ້ຂຸດເຫວຂວາກໄວ້ຫລາຍເຫວ. ເພິ່ນ ພະຍາຍາມເຮັດແນວໃດ ບໍ່ໃຫ້ຊ້າງນັ້ນສາມາດເຂົ້າອອກໃນເຂດກັ້ນການນັ້ນ ໄດ້ ດ້ວຍປະຕູອື່ນ. ວັນໜຶ່ງຊາວໂຮນລັງບາງທ່ານ ໄດ້ຖືກເຊີນເຂົ້າຮ່ວມ ໃນການລ່າ ຊ້າງແບບນີ້ ພວກເຂົາຖືປືນ ພາຍດາບ ແລະ ຖືງເປັພ້ອມຢູ່ນຳຄົນພື້ນເມືອງໃນ ເຂດກັນດານ ເປັນຫລາຍມື້ຫລາຍຄືນ ເຊິ່ງມີແຕ່ດິນເປັນຕຽງນອນ ແລະ ທ້ອງ ຟ້າເປັນຜ້າປົກທີ່ນັ້ນ. ການລ່າເນື້ອເພິ່ນປະຕິບັດກັນຈັ່ງຊີ້ດີ ພ້ອມກັນເດີນໜ້າ ເຂົ້າໄປຊ້າງເປັນໝູ່ໆ ພ້ອມທັງເຮັດສຽງດັງສະໜັ່ນເມືອງນອງດ້ວຍການຍິງປືນ

ຕີຄ້ອງ ຕີກອງ ເພື່ອໄລ່ຊ້າງນັ້ນ ເຂົ້າໄປຫາດ້ານທີ່ມີເຫວຂວາກ. ເມື່ອຊ້າງຫາກຕົກລົງໄປໃນຂຸມນັ້ນແລ້ວ ພວກເພິ່ນກໍປະມັນໄວ້ທີ່ນັ້ນໄລຍະໜຶ່ງ ພ້ອມທັງເອົາອາຫານໃຫ້ມັນກິນໄປນຳ ຈາກນັ້ນມັນກໍຄຸ້ນເຂົ້ານຳແຕ່ລະມື້ແລ້ວ ເພິ່ນກໍນຳເອົາມັນມາຖວາຍເຈົ້າຊີວິດ. ບັນດາເຈົ້າພະຍາທັງຫລາຍໃນອາຊີເຫັນວ່າ ສັດປະເພດນີ້ເປັນຊ້າງທາດທີ່ຊື່ສັດ ແລະກໍໄດ້ຮຽກຮ້ອງໃຫ້ໄພ່ຟ້າຂ້າແຜ່ນດິນນຳເອົາມາເສັງຊ່ອຍ.

ວັນທີ່ 7 ມິຖຸນາ ພວກເຮົາໄດ້ຮັບການເຂົ້າຢ້ຽມຢາມ ຈາກຄົນມາເລຄົນໜຶ່ງ ເຊິ່ງແມ່ນເພຍຖິ່ນ ຜູ້ເປັນລູກກົກຂອງເພຍປະວັນ(74) ເຊິ່ງຢູ່ເມືອງໃຫຍ່ເມືອງໜຶ່ງຂອງປະເທດລາວ ຊື່ວ່າ ເມືອງປະວາ(75) ຄົນມາເລຜູ້ນັ້ນ ໄດ້ຂໍຮ້ອງໃຫ້ພວກເຮົາໃຫ້ກຽດແກ່ນາຍຂອງເຂົາ ແລະ ໃຫ້ໄປພົບເພິ່ນທີ່ເມືອງດັ່ງກ່າວ ເຊິ່ງພວກເຮົາກໍໄດ້ປະຕິບັດຕາມ. ຄວາມປະຫລາດໃຈຂອງບຸກຄົນຜູ້ນັ້ນ ປະກົດວ່າໃຫຍ່ຫລວງອີຫລີ ເພາະເພິ່ນບໍ່ເຄີຍເຫັນຄົນຢູຣົບຈັກເທື່ອ ເພິ່ນບອກໃຫ້ຮູ້ວ່າ ຢູ່ທີ່ເມືອງເພິ່ນມີຄຳ ຍານ ແລະ ຄັ່ງ ຢ່າງຫລວງຫລາຍ ເພື່ອຈະແລກເຄື່ອງນຸ່ງຫົ່ມຊຸດງົດງາມທີ່ມີຫລາຍສີສັນ ແລະ ແລກເອົາຜ້າແພຂາວ. ການທີ່ຈະເຕົ້າໂຮມເອົາສິນຄ້າ ໃຫ້ຄົບຈຳນວນເງິນ 70 ລິວຄຳ ນັ້ນ ເປັນເລື່ອງງ່າຍດາຍ ພໍ່ຂອງເພິ່ນເສັງພາສີແຕ່ລະປີເປັນຈຳນວນເງິນເຖິງ 10 ກັດຕິຄຳພຸ້ນ ເພິ່ນໄດ້ເວົ້າວ່າ ເທື່ອໜ້າຖ້າພວກເຮົາໄປປະເທດລາວອີກແລ້ວ ຈົ່ງໃຫ້ພວກເຮົາໄປຫາເພິ່ນໂລດ ແລ້ວເພິ່ນຈະຈັດການໃຫ້ທຸກຢ່າງ ທີ່ຢູ່ໃນອຳນາດຂອງ ເພິ່ນ ຕົວເມືອງປະວາຕັ້ງຢູ່ 10 ຄືນທາງຍ່າງ ຢູ່ໃນເຂດພູເຂົາທີ່ສູງສັນ ພາຍຫລັງທີ່ໄດ້ສົນທະນາກັນເປັນເວລາ 3- 4 ຊົ່ວໂມງແລ້ວ ພວກເຮົາກໍເລີຍກັບຄືນສູ່ວຽງຈັນ.

ເດືອນຕໍ່ມາທັງເດືອນ ບໍ່ໄດ້ມີເຫດການຫຍັງ ສົມຄວນທີ່ຈະຕ້ອງໄດ້ບອກເຫລົ່າເກີດຂຶ້ນ. ແຕ່ລະມື້ກໍມີເຮືອຈຳນວນໃດຈຳນວນໜຶ່ງຕ່າງສິນຄ້າລ່ອງລົງໄປ.

ວັນທີ່ 2 ກໍລະກົດ ພວກເຮົາໄດ້ຮັບຈົດຫມາຍຈາກພໍ່ຄ້າວັນວຸດສະຕົບ ລົງວັນທີ່ 13 ມີນາ ຊຽນມາຈາກໄລຍະທາງ 16 ມິລລ໌ ພໍປະມານ ຢູ່ໃຕ້ບາສັກລົງໄປ ທ່ານເຫລົ່າຂ່າວໃຫ້ຮູ້ວ່າ ຜູ້ຊ່ອຍທ່ານ ເຈເຣມຽດ ເດີວານ ແລະ ນາຍຄຸມຜູ້ໜຶ່ງຖືກພວກປັອກຕຸຍການຄາດຕະກຳຢູ່ປະເທດກຳພູຊາ ແລະ ອັງກະສັດທັງເຖົ້າ ແລະໜຸ່ມຖືກປົງພະຊົນ ພ້ອມດ້ວຍຜູ້ທີ່ຈົ່ງຮັກພັກດີຕໍ່ພະອົງ ໂດຍທ່ານ ນັບປຣາ ເປຣ

ເຕຣາ ຜູ້ທີ່ເປັນຍາດສະໜິດ ທັງເປັນມຸງກຸດສືບທອດບັນລັງໂດຍຊອບທຳ ແລ້ວກໍ່ຍາດເອົາບັນລັງໄປໄດ້.

ໃນໄລຍະດັ່ງກ່າວນັ້ນ ຍັງມີນັກບວດຄຸນພໍ່ໂລແມັງ ປັອກຕຸຍການສອງຄົນໄດ້ມາເຖິງວຽງຈັນເພິ່ນໄດ້ມອບໝາມ້ອຍສີຂາວສອງໂຕ "ກູຣີ" 1 ໂຕ ກະຕ່າຍ 1 ໂຕ ແລະ ຜ້າໄໝມກວາງຕຸ້ງຫລາຍໄມ້ ເພິ່ນຍັງໄດ້ມອບກ້ອງສ່ອງທາງໄກ 1 ອັນໃຫ້ແກ່ພຣະລະຂັນ ເພື່ອໃຫ້ທ່ານສະບັບສະໜູນ ຄຳຮ້ອງທີ່ຈະສະເໜີຕໍ່ເຕວິນຍາອາແສນ ເລື່ອງອະນຸຍາດເຜີຍແຜ່ ສາສະໜາເຢຊູ. ແຕ່ພວກເພິ່ນກໍໄດ້ຮັບຄຳຕອບວ່າ ພວກເພິ່ນບໍ່ຕ້ອງເຮັດຫຍັງເລີຍ ເວັ້ນເສຍແຕ່ພວກເພິ່ນຈະກະທຳຕົວໃຫ້ສອດຄ່ອງກັບຄວາມເຊື່ອຖືຂອງຊາວລາວທີ່ນັ້ນ ແຕ່ເພື່ອຈະເຮັດໃຫ້ໄດ້ແນວນັ້ນພວກເພິ່ນຄວນຮຽນພາສາຂອງປະເທດນີ້ ພວກເພິ່ນຕ້ອງແຖຜົມ ຄຸມຜ້າຂອງສີງພາຍຫລັງທີ່ໄດ້ຮຽນໜັງສືຜູກໜັງສືທຳ ແລະ ຮີດຄອງຂອງຊາວນອກເຢຊູກ່ອນແລ້ວ. ເງື່ອນໄຂດັ່ງກ່າວບໍ່ສອດຄ່ອງກັບພະ ປອັກຕຸຍການເລີຍ ຄວາມຈິງໃນຈຳນວນຕ່າງປະເທດທັງຫລາຍນັ້ນ ຊາດດັ່ງກ່າວເປັນຊາດທີ່ຊາວລາວຮັກໄຄ່ໜ້ອຍທີ່ສຸດ.

ວັນທີ 11 ສິງຫາ 1642 ພວກເຮົາໄດ້ຖືກຮຽກໃຫ້ໄປພົບ ເຕວິນຍາ ກົມພັນເພື່ອຈະຮັບການສັ່ງລາຈາກທ່ານ. ພາຍຫລັງການສົນທະນາໂອ້ລົມກັນ ເຖິງສິ່ງທີ່ຫາຍາກຢູ່ໃນປະເທດຂອງພວກເຮົາ ແລະ ຢູ່ ບັດຕາເວຍ ແລ້ວທ່ານໄດ້ຈົ່ງຈື່ໃຫ້ພວກເຮົາຮີບກັບມາໄວທີ່ສຸດເທົ່າທີ່ຈະໄວໄດ້. ທ່ານເວົ້າວ່າ ພະບາດສົມເດັດພ້ອມທຸກຢ່າງ ທີ່ຈະອຳນວຍຄວາມສະດວກໃຫ້ແກ່ພວກເຮົາ ແລະຈະອະນຸຍາດໃຫ້ພວກເຮົາ ຄ້າຂາຍໄດ້ຢ່າງເສລີ ໃນທົ່ວດິນແດນແຫ່ງຣາຊະອານາຈັກ. ທ່ານໄດ້ເອົາຂອງຝາກ ຈາກພະອົງທີ່ຈະມອບໃຫ້ແກ່ທ່ານນາຍພົນ ວັນດີເມັນ ມາໃຫ້ພວກເຮົາເບິ່ງ ມີຂັນໝາກຄຳຂັນໜຶ່ງ ພ້ອມດ້ວຍເຄື່ອງປະກອບຄົບຊຸດ ເປັນຜົນງານທາງສິລະປະ ອັນປານີດຢ່າງຫາສິ່ງປຽບບໍ່ໄດ້ ພ້ອມທັງມີສານຈາກອົງກະສັດຕິດມາພ້ອມດ້ວຍ. ສິ່ງເຫລົ່ານີ້ໄດ້ຖືກມອບໃຫ້ແກ່ນາຍເຮືອຄົນລາວຊື່ມົນທົບແລ້ວມື້ໃໝ່ມາ ພວກເຮົາກໍພາກັນຈາກລາຊະສຳນັກໄປ. ບົນເສັ້ນທາງຂາກັບຂອງພວກເຮົາ ພວກເຮົາຕ້ອງໄດ້ລຳລຽງເຂົ້ານ້ຳຊັບປາຈາກທຸກແຫ່ງ ທັງນີ້ ກໍ່ຈາກປາລະມີຂອງອົງກະສັດເອງ.

ວັນທີ່ 1 ກັນຍາ ຜູ້ວ່າຣາຊະການເມືອງ ລໍຂັນ (ລະຄອນ) ພຣະບູກາ ໄດ້ມອບປາໃຫຍ່ໂຕໜຶ່ງ ແລະເຂົ້າ 3 ກະບຸງ ໃຫ້ແກ່ພວກເຮົາ. ວັນ ທີ່ 4 ຂອງເດືອນດຽວກັນນັ້ນ ພວກເຮົາໄດ້ໄປເຖິງບ້ານເຮືອນຫີນ(77) ນະທີ່ນັ້ນ ເພິ່ນກຳລັງປົວແປງວັດເກົ່າແກ່ເຮັດດ້ວຍຫີນ ເຊິ່ງຖືກທຳລາຍລົງ ໂດຍສາຍຟ້າ ກ່ອນໜ້ານີ້ຫລາຍປີ. ວັດດັ່ງກ່າວນັ້ນປຸກຂຶ້ນແລ້ວ ພ້ອມດ້ວຍພະເຈດີ ອາບນ້ຳຄຳສີເຫລື້ອມງາມດີ. ເມື່ອຖືກຢຸດສະຫງັກດ້ວຍແກ້ງຫີນ ພວກເຮົາເລີຍພາກັນໄປຕັດຟືນ ໃນມື້ຕໍ່ມາຢູ່ໃນປ່າທີ່ຕັ້ງຢູ່ລະຫວ່າງສຳພະນາ ແລະ ນາແຫວນ ແຕ່ວ່າພວກເຮົາກໍໄດ້ຈຳຕ້ອງຮີບກັບ ເພາະຮູ້ຂ່າວວ່າ ກ່ອນໜ້ານັ້ນ 6 ມື້ ເສືອໄດ້ຄຸບເອົາຄົນໄປກິນເຖິງ 5 ຄົນ ພາຍຫລັງທີ່ພວກເຮົາໄດ້ຜ່ານຜ່າແກ້ງຮ້າຍ ແລະ ຫີນຜາມາຫລາຍຕໍ່ຫລາຍແລ້ວ ໃນທີ່ສຸດພວກເຮົາກໍໄດ້ໄປເຖິງບາສັກ ເຊິ່ງເປັນເມືອງຊາຍແດນສຸດຂອງປະເທດລາວ.

(ຜູ້ຊ່ອຍສອງທ່ານນັ້ນ ບໍ່ໄດ້ເວົ້າຫຍັງກ່ຽວກັບການເດີນທາງ ຂອງພວກເຂົາເຈົ້າຕໍ່ໄປອີກເລີຍ).

ຄຳອະທິບາຍ

ຂອງທ່ານ ຝຣັ່ງຊົສ ກາຣເຍ

1. Louwen ຂອງພາສາພວກໂຮນລັງນັ້ນ ອ່ານອອກເປັນສຽງ " Laowen" (ລາວເວັນ) ຄື ຊາວລາວ ໄທລາວ ຫລື ຄົນລາວນັ້ນເອງ ໃນປື້ມຕົ້ນສະບັບຂອງທ່ານ ວັນວຸດສະຕົບ ລາງບ່ອນກໍ່ເຫັນທ່ານຂຽນ (Louwen) ແລະ ລາງບ່ອນກໍ່ຂຽນເປັນ (Laowen) .

ຂ້າພະເຈົ້າຂໍໃຊ້ຄຳວ່າ "ລາວ" ແທນຄຳວ່າ "ລາວເວັນ" ຕາມຕົ້ນສະບັບພາສາໂຮນລັງ.

2. ແມ່ນ້ຳລາວທີ່ແທ້ຈິງແລ້ວ ແມ່ນແມ່ນ້ຳຂອງນັ້ນເອງ. ຄຳວ່າແມ່ໂຂງນັ້ນແມ່ນຊື່ຂອງພວກສະຫຍາມ ແລະ ຊື່ນັ້ນເອງທີ່ພວກປ້ອກຕຸຍການ ໄດ້ຂະໜານໃຫ້ແກ່ປະເທດກຳພູຊາ ຊື່ຂອງຊາວລາວແທ້ແມ່ນແມ່ນ້ຳຂອງ ຊື່ຂອງກຳພູຊາແມ່ນ ຕົງເລທົມ ແລະ ຊື່ຂອງພວກອານນາມແມ່ນ ຊົງເລີນ ເຊິ່ງບໍ່ແມ່ນຊື່ແທ້ຂອງມັນ. ມັນພຽງແຕ່ແປວ່າ ແມ່ນ້ຳໃຫຍ່ທີ່ນັ້ນ ສ່ວນຊື່ທີ່ວ່າ ແມ່ນ້ຳລາວ (ລາວເວັນ) ນັ້ນ ເຫັນແຕ່ຢູ່ໃນປື້ມຂອງທ່ານວັນວຸດສະຕົບທີ່ນັ້ນ.

3. ເປຄູ ຫລື ພະໂຄນັ້ນ ປັດຈຸບັນເປັນດິນແດນຂອງປະເທດມຽນມາ ນະທີ່ນີ້ພວກເຮົາຈະເຫັນວ່າ ໃນສະຕະວັດທີ່ 16 ແລະ 17 ຂອງຄິດຕະການນັ້ນ ຜູ້ຄົນພາກັນເຊື່ອຢ່າງເປັນເອກະສັນວ່າ ແມ່ນ້ຳຂອງ (ແມ່ນ້ຳກຳພູຊາ) ນັ້ນ ໄຫລຜ່ານປະເທດເປຄູ ນອກນັ້ນ ຍັງຄິດວ່າ ມີປາກນ້ຳຂອງອີກປາກໜຶ່ງນະທີ່ນັ້ນ. ຄຸນພໍ່ເລເຣັຍ ຍັງໄດ້ຢືນຢັນຢ່າງແນ່ວແນ່ວ່າເປັນຄວາມຈິງ. ສະໄໝຂອງກຣິດສະໂຕວານ ເດີຈັກ ຄືກ່ອນໜ້ານັ້ນສາມສ່ວນສີ່ຂອງສະຕະວັດ ຜູ້ຄົນເຊື່ອວ່າ ແມ່ນ້ຳກຳພູຊາ ກໍຄືແມ່ນ້ຳເປຄູ ແລະ ອາຣະກັນ ເປັນສາຂາຂອງແມ່ນ້ຳຄຸງຄາ ກົງກັນຂ້າມພູມມີສາດ ສະໄໝໃໝ່ເຊື່ອມາແຕ່ດົນນານພໍສົມຄວນວ່າ ແມ່ນ້ຳສາຍຕ່າງໆໃນສູວັນນະພູມນັ້ນ ມີການຄົບຈອດລະຫວ່າງກັນ ທ່ານແວັງຊ້ອງດົງ ດຸຍມູແລັງ ຍັງໄດ້ບອກໄວ້ວ່າ ແມ່ນ້ຳ (ແມ່ນ້ຳເຈົ້າພະຍາ) ກັບແມ່ນ້ຳກຳພູຊາ (ແມ່ນ້ຳຂອງ) ນັ້ນ ເປັນແມ່ນ້ຳສາຍດຽວກັນ ເຊິ່ງພົບຈອບກັນຢູ່ເສັ້ນຂະໜານດຽງ 18 ອົງສາ.

4. ມັນແມ່ນຊື່ຂອງເຂດໜຶ່ງຂອງແມ່ນ້ຳຂອງ ເຊິ່ງປະກອບດ້ວຍໝູ່ດອນ ກາໄຊຕົນ ແລະ ໝູ່ບ້ານກະນອງ ບ້ານມະຫາຊຽດ ບ້ານບັດຕິວ ແລະ ອື່ນໆ ປັດຈຸບັນກາຍເປັນເຂດທີ່ມີການປຸກຝັງຫລາຍທີ່ສຸດ ແລະ ມີຜູ້ຄົນໜາແໜ້ນທີ່ສຸດຂອງກຳພູຊາ.

5. ປັດຈຸບັນກາຍເປັນກົມປົງຈາມ ບໍ່ຫ່າງໄກຈາກເມືອງຮ້າງ ພະນົມບາໄຈພໍທີ່ໃດ ອັນເຄີຍເປັນບ່ອນປະທັບຄັ້ງໜຶ່ງ ຢ່າງເທິງນານຂອງກະສັດກຳພູຊາ.

6. ມັນຈະເປັນການເຫລືອວິໄສທີ່ຈະເຫລົ່າເຫດການທັງຫມົດ ດ້ວຍຄຳອະທິບາຍສັ້ນໆນີ້ໄດ້ ຂ້າພະເຈົ້າຢາກໃຫ້ນັກອ່ານລອງໄປຄົ້ນຫາ ບົດຄວາມປະຫວັດສາດກ່ຽວກັບກຳພູຊາ ເຊິ່ງຈະມີໃນໜັງສືການເດີນທາງສຳຫລວດສຸວັນນະພູມປະເທດ (ອິນໂດຈີນ).

7. ແມ່ນໜ່ວຍພູ ທີ່ປົກຫຸ້ມດ້ວຍປ່າໄຜ່ຕາມຝັ່ງຂວາຂອງແມ່ນ້ຳຂອງ ເຊິ່ງປັດຈຸບັນມີຊື່ເປັນພາສາກຳພູຊາວ່າ ພະນົມຮັບໃຈ ເມື່ອເດີນທາງຈາກທົ່ງຮາບພຽງຕາມດິນປົ່ງປາກແມ່ນ້ຳຂອງຂຶ້ນມາ ພໍ້ດິນຫລຸບໂນນໜ້ອຍໜຶ່ງ ກໍຮູ້ສຶກວ່າກາຍເປັນພູສູງໄປຫມົດ.

8. ຝັ່ງຕາວັນອອກ ຫລື ຝັ່ງຊ້າຍ.

9. ໂນນຈຳນວນໜຶ່ງ ເຊິ່ງຈາກນັ້ນເມືອແລ້ວ ນ້ຳຂອງບໍ່ໄດ້ເບັ່ງຊື່ຂຶ້ນເມືອທາງເໜືອເລີຍ ມັນຄົດທົບສອກໄປທາງດ້ານຕາເວັນຕົກ

10. ແມ່ນແມ່ນ້ຳ ເຈລັງ ແລະແຂວງ ກະບົງ ຂະມຸນ ເຊິ່ງຕັ້ງຢູ່ ທາງຝັ່ງຊ້າຍຂອງແມ່ນ້ຳຂອງ

11. ຊຳບົກ ແລະ ຊຳບໍ ຊື່ບ້ານທັງສອງດັ່ງກ່າວໄດ້ກາຍມາເປັນຊື່ຂອງແຂວງໜຶ່ງຂອງກຳພູຊາ ເຊິ່ງປັດຈຸບັນເປັນແຂວງຊາຍແດນ ດ້ານຕາເວັນຕົກຂອງແມ່ນ້ຳຂອງ ບ້ານທຳອິດໃນສອງບ້ານ ເຊິ່ງຕັ້ງຢູ່ນະທີ່ນັ້ນ ໄດ້ພົ້ນຈາກການເປັນສະຖານທີ່ການຄ້າສຳຄັນ ສະໄຫມ ວັນວຸດສະຕິບໄປແລ້ວ ແລະໄດ້ກາຍມາເປັນຈຸດສຳຫລວດດ້ວຍກຳປັ່ນພະລັງອາຍນ້ຳ ກ່ອນການເດີນທາງຂອງຄະນະສຳຫລວດຂອງຝຣັ່ງທີ່ນັ້ນ. ຄວາມຈິງມັນເປັນການເລີ່ມຕົ້ນຂອງແກ້ງຮ້າຍ ທີ່ຍາວຢຽດໄປເຖິງເຄິ່ງທາງ ແຕ່ນີ້ໄປເຖິງປາກນ້ຳອັດຕະປື (ເຊກອງ) ເຊິ່ງຈະໄດ້ເວົ້າລະອຽດຕໍ່ໄປ.

12. ນ້ຳນ້ອຍນັ້ນອາດຈະແມ່ນ ບ້ານອັດຕະປື ປັດຈຸບັນ ເຊິ່ງດຽວນີ້ຍັງເປັນສູນການຄ້າຂາຍສຳຫາດ ແລະ ຝຸ່ນຄຳໃນພາກໃຕ້ຂອງລາວຢູ່. ສ່ວນພູເນົານັ້ນ ອາດຈະແມ່ນຊື່ທີ່ແຜງມາຈາກຫລາຍກຸ່ມຊົນເຊັ່ນ (ໄບນອງ ເຊດາຣ ບານຸແລະອື່ນໆ) ເຊິ່ງອາໄສຢູ່ເຂດຊາຍແດນລະຫວ່າງແມ່ນ້ຳຂອງ ແລະ ສາຍພູໂກແຊ້ງຊິນ ຈະບໍ່ເປັນປະໂຫຍດຫຍັງເລີຍທີ່ຈະເວົ້າເຖິງເກືອ ເຊິ່ງກໍເປັນຂອງທີ່ຕ້ອງການທີ່ສຸດໃນເຂດນັ້ນ ແຕ່ກໍບໍ່ມີລາຄາຊ້ຳ ທ່ານວັນວຸດສະຕິບເວົ້າໄວ້ທັ້ນດອກ.

13. ຣາຊະອານາຈັກຈຳປາ ເຊິ່ງໄດ້ຫາຍສາບສູນໄປໄດ້ ປະມານສະຕະວັດກ່ວາ ຈາກແຜນທີ່ສຸວັນນະພູມປະເທດ (ອິນໂດຈີນ) ແລ້ວນັ້ນ ແຕ່ກ່ອນ ໄດ້ມີບົດບາດສຳຄັນໃນປະຫວັດສາດ ຂອງແຫລມສຸວັນນະພູມນີ້. ປະຊາກອນຂອງອານາຈັກນີ້ ຖືກຂັບໄລ່ຂຶ້ນໄປຢູ່ແຖບພູດອຍຂອງປະເທດ ໂກແຊ້ງຊິນ ແລະ ພາຍໃຕ້ຊື່ທີ່ວ່າ " ຈາມ " ພວກນັ້ນ ເຂົາໄດ້ກາຍເປັນຜູ້ເສັງຊ່ອຍໃຫ້ພວກອານາມ. ຈຳນວນໜຶ່ງ ຂອງພວກເຂົາດຳລົງຊີວິດຢູ່ທີ່ກຳພູຊາ.

14. ນະຄອນຫລວງຂອງ ຟອກໂມສ ໄຕອ້ວນພູ (ໄຕ້ຫວັນ)

15. ອາດຈະແມ່ນແມ່ນ້ຳ ບຽນຮ່ວາ ຫລື ແມ່ນ້ຳ ໄຊງ່ອນ ເຊິ່ງແມ່ນແມ່ນ້ຳທີ່ເດີນເຮືອໄດ້ເພື່ອຈະເຂົ້າເລິກເຖິງດິນແດນອານາຈັກຈຳປາໃນສະຕະວັດທີ່ 16.

16. ເຕວິນຍາ ແລະ ນະປຣານັ້ນ ແມ່ນຊື່ ທີ່ຢືມມາຈາກ ພາສາມາເລ ເພື່ອໃຊ້ເປັນນາມມະຍົດ ໃຫ້ແກ່ຕຳແໜ່ງ ຫລື ຂັ້ນຜູ້ປົກຄອງໃນ ປະເທດກຳພູຊາ.

17. ເບີຊອງ ຕັ້ງຢູ່ປາກນ້ຳຄີບກັນລະຫວ່າງແມ່ນ້ຳກຳພູຊາ ແລະ ແມ່ນ້ຳອັດຕະປື (ແມ່ນ້ຳຂອງ ແລະ ແມ່ນ້ຳເຊກອງ) ປັດຈຸບັນ ຊື່ ເບີຊອງ ບໍ່ມີອີກແລ້ວ ມັນໄດ້ກາຍເປັນຊຽງແຕງ ເຊິ່ງຢູ່ແຄມແມ່ນ້ຳເຊກອງ ຫ່າງຈາກຕົວເມືອງຮ້າງເກົ່າບໍ່ທີ່ໃດກີໂລແມັດ.

18. ມາຕາວັດແທກ "ມີລລ໌" ຂອງໂຮນລັງ ໄລຍະທາງແຕ່ປາກນ້ຳເຊກອງເຖິງນ້ຳນ້ອຍ ເຊິ່ງຂ້ອຍເປັນຜູ້ຄິດໄລ່ເບິ່ງ ຕົກເປັນກວ່າຮ້ອຍມີລລ໌ ພູມສາດ.

19. ປະມານ 6 ກີໂລກຣາມ, ກັດຕີ ແມ່ນຄວາມມາເລ ຮຽກຕາຊັ່ງຂອງຈີນ.

20. ຊາວຍີ່ປຸ່ນເປັນທະຫານດີເດັ່ນກວ່າຊາດໃດໆ ໃນພາກຕາເວັນອອກໄກ. ພວກເຂົາປະຕິບັດໜ້າທີ່ ໃນອິນໂດຈີນເໝືອນດັ່ງຊາວສະວິດໃນຢູໂຣບ, ບັນດາກະສັດຂອງສະຫຍາມກຳພູຊາ ຕັງກັ່ງ ແລະ ອື່ນໆ ໄດ້ມີທະຫານອາລັກຂາເປັນຊາວຍີ່ປຸ່ນຕັ້ງແຕ່ດົນນານແລ້ວ.

21. ຄວາມປະຫມາດໃນທີ່ນີ້ນັ້ນ ເຫັນໄດ້ຢ່າງຈະແຈ້ງ

ມັນຄົງຈະແມ່ນແງ່ໜຶ່ງຂອງນ້ຳຂອງ ເຊິ່ງເໜືອຂຶ້ນໄປຈາກຊຽງແຕງແລ້ວ ກໍມີໜ້ານ້ຳກວ້າງຂວາງຄອບຄຸມເປັນເນື້ອທີ່ສະລັບສັບຊ້ອນດ້ວຍເກາະດອນ ແລະ ກໍມີແຕ່ແກ້ງຮ້າຍຕິດຕໍ່ບໍ່ເນື່ອງກັນຈົນເມືອຮອດຄອນ (ຄອນພະເພັງ) ບາງທີເຈົ້າຂອງຜູ້ບັນທຶກພົບຄວາມສັບສົນ ແລະອາດຈະຫລົງກັນກັບແມ່ນ້ຳຕົງເລເຊີປູ ເຊິ່ງມາຈາກພາກຕາເວັນຕົກ ແລະ ມາພົບກັບປະເທດກຳພູຊາຢູ່ເໜືອແກ້ງກໍເປັນໄດ້ອັນຜູ້ຄົນເວລານັ້ນເຊື່ອວ່າ ເປັນເສັ້ນທາງຕິດຕໍ່ກັນກັບດ້ານຕາເວັນຕົກ.

22. ສະແສນຮາມ ຄົງຈະແມ່ນດອນໄຂງນັ້ນເອງ ຕໍ່ໜ້າດອນດັ່ງກ່າວດ້ານຕາເວັນຕົກ ກໍມີຜາຫີນໜ່ວຍໜຶ່ງຮຽກວ່າ ພູຄົນແຮ່ ຊື່ຂອງດອນ ແລະ ພູດັ່ງກ່າວນັ້ນປັດຈຸບັນເປັນພາສາລາວ ສ່ວນຊື່ທີ່ ທ່ານວັນວຸດສະຕົບໃຫ້ໄວ້ນັ້ນ ຄົງຈະມາຈາກຄວາມເວົ້າສຽງສະເຫມນ ເຊິ່ງກໍມີຄວາມຜິດແປກອອກໄປພໍສົມຄວນ.

23. ຄົງຈະແມ່ນຊື່ຄົນກຳພູຊາ ທີ່ເປັນເຈົ້າຂອງເຮືອ. (ຂ້າພະເຈົ້າເຫັນວ່າ ບໍ່ແມ່ນຕາມຄຳສັງເກດຂອງ ທ່ານ ກາຣເຢເລີຍ ເພາະວ່າຊື່ເຫລົ່ານີ້ເປັນຊື່ລາວເປັນຕົ້ນມີແສນມຸງຄຸນ, ມົນທົບ ແລະເຈົ້າຄອກເໜືອ ອາດຈະເປັນເຈົ້າຄອກເໜືອກໍໄດ້ ເພາະຄວາມໃນຕົ້ນສະບັບຂາດຫາຍໄປ ຍັງເຫລືອແຕ່ Jouw ... orna ແຕ່ໜ້າຕໍ່ໆໄປຂຽນວ່າ Jouw corna.)

24. ຫົວໜ້າສະຖານີການຄ້າຂອງຊາວໂຮນລັງຢູ່ກຳພູຊາ. ທ່ານໄດ້ຖືກຄາດຕະກຳໄປໃນປີ 1643 ພ້ອມດ້ວຍເພື່ອນຮ່ວມຊາດຂອງທ່ານ ໂດຍພວກກຳພູຊາຍ້ອນຄວາມຍຸແຍ່ຂອງພວກປ້ອກຕຸຍການ.

25. ສອງຟາກຝັ່ງຂອງແມ່ນ້ຳຂອງໃນແຖບນີ້ນັ້ນ ຍັງອຸດົມດ້ວຍສັດປ່ານາງໆພັນ ແຕ່ວ່າໃນດອນຕ່າງໆທີ່ຜູ້ຄົນອາໄສຢູ່ທັງຫມົດນັ້ນ ຝູງກວາງໄດ້ສູນຫາຍໄປ. ເກາະທີ່ໃຫຍ່ກວ່າເພິ່ນໃນແຖບນັ້ນ (ເປັນທີ່ຕັ້ງຂອງເມືອງໂຂງ) ອັນເປັນເມືອງເອກຂອງແຂວງ ເຊິ່ງຕິດຈອດຊາຍແດນກຳພູຊາ ອັນຢູ່ຝັ່ງຂວາຂອງແມ່ນ້ຳຂອງ.

26. ປັດຈຸບັນ ບາສັກ ເປັນເມືອງເອກອານາຈັກນ້ອຍໆໜຶ່ງຂອງລາວ ເສັຽຊ່ອຍໃຫ້ກັບປະເທດສະຫຍາມ. ສະໄຫມວັນວຸດສະຕົບນັ້ນ ພວກເຮົາເຫັນວ່າ ດິນແດນກຳພູຊານັ້ນກວມຂຶ້ນມາສູງກວ່າທີ່ເປັນຢູ່ປັດຈຸບັນ ໃນຝັ່ງຂວາຂອງແມ່ນ້ຳຂອງ.

27. ແມ່ນເຄື່ອງນຸ່ງຊະນິດໜຶ່ງ ເຊິ່ງບໍ່ມາຈາກພາສາລາວ ແລະ ກໍບໍ່ແມ່ນພາສາຂອງກຳພູຊາເລີຍ. ມັນອາດຈະມາຈາກພາສາມາເລ ຫລື ຈາວາ ຫລື ຈີນ ກໍໄດ້ ແຕ່ຖືກດັດສຽງໄປໂດຍພວກຢູໂຣບ ເຊິ່ງປັດຈຸບັນເພິ່ນຍັງໃຊ້ມັນຢູ່ໂດຍທົ່ວໄປ ໃນໝູ່ເກາະອິນໂດເນເຊັຽ. (ຂ້າພະເຈົ້າເຫັນວ່າ ຄຳລາວທີ່ວ່າ "ຜ້າຈີວອນ" ຄົງຈະມາຈາກຄຳດຽວນີ້. ຜູ້ແປ).

28. ປັດຈຸບັນແມ່ນປາກມູນ ແມ່ນບ້ານໜຶ່ງຕັ້ງຢູ່ປາກແມ່ເຊມູນ ເຊິ່ງແມ່ນແມ່ນ້ຳສາຍໜຶ່ງໄຫລມາແຕ່ເມືອງໂຄຣາດ. ອອກມູນຍັງມີຄວາມໝາຍດຽວກັນກັບ "ປາກ" ຫລື "ສົບມູນ" ດ້ວຍ.

29. ແມ່ນ້ຳຕອນແຕ່ປາກມູນຮອດບ້ານນາແວງນີ້ ນັບວ່າເປັນຂັ້ນຕອນທີ່ມີແຕ່ແກ້ງຮ້າຍ ແລະ ຄວາມຫຍຸ້ງຍາກຕິດຕໍ່ນໍ່ເນື່ອງກັນຕະຫລອດເລີຍ.

30. ສຳພະນາ ຄົງຈະແມ່ນບ້ານເຂັມມາຣາດປັດຈຸບັນ ບ້ານມຸກ (ມຸກດາຫານ) ແລະ ພະນົມ (ນະຄອນພະນົມ) ນັ້ນ ຮູ້ໄດ້ງ່າຍດາຍ. ລໍຈັນ ຫລື ລໍກັນນັ້ນ ແມ່ນເມືອງລະຄອນປັດຈຸບັນ ເປັນເມືອງເອກຂອງແຂວງ ເຊິ່ງຂຶ້ນໂດຍກົງກັບບ້ານກອກທີ່ພະນົມນັ້ນ ມີວັດຂອງພຸທະສາສະໜາແຫ່ງໜຶ່ງ ເຊິ່ງໄດ້ຮັບການເຄົາລົບບູຊາທີ່ສຸດໃນປະເທດລາວ ນະທີ່ນັ້ນ ເພິ່ນໄດ້ຮັບຮັກສາຮູບໄວ້ແຜ່ນໜຶ່ງຢ່າງດີ ເປັນຮູບເຈົ້າພະຍາ ພ້ອມດ້ວຍພັນລະຍາໃສ່ເຄື່ອງແຕ່ງກາຍ ສະໄໝສະຕະວັດທີ່ 16. ຕາມທີ່ເຈົ້າທິວບອກໃຫ້ຮູ້ວ່າ ນັ້ນຄົງຈະເປັນຂອງຂ້ວນຈາກທູດໂຮນລັງ.

31. ມັນແມ່ນຄວາມປະໝາດຂອງຜູ້ຂຽນ ເຊິ່ງຈະເຫັນແຈ້ງໃນພາກຕໍ່ໄປຂອງປຶ້ມຫົວນີ້. ປະຕິທິນຂອງຊາດລາວນັ້ນບໍ່ແມ່ນອື່ນໃດ ນອກເໜືອຈາກປະຕິທິນຈີນ ເຊິ່ງໃນນັ້ນ ການເລີ່ມປີໃໝ່ກົງກັບເດືອນກຸມພາ ຫລື ເດືອນມີນາ ຂອງພວກເຮົາ.

32. ເມືອງໜຶ່ງຂອງປະເທດໂຮນລັງ

33. ຄຳວ່າແກ້ງ ໃນພາສາລາວນັ້ນ ບໍ່ແມ່ນນາມມະສັບເລີຍ ສ່ວນຊື່ແທ້ຂອງແກ້ງນັ້ນ ປັດຈຸບັນແມ່ນແກ້ງຫາງທົງນັ້ນເອງ.

34. ເມືອງໂພນພິໄສ ປັດຈຸບັນຕັ້ງຢູ່ປາກນ້ຳຫ້ວຍເຫລືອງ

35. ເມືອງຄຸກເປັນຊຸມຊົນ ຍັງເປັນທີ່ທຳການຄ້າຂາຍຮຸ່ງເຮືອງສົມຄວນ ແລະເປັນບ້ານທີ່ມີສະຖານທີ່ສ້າງເຮືອນ້ຳດ້ວຍ.

36. "ວຽງຈັນ" ຫລື "ຈັນທະນະຄອນ" ເຊິ່ງມີຊື່ເປັນພາສາບາລີວ່າ "ຈັນທະບູຣີ" ເຊິ່ງມີຄວາມຫມາຍດຽວກັນ.

37. ພາໃຫຍ່ ເຊິ່ງຕາມປົກກະຕິ ຈະເຮັດດ້ວຍໄມ້ທາດ້ວຍນ້ຳກ້ຽງ ສຳຫລັບສູ່ຂອງທານໃນວັດ ຫລື ເປັນພາເຂົ້າກິນໃນເຮືອນ.

38. ຫມາຍຄວາມວ່າ ໄດ້ເປັນຜູ້ເລີ່ມກ່ອນໃນການຕິດຕໍ່ເຈົ້າຊີວິດ.

39. ສີເຫລືອງນັ້ນ ຍັງແມ່ນສີຂອງຜ້າຄຸມ ຂອງພະສົງອົງຄະເຈົ້າໃນທົ່ວເມືອງລາວ ແລະ ໃນທຸກປະເທດທີ່ຖືສາສະໜາພຸດ ເວັ້ນເສັຽປະເທດຈີນ ເຊິ່ງສີເຫລືອງນັ້ນ ເປັນສີຂອງເຈົ້າອົງຈັກກະພັດ.

40. ຫອຍເບັ້ຽ ຫລື ຫມາກເບັ້ຽ ຫລື ແກ່ນເບັ້ຽ ທີ່ໃຊ້ຕາງເງິນໃນປະເທດສະຫຍາມ ແລະ ອິນໂດຈີນມາແຕ່ດົນ. ປັດຈຸບັນຍັງໃຊ້ຢູ່ແຕ່ໃນຫລວງພະບາງທີ່ນັ້ນແຕ່ກ່ອນເພິ່ນຕ້ອງໃຊ້ຫອຍເບັ້ຽນີ້ເຖິງ 6000 ແກ່ນ ຈຶ່ງຈະເທົ່າ 1 ຕິການ. ປັດຈຸບັນລາຄາປ່ຽນໄປຄື ລະຫວ່າງ 2000 ຫາ 2600 ແກ່ນ ເທົ່າກັບ 1 ຕິການ.

41. ປະມານ 8 ຟຣັງ. ມາເອສ ຫລື ມາຍົງໜຶ່ງເທົ່າກັບ 1/4 ຂອງຕິການ ຫລືເຄິ່ງໜຶ່ງຂອງຕາແອນຂອງຈີນ.

42. ຂ້ອຍບໍ່ຮູ້ຈັກຄວາມຫມາຍ ທີ່ແມ່ນຢ່ຳຂອງຄຳບາຕິນ ພາສາມາເລ ແປວ່າ ຖ້ວຍຂັນ ຫລື ໄອ.

43. ຄວາມຊົງຈຳຂອງຜູ້ບັນທຶກ ອາດຈະຄາດເຄື່ອນໄປ ເພາະວ່າໄລຍະທາງນັ້ນ ມີຢູ່ສອງຫລັກກິໂລແມັດທີ່ນັ້ນ. ອາດຈະແມ່ນພິມຜິດກໍ່ບໍ່ຮູ້ ເພາະມີຄວາມຜິດເຫລືອຫລາຍທີ່ສຸດໃນປຶ້ມ. ຕົວວຽງທີ່ມີປະຕູວຽງ ເຊິ່ງວັນວຸດສະຕົບໄດ້ໃຊ້ເພື່ອອອກຈາກວຽງ ຖະໜົນຫລວງທີ່ນັ່ງຢຽດໄປສູ່ທາດຫລ່ຽມສີຄຳ ເຊິ່ງຈະເວົ້າລະອຽດຕາມຫລັງ ທຸກສິ່ງເຫລົ່ານີ້ຍັງມີຢູ່ຈົນຮອດປັດຈຸບັນ. ທາດຫລ່ຽມດັ່ງກ່າວນັ້ນ ຊາວລາວຮຽກວ່າ ທາດຫລວງ. ແລະບໍ່ມີສີຄຳອີກເລີຍ.ສ່ວນວັດສ່ວນຫລວງຫລາຍທີ່ອ້ອມຮອບທາດນັ້ນກໍເປັນຊາກຫີນຮ້າງໄປຫມົດ. ແຕ່ວ່າຄົນທ້ອງຖິ່ນຍັງໃຫ້ການສັກກາລະບູຊາຢູ່.

44. ກິນຈັກການທະຫານ ທີ່ເພິ່ນສະແດງຕໍ່ຊາວໂຮນລັງ ເຮັດໃຫ້ເຂົາເຈົ້າຕົກສະຫງົບສົນເທຈົນເກີດເຫດອັນເຮັດໃຫ້ເຂົາເຈົ້າຄຶດວ່າເບັງຊອນນ້ອຍທີ່ປະດັບກຳແພງພະທາດຫລວງນັ້ນ ເປັນຮູປືນສູ້ຮົບໄປຫມົດ.

45. ຜູ້ຄົນຮູ້ແລ້ວວ່າການແຫ່ບຸນພະເຈົ້າທີ່ນະຄອນອັງແວນັ້ນ ກໍເປັນໄປໃນທາງນອງດຽວກັນນີ້. ບັດນີ້ມີທູດຂອງປະເທດມະຫາອຳນາດຕາເວັນຕົກ ທ່ານໃດແດ່ທີ່ຍອມຮັບປະຕິບັດພິທີກຳອັນນີ້ ? ນີ້ແຫລະແມ່ນເຫຍື່ອລໍ້ ແລະ ກົນລວງຂອງຊາວຕາເວັນຕົກ ເພື່ອຫລອກລວງຊາດຕາເວັນອອກໄກ ໃນກຳລັງແຮງທີ່ແທ້ຈິງຂອງຢູໂຣບ. ຄວາມຈິງຫວ່າງບໍ່ດົນມານີ້ ອະຣິຍະທຳສະໄຫມໃຫມ່ ກໍໄດ້ປະນາມການກະທຳແບບຕໍ່າຊ້າປະເພດນີ້ມາແລ້ວ. ໃນທ້າຍສະຕະວັດນີ້ ປະເທດອັງກິດເຊິ່ງຕາງໜ້າໂດຍ ລອດ ມາຄາດເນ ຍັງໄດ້ກົ້ມຂາບຕໍ່ໜ້າເຈົ້າຈັກກະພັດຈີນອີກ ແລະ ປີ 1823 ຄຣັບເຟີດ ໄດ້ຢ່າງຕີນເປືອຍເຂົ້າໄປໃນຫ້ອງຮັບຮອງຂອງກະສັດສະຫຍາມ.

46. ແມ່ນ 1/5 ຂອງກັດຕີ ເຊິ່ງມີນ້ຳໜັກປະມານ 120 ກຣາມ.

47. ການເດີນທາງເຮືອທຳມະດາ ຢູ່ລຳແມ່ນ້ຳຂອງ ລະຫວ່າງວຽງຈັນ ແລະ ກຳພູຊານັ້ນເດີນໄດ້ຕະຫລອດປີ. ທີ່ເວົ້າອອກນະທີ່ນີ້ ກໍພຽງແຕ່ຍົກໃຫ້ເຫັນເຖິງຄວາມຫຍຸ້ງຍາກ ຫລື ອັນຕະລາຍທີ່ມາຈາກແກ້ງບາງແຫ່ງ ໃນທ້າຍລະດູແລ້ງທີ່ນັ້ນ.

48. ປັດຈຸບັນ ເຖິງວ່າຕົ້ນໄມ້ຮົກເຮື້ອໄດ້ເກີດປົກຄຸ້ມໄປທົ່ວສະຖານທີ່ຕັ້ງນະຄອນຫລວງເກົ່າຂອງລາວກໍ່ຕາມ ແຕ່ຢູ່ແຄມແມ່ນ້ຳກຳພູຊາ (ແມ່ນ້ຳຂອງ) ຜູ້ຄົນຍັງສັງເກດເຫັນລານເຮືອ ເຊິ່ງນະທີ່ນັ້ນ ອີງພະມະຫາກະສັດໄດ້ນັ່ງຊົມການສູ້ກັນຂອງນັກສູ້ ແລະ ການຄົບງັນຢູ່ແຄມແມ່ນ້ຳນັ້ນຢູ່. ສ່ວນຊາກຮ້າງຂອງພະຣາຊະວັງນັ້ນ ຢູ່ເລິກເຂົ້າໄປໃນຈັກນ່ອຍ.

49. ອັນນີ້ແມ່ນການຂະໜານຊື່ ໃຫ້ໂດຍອີງຕາມຄວາມຄ້າຍຄືກັນ ແບບຜິວເຜີນທ່ນັ້ນ ແລະ ກໍ່ອາດຈະມາຈາກຄວາມສັບປົນຄົນເລກັນໃນສະໝອງ ຂອງນັກແຜ່ນທີ່ສາດ ໃນເວລານັ້ນກໍ່ເປັນໄດ້. ຢູ່ທີ່ເມືອງລາວ ມີເຜົ່າພັນຄົນປະເພດໜຶ່ງເຊິ່ງຕັດຜົມສັ້ນໆ ແລະ ມີກຳລັງວັງຊາ.

50. ເຄື່ອງຂົບໝາກ. ການຂ້ຽວໝາກນັ້ນ ເປັນປະເພນີໃນບັນດາປະຊາຊາດແຫລມອິນໂດຈີນ. "ປີນັງ" ແມ່ນພາສາມາເລ ແປວ່າ ຕົ້ນໝາກ ແລະ "ສີຣີ" ແປວ່າ ໃບພູ.

51. 1200 ກຼາມ.

52. ພາຍຫລັງທີ່ປະເທດລາວ ຕົກຢູ່ໃນການຄອບງໍາ ຂອງສະຫຍາມແລ້ວ ລະບອບການຄ້າຂາຍໃນປະເທດດັ່ງກ່າວ ບໍ່ໄດ້ຮັບການປັບປຸງໃຫ້ດີຂື້ນ ແຕ່ຢ່າງໃດເລີຍ. ເຈົ້າຊີວິດສະຫຍາມຍັງຮັກສາຂຸນນາງຂອງເຂົາໄວ້ ໃນບັນດາແຂວງທີ່ພວກເຂົາຍຶດຄອງຢູ່ ເພື່ອເອົາສິນຄ້າຜະຫລິດຕະພັນຈາກຕາວັນຕົກ ທີ່ຄ້າງສາງ ແລະ ເສັຽຄຸນແລ້ວຢູ່ບາງກອກ ແລກປ່ຽນເອົາສິນຄ້າຜະຫລິດຕະພັນຈາກປະຊາຊົນທ້ອງຖິ່ນຂອງລາວດ້ວຍ ອັດຕາບັງຄັບທີ່ກໍານົດໄວ້ລ່ວງໜ້າແລ້ວ.

53. ຜູ້ຄົນຮູ້ທົ່ວກັນວ່າ ພວກໂຮນລັງເປັນຜູ້ຂັບໄລ່ພວກປ໊ອກຕຸຍການ ອອກຈາກແຫລມ ມາລະກາ ໃນປີ 1641 ດ້ວຍຄວາມຮ່ວມມືຈາກຄົນມາເລເອງ ເຊັ່ນ ທ່ານ ອາເຈັນ ທ່ານບິນຕັງ ແລະ ອື່ນໆ.

54. ວັນວຸດສະຕົບໄດ້ຈົບສັນຍາກັບບໍລິສັດແລ້ວ ແລະ ໄດ້ຂໍກັບຄືນປະເທດແລ້ວ.

55. ເພື່ອຄວາມຈະແຈ້ງໃນບົດບັນທຶກຂອງວັນວຸດສະຕົບນີ້ ຂໍໃຫ້ພວກເຮົາຮູ້ໄວ້ວ່າ ວັນວຸດສະຕົບໄດ້ປະຜູ້ຊ່ອຍຂອງທ່ານສອງທ່ານເຊັ່ນ ວິເລັມ ເດີໂກເຢ ແລະ ຮຸຍແບກ ບູເດີວິນສ ໄວ້ທີ່ວຽງຈັນ ເພື່ອລໍຂອງຂວັນຈາກກະສັດລາວ ແລະ ຣາຊະທູດລາວເພື່ອຮ່ວມເດີນທາງໄປນໍາດ້ວຍ.

56. ບັນດາປະເທດທີ່ເຈົ້າຂອງປຶ້ມລືມຍົກອອກມານັ້ນ ແມ່ນປະເທດຈີນ ປະເທດໂກແຊັງຊີນ ຫລື ກຸ່ຍນ່າມ ປະເທດຂະເໝນ ປະເທດເປຄູ (ພະໂຄ) ແລະ ປະເທດສະຫຽາມ.

57. ໄລຍະທາງແຕ່ວຽງຈັນເຖິງປາກແມ່ນໍ້າກໍາພູຊາ (ນໍ້າຂອງ) ເຊິ່ງແທກໄປຕາມຄວາມລະອຽດລະອ່ຽວຂອງມັນແລ້ວ ກໍ່ມີປະມານກ່ວາ 750ມີນ ພູມີສາດຖ້າແທກຕາມທາງນົກບິນກໍ່ຈະໄດ້ປະມານ 600 ມີນ.

58. ຂ້ອຍຄິດວ່າ ເມືອງຊແວ ນັ້ນແມ່ນເມືອງຊຽງຣາຍ ປັດຈຸບັນເປັນເມືອງຮ້າງ ແຕ່ສະໄໝວັນວຸດສະຕົບນັ້ນ ເປັນສະຖານທີ່ສໍາຄັນ ຕັ້ງຢູ່ນໍ້າແມ່ກົກ ເຊິ່ງເປັນສາຂາຂອງແມ່ນໍ້າກໍາພູຊາ (ນໍ້າຂອງ).

59. ຄວາຍ ແລະ ຊ້າງນັ້ນ ເມື່ອເດີນທາງໄກຍັ່ງມື້ ພາຍໃຕ້ແສງແດດກ້າແລ້ວ ຈະຕ້ອງໃຫ້ມີຫ້ວຍ ແລະ ໜອງນໍ້າໃຫ້ຟູມເລື້ອຍໆ ບໍ່ດັ່ງນັ້ນກໍ່ຈະທົນບໍ່ໄດ້ຕໍ່ແສງແດດເລີຍ.

60. ແມ່ນເຂດທີ່ຕັ້ງຢູ່ລະຫວ່າງ ອຸເທັນ ແລະ ວຽງຈັນ.

61. ພະນິ້ນ ແມ່ນນາມມະຍົດ ຄວາມຫມາຍແທ້ຂອງມັນ ແປວ່າສັກສິດ.

62. ແມ່ນຍົດເຊິ່ງຊໍ້າກັບພະຍາເມືອງເຊັ່ນ: ພະຍາເມືອງແສນ ພະຍາເມືອງຊ້າຍ ພະຍາເມືອງຂວາ ພະຍາເມືອງກາງ ອັນປະກອບເປັນລັດຖະສະພາຂອງລາວ.

63. ປີໂກນໜຶ່ງເທົ່າກັບຮ້ອຍກັດຕີ ແລະ ເທົ່າກັບ 61 ກິໂລກຣາມ ປັດຈຸບັນໃຊ້ຢູ່ທຸກໆປະເທດໃນທະເລຈີນເປັນຫົວໜ່ວຍເງິນຕາແລກປ່ຽນ ພາສີດໍາທີ່ທາງວຽງຈັນເກັບນັ້ນ ມີລາຄາເທົ່າກັບ 730.000 ຝຣັ່ງ ຂອງພວກເຮົາ.

64. ນອກຈາກຄວາມຕໍ່ານິຂອງພະສົງລາວ ໃນຮູບແບບດັ່ງກ່າວຕໍ່ພະສົງກໍາພູຊາແລ້ວ ການບິນທະບາດຍັງເປັນຫລັກຫາອັນເຄັ່ງຄັດຂອງພະພຸດທະສາສະໜາດ້ວຍ. ຂໍ້ສັງເກດງ່າຍໆຂອງທ່ານວັນວຸດສະຕິບນັ້ນ ມີຄວາມຖືກຕ້ອງແມ່ນຢໍາທີ່ສຸດ. ສໍາຫລັບສິ່ງເຂດສຸວັນນະພູມປະເທດແລ້ວ ປະເທດລາວ ສົມຊື່ວ່າເປັນປະເທດສັກສິດ ເຊິ່ງປະເພນີເລົ່າສືບກັນມາວ່າ ພະພຸດທະເຈົ້າໄດ້ສະເດັດມາດິນແດນແຫ່ງນີ້ຫລາຍຄັ້ງຫລາຍຫົນ ເຊິ່ງໄດ້ປະຮອຍຕີນໄວ້ຫລາຍແຫ່ງ ແລະ ເຊິ່ງແຕ່ກ່ອນປະເທດລາວ ໄດ້ມີວັດ ແລະ ພະພຸດທະຮູບທີ່ສັກສິດຫລາຍກ່ວາເພິ່ນ. ໜຶ່ງໃນຈໍານວນພະພຸດທະຮູບ ສໍາຫລັບຊາວພຸດຍ່ານໃຕ້ ເຊິ່ງໄດ້ຮັບການສັກກາລະບູຊາທີ່ສຸດນັ້ນ ແມ່ນພະແກ້ວ. ພະແກ້ວນັ້ນສ້າງຂຶ້ນຈາກ ມໍລະກົດກ້ອນດຽວ ສະຖິດຢູ່ວັດໜຶ່ງຂອງນະຄອນວຽງຈັນ. ພາຍຫລັງນະຄອນນີ້ຖືກຍຶດ ປີ 1777 ໂດຍພະຍາຕາກຂອງໄທຍແລ້ວ ພະພຸດທະຮູບດັ່ງກ່າວນັ້ນ ໄດ້ຖືກຍຶດນໍາໄປໄວ້ທີ່ບາງກອກ ຈົນເທົ້າປັດຈຸບັນ.

65. ເມືອງຄຸກ.

66. ແມ່ນແກ້ງທາງທິງ ເຫນືອໂພນພິໄສ.

67. (ຊາວຕ່າງປະເທດຄົງບໍ່ສາມາດເຂົ້າໃຈ ປະເພນີຮັບແຂກຄົນຂອງຊາວບ້ານຕ່າງໆໃນລາວ ຈຶ່ງເຫັນເປັນເລື່ອງຫຍໍ້ທໍ້ ຫລືດ້ານລົບໄປເລີຍ- ຜູ້ແປ)

68. ຄົງຈະແມ່ນບ້ານໄຊ ເຊິ່ງຕັ້ງຢູ່ໃກ້ໆກັບບ້ານມຸກ (ມຸກດາຫານ)

69. ອາດຈະແມ່ນ ບໍລິເວນເຊບັ້ງຮີ ໃຕ້ບ້ານມຸກໄປ ປະມານ 10 ມິນລ໌

70. ຊາວກໍາພູຊາ ຕັດຜົມສັ້ນ.

71. ຄວາມຫລ້າຊ້າຂອງການເດີນທາງນັ້ນ ມາຈາກການຢຸດພັກເປັນເນື່ອງນິດ.

72. ຊເຣ ປາງໄພ ນັ້ນ ແມ່ນຄຳຜັງນຈາກຄຳອື່ນ ເປັນຕົ້ນແມ່ນຄຳປະສົມຈາກພາສາຂະເໝນ ເຊັ່ນມາຈາກຄຳວ່າ " ຊຣົກ " ແປວ່າບ້ານເມືອງ ຄືງຈະເປັນບ້ານຕັ້ງຢູ່ຝັ່ງຊ້າຍຂອງແມ່ນ້ຳຂອງ ລະຫວ່າງຈຳປາສັກ ແລະ ເມືອງໂຂງມັ່ງຊຸມພູເຂົາ ເຊິ່ງຮຽກວ່າ ພົງໄພ.

73. ພະນົມເປັນ ເຊິ່ງແປວ່າສີ່ແຂນ ປັດຈຸບັນ ເປັນສູນກາງການຄ້າ ແລະ ເປັນທີ່ຕັ້ງຣາຊະສຳນັກຂອງຂະເໝນໃນ ບໍ່ພໍ່ທໍ່ໃດປີມານີ້.

74. ເພັງນັ້ນ ອາດຈະແມ່ນຄຳໜຸ້ມາຈາກພະຍາ.

75. ບາງທີເມືອງປົວ ຕັ້ງຢູ່ທິດເໜືອຂອງວຽງຈັນ ແລະ ປັດຈຸບັນຂຶ້ນກັບຫລວງພະບາງ. (ເມືອງປົວອາດຈະແມ່ນເມືອງປົວທີ່ຊຳເໜືອ ເພາະວ່າຕັ້ງຢູ່ 10 ຄືນທາງຍ່າງຈາກວຽງຈັນ. ຫາກວັນໜຶ່ງຍ່າງໄດ້ 25 ຫລັກ ກໍ່ຈະໄດ້ 250 ຫລັກກິໂລແມັດ. ຜູ້ແປ).

76. ທີ່ນີ້ຢາກຫມາຍເຖິງການມາຮອດຂອງພະເຢຊູ ຊາວອິຕາລີ ຊື່ວ່າໄຢວານີມາເຣັງ ເລຣິອາ.ຄຸນພໍ່ເລຣິອາ ໄດ້ເດີນທາງຈາກຂະເໝນມາລາວໃນເດືອນເມສາ 1642 ດ້ວຍຂະບວນ ກວຽນພໍ່ຄ້າລາວທີ່ຈາກຂະເໝນມາ. ຄຸນພໍ່ໄດ້ພັກຢູ່ວຽງຈັນເພື່ອເຜີຍແຜ່ສາສະໜາເຢຊູ ແຕ່ບໍ່ສຳເລັດຍ້ອນພຸດທະສາສະໜາຝັງຮາກປັກຖານໜາແໜ້ນຫລາຍ ໃນທີ່ສຸດຄຸນພໍ່ຈຶ່ງຈຳຕ້ອງໄດ້ເດີນທາງອອກຈາກວຽງຈັນວັນທີ 2 ທັນວາ 1647 ມຸ່ງໜ້າໄປປະເທດຕັງກິງ (ຕົງແກງ). ຈາກນັ້ນ ມາກໍ່ບໍ່ມີເຢຊູຈັກຄົນ ເຂົ້າມາລາວອີກ.

77. ຂ້າພະເຈົ້າຄິດວ່າ ແມ່ນວັດ ທາດພະນົມ ຊື່ເດີມສ່ວນ ຊື່ເຮືອນຫີນນັ້ນແມ່ນຊື່ໃຫມ່ໆ. ການເພພັງຂອງທາດດັ່ງກ່າວ ແລະການຟື້ນຟູທາດຄືນນັ້ນ ມີຂຶ້ນຫລາຍເທື່ອດ້ວຍກັນ. ທາດດັ່ງກ່າວນັ້ນ ສ້າງຂຶ້ນເພື່ອບັນຈຸສາລີລິຂະທາດ ພະພຸດທະເຈົ້າ ເຊິ່ງຕາມຕຳນານຂອງລາວແລ້ວ ດູກຂອງພະພຸດທະເຈົ້າຈະຕ້ອງນຳເອົາໄປບັນຈຸໄວ້ໃນພະທາດພະນົມໃນແປດປີ ເຈັດເດືອນ ສິບສອງມື້ ພາຍຫລັງທີ່ພະເຈົ້າໄດ້ນິຣະພານຄືໃນປີ 535 ກ່ອນ ຄ.ສ. ຫາກຕຳນານຂອງສີລັງກາເປັນຄວາມຈິງແລ້ວ ເພິ່ນໄດ້ເວົ້າໄວ້ວ່າ ມີກະສັດ 5 ອົງ ໃນນັ້ນມີກະສັດຂະເໝນອົງໜຶ່ງ ແລະ ພະລືສີໜຶ່ງອົງ ໄດ້ເຕົ້າໂຮມປະຊາຣາຊະດອນຂອງພະອົງທັງຫລາຍເພື່ອສ້າງທາດລູກນີ້ຂຶ້ນ ເພື່ອແທນໃຫ້ຕົ້ນໄມ້ທີ່ເພິ່ນໄດ້ນຳເອົາດູກພະພຸດທະເຈົ້າມາຮັກສາໄວ້ຊົ່ວຄາວ. 5 ສະຕະວັດຕໍ່ມາຄື ປີ 1520 ທາດພະນົມໄດ້ຖືກຖິ້ມປະ

ລະໄລ ເກືອບຈະຖືກຫລົງລືມໄປຈາກມວນປະຊາຊົນ ຈົນເມື່ອອົງກະສັດຜູ້ປີຊາສາມາດຂອງລາວໄດ້ ຣາຊະທິດາຂອງກະສັດຂະເໝນ ເປັນເອກອັກຄະມະເຫສີ ຈຶ່ງໄດ້ຮັບການຟື້ນຟູ. ຈາກນັ້ນມາທາດພະນົມກໍ່ໄດ້ຖືກປຸ້ນປີ້ຍິຍ່ອງ ຈາກສົງຄາມຢ່າງບໍ່ແລ້ວບໍ່ທ່ອ. ມາເຖິງປີ 1714 ທາດພະນົມ ຈຶ່ງໄດ້ຮັບການບູຣະນະອີກ ແລະ ຈຶ່ງຍືນຍົງມາຮອດຈົນເທົ້າປັດຈຸບັນ

ອະທິບາຍສັບເພີ່ມ

1. ບີຢັງ (Bijang): ແມ່ນຊື່ເງິນຊະນິດໜຶ່ງ
2. ດູລັງ (Doulang): ແມ່ນພານນ້ຳກັ່ງງປະດັບລວດລາຍ
ດູລັງແມ່ນຊື່ເປັນພາສາມາເລ
3. ມາສ (Mas): ມາສ ໜຶ່ງເທົ່າກັບ 1/3 ຂອງໂດລາ ມາເລ
4. ອິນຊີ (Intche): ນາມະສັກອັນມາຈາກເຊື້ອເຈົ້າເປັນພາສາມາເລ.
5. ເອເພັຽ(Ephia): ອາດຈະມາຈາກເພັຽ ຫລື ພະຍາໃນພາສາລາວ
6. ໂມຣ໌ (Maure): ແມ່ນແຂກ ພໍ່ຄ້າ ແຂກ ຫລື ພວກກຸລາ (ກະລາ)
7. ນະປຣາ (Napra): ມາຈາກພາສາຂະເໝນແປວ່າ "ເຈົ້າ" ຖ້ານຜູ້ນ້ອຍ
8. ປະວາ (Pawa): ອາດຈະແມ່ນເມືອງ " ປົວ" ທີ່ຊາເໜືອ
9. ຣາເດັຽ(Radia): ມາຈາກບາລີ "ຣາຊາ" ແປວ່າ "ເຈົ້າ" "ກະສັດ"
10. ປວກຊົງ (Poursong): ມາຈາກຄຳສຳນຽງມອນ(ໂປຣຽຊົງ) ແປວ່າ"ພະສົງ"
11. ຕາເລັມປອຽ (Talempoy): ມາຈາກພາສາມອນ "ຕະລະ" ແປວ່າ ຊຸນ
"ເຈົ້ານ້ອຍ" ບວກກັບ "ປັນນະ" ພາສາບາລີແປວ່າ
"ຄວາມດີຄວາມຊອບ." ຕາເລັມປອຍຈຶ່ງແປວ່າ "ອາຈານ"
ທາງວັດ.
12. ເຕວິນຍາ (Tevinia): ອາດຈະມາຈາກເທບວິນຍາ "ຫລື ທ້າວພະຍາ"
ກໍອາດຈະເປັນໄດ້ ເຄົ້າສັພທ໌ ຍັງບໍ່ທັນແນ່ນອນ.
13. ສະແສນຮຳ (Saxenham) : ແມ່ນຊື່ຂອງດອນໜຶ່ງໃນສະໄໝນັ້ນ
ເຊິ່ງບໍ່ຮູ້ທີ່ມາຂອງສັພທ໌ລະອຽດ. ປັດຈຸບັນຊື່ນີ້ຫາຍໄປແລ້ວ.
ຄົງຈະແມ່ນດອນໂຂງປັດຈຸບັນ.



ນະຄອນ ບາຕາເວັຽ
(ປັດຈຸບັນເປັນ ຢາກາຕາ ນະຄອນຫຼວງຂອງອິນໂດເນເຊັຽ



ສຳເພົາເດີນແມ່ມະຫາສະມຸດ ຂອງຊາວໂຮນລັງ

A New and Accurate Map of the Empire of the Great Mogul, together with India on both sides the Ganges, and the adjacent Countries. Drawn from the most approved modern Maps and Charts: The whole being regulated by Astron. Observations, By Eman: Bowen.
PART OF TIBET
PART OF CHINA
Tropic of Cancer
BAY OF BENGAL
INDIAN OCEAN
K. OF BENGAL
Mouths of the Ganges
ASHEM OR ASEM
TIPRA
ARACCAN
K. OF AVA
PEGU
SIAM
LAOS
TONQUIN
CAMBODIA
CHAMPA
COCHINCHINA
GULF OF COQUINCHINA
HAYNAN I.
BAY OF SIAM
STRAITS OF MALACCA
SUMATRA
BORNEO
Andaman Islands
Nicobar
Shoal of Paracel
NB By a Treaty made 1739 the Mogul Yielded all his Country that lies to the West of the River Indus to Persia.
The Inland parts of Ceylon are but little known to Europeans. It produces the best Cinnamon. The Dutch have the entire Trade and possess all the principal Towns round the Coast. The Pearl Banks lie between the main and this Island and are from 5 to 7 Fathom under Water. Upwards of 60,000 people are employed yearly in the Pearl fishery.
85
90
95
100
105
110
115
10
15
20
25
30

ແຜນທີ່



Carte politique du royaume de Lan Xang
d'après D.U.M. TATE, *The making of South East Asia*, Kuala Lumpur : Oxford U.P., 1971; vol. 1, p. 489

——— limites du royaume de Lan Xang au XVIIe siècle, sous le règne du roi Suriyavongsa

- - - - - - - - - frontières politiques actuelles

ແຜນທີ່

ແກ້ງຫຼີ່ຜີ



ມຸມໜຶ່ງຂອງແມ່ນ້ຳຂອງ



ແກ້ງຫຼີ່ຜີ



ມຸມໜຶ່ງຂອງແມ່ນ້ຳຂອງ



ມຸມໜຶ່ງຂອງແມ່ນ້ຳຂອງ

Les chutes de Khôn
(MADROLLE, Guide Indochine du Sud, 192?. p. 176)



ແຜນທີ່ຫຼີຜີ



ທາດຫຼວງສະໃໝວຽງຈັນຮ້າງ ກ່ອນຈະຖືກທຳລາຍ ທ້າຍສະຕະວັດທີ່ 19

ຂະບວນແຫ່ອິງກະສັດ

ແຕ້ມໂດຍ: ເຈົ້າສິມສະນິດ



ເຮືອໂມະລິງແກັງຮ້າຍ



ບຸນພະເຫວດ ທີ່ເມືອງໜອງຄາຍສະໄໝເກົ່າ

ເຮືອນລາວບູຮານ

ງານຊ່ວງເຮືອ ສະໄໝ ເກົ່າທີ່ຈຳປາສັກ

ພາບວຽງຈັນຮ້າງ ຫຼັງການຮຸກຮານ ຂອງສະຫຍາມ

April 1642

Adij 5en do geavanceert als voren 3½ mijlen naer giffinge, betogen lucht, mette regen int kruijs/.

Adij 6en do voordage betogen lucht met veranderlijck weder, uijt een kuijpblijcke quaedt met regen, geavanceert 3 mijlen, des nachts onder het hooge Phanompingh/.

Adij 7en als voren geavanceert 3 mijlen/.

Adij 8en do geadvanceert 4 mijlen naer giffinge

Adij 9en do gevoordert 3½ mijlen als voren/.

Adij 10en do geavanceert 4 mijlen/.

Adij 11en do comen smiddachs aen Phanompingh geavanceert 1¾ mijlen als voren in de voorseijde arriveerde godt loff int Comptoir

Vervolgh vant gepasseerde int landt der Lauwen ofte Langhiangh t'sedert t vertreck vanden onderkoopman Sr. Geraert Wuijsthoff nae Cambodia bij d'assistenten Huijbert Boudewijnss. den Lockhorst ende Willem de Goijer gehouden, tot haer aencomen int Cambodia/. beginnende/.

December Ao 1641

Adij 22: 23: 24: 25en 26en do niets gepasseert aenmerckens waerdich

Adij 27en do sondach avont ontrent 7 uijren retourneerde den assistent Willem de Goijer met den Tolck Justus Lamangh rapport brengende, dat den Ondercoopman Gerrit Wuijsthoff den 25en do voorleden in Compie van den Cambodiaenschen ... Cambodia is vertrocken/.

Adij 31en do niets gepasseert/.

Den Maent Januarij: 1642:

Adij primo 2en 3en do verstaen altijt dat de mooren noch residerende aen Monkorck resolutie hebben genomen om den 10en of den 12en te vertrecken naer Siam/.

Adij 4en do is gecomen den dienaer vanden Ct. Pra: lockgeen outhilt ons tolck Justus Lamangh wat sijn begeeren is sal den tijt leeren/.

Adij 5en do den tolck Justus Lamangh onder bracht hoe den ... te seggen, ... niet aenmerckens waerdich was/

Adij 15en do niets voorgevallen aenmerckens waerdich/.

Adij 16en do becomen door de soon vanden Tevinia Taqueudoer vanden Coninck 10 mantjes met rijs & 2 mantjes met Branget/.

Adij 25en do 2 a 3 uijren naer de middach heeft sijn Mayt 2 man persoonen laten onthalen/.

Adij 26en do

Manuscrit original
Photo ex Recueil V.O.C. 1141 / 122 aux Archives Royales des Pays-Bas, La Haye

Correspond à la fin du texte de G. Van Wuysthoff (inscriptions d'avril 1642 : A420305...) et au début du texte des assistants (inscriptions de décembre 1641 : B421222...)

ລາຍມືເອກະສານບັນທຶກກ່ຽວກັບການມາຢ້ຽມຢາມລາວຂອງທ່ານ ວັນວຸສຕິຟ
ແລະ ຄະນະເຊິ່ງຮັກສາໄວ້ຢູ່ ທີ່ເອກະສານຣາຊະສຳນັກໂຮນລັງ.



Manuscrit original
Photo ex Recueil V.O.C. 1141 / 58 aux Archives Royales des Pays-Bas, La Haye

Correspond au début du texte C

ລາຍມືເອກະສານບັນທຶກກ່ຽວກັບການມາຢ້ຽມຢາມລາວຂອງທ່ານ ວັນວຸສຕົຟ
ແລະ ຄະນະເຊິ່ງຮັກສາໄວ້ຢູ່ ຫໍເອກະສານຣາຊະສໍານັກໂຮນລັງ.

VOYAGE LOINTAIN AUX ROYAUMES DE CAMBODGE ET LAOUWEN

PAR LES NÉERLANDAIS

ET CE QUI S'Y EST PASSÉ JUSQU' EN 1644

Tel est le titre de la petite brochure flammande (éditée par Pierre Casteleyn, Harlem, 1669), dans laquelle est raconté le voyage fait, en 1641, dans l'intérieur du Laos, par Gérard Van Wusthof, sous-marchand de la Compagnie des Indes hollandaises. Ce voyage, dont le but était exclusivement commercial, a été le premier et le plus important de tous ceux qui furent accomplis au XVIIe siècle dans l'intérieur de l'Indo-Chine. Malheureusement, l'absence complète de renseignements et de déterminations géographiques, la langue même dans laquelle ce voyage a été raconté, n'ont pas tardé à le faire tomber dans un profond oubli. La carte du Laos, publiée d'après les notes de Mouhot, ne plaçait même pas la ville de Vien Chan, terme du voyage de Wusthof, sur les bords du Mekong, quoique les Hollandais n'eussent jamais quitté le fleuve pendant le cours de leur pérégrination. On ne connaissait guère la relation originale de leur voyage que par les extraits qui en avaient été faits par Dubois, dans sa *Vie des gouverneurs généraux des Indes néerlandaises;* et le Laos du XVIIe siècle était surtout connu par les récits un peu postérieurs du Jésuite Jean-Marie Laria, récits que l'on trouve dans Marini et dans Martini.

La ville de Vien Chan a été complétement détruite par les Siamois en 1828, et le Laos tout entier réduit sous la domination de Siam.La commission française, précidée par M. le commandant de Lagrée, a visité, dans le cours du voyage d'exploration effectué en Indo-Chine en 1866-67-68, les ruines de cette ancienne métropole du Laos. Il m'a paru intéressant de rétablir dans son entier une relation qui devait me fournir des indications importantes sur l'histoire, l'étendue et la puissance du royaume disparu et sur la distribution politique de l'Indo-Chine, plus de deux siècles avant l'époque actuelle. Grâce à l'obligeant concours de M. Muller, j'ai pu me procurer, à Amsterdam, la publication originale que je n'avais pu trouver à Paris; et M.P. Voelkel a bien voulu en faire pour moi la traduction littérale.

Outre le voyage au Laos, la brochure flamande contient de

nombreux détails sur le séjour des Hollandais au Cambodge et sur leurs différents avec les indigènes et les Portugais. Je ne donne ici que la partie de la traduction qui a trait au voyage lui-même. Il est dit, dans ce qui précède, qu'au mois de mars 1641, des négociants du pays Louwen se rendirent à Batavia, sur l'un des navires de la Compagnie hollandaise, et suggérèrent au général Van Diémen, gouverneur des Indes néerlandaises, la pensée d'envoyer une ambassde avec une lettre et des présents au roi de Louwen, afin que l'on pût se rendre compte des ressources commerciales de cette contrée inconnue. Wusthof fut désigné comme le chef de cette ambassde, et dut avoir pour seconds Willem de Goyer et Huybert Boudewinsz van Lochorst. Un barbier et deux domestiques hollandais, et le Malais Intsie Lannangh Patanees, complétèrent le personnel de la mission. Wusthof emportait une cargaison de draps et de cotonnades de différentes valeurs, et une cassette d'émeraudes montées en bagues, le tout représentant une valeur de 6601 florins.

J'ai revu cette traduction avec soin en essayant de conserver au récit sa physionomie naïve, et je l'ai annotée de façon à la rendre facilement intelligible au lecteur le moins familier avec l'histoire et la géographie de l' Indo-Chine. La carte qui est jointe à ce numéro du Bulletin, reconstruit pour la première fois l'itinéraire de Wusthof, et permettra de le suivre dans sa navigation au milieu des rapides du Mekong

ຫ້າມຈຳໜ່າຍ

FRANCIS GARNIER.

VOYAGE INCONNU DES NÉERLANDAIS DU ROYAUME DU CAMBODGE AU PAYS DE LOUWEN

ANNOTÉ PAR FRANCIS GARNIER

I
VOYAGE D'ALLER.

